# ການຕິດຕາມກ່ຽວກັບຄໍາແນະນໍາ ດ້ານສິດທິມະນຸດແຫ່ງສະຫະປະຊາຊາດ.

ເອກະສານທີ່ເປັນພາສາລາວນີ້ແມ່ນໄດ້ແປມາຈາກເອກະສານຕົ້ນສະບັບທີ່ເປັນພາສາອັງກິດຂອງອົງການສະຫະປະຊາຊາດ. ການແປເອກະສານ ສະບັບພາສາລາວນີ້ແມ່ນບໍ່ໄດ້ເປັນທາງການ, ແຕ່ແປເພື່ອການນໍາໃຊ້ເຂົ້າໃນກິດຈະກໍາວຽກງານຂອງຄະນະກໍາມາທິການກົດໝາຍສາກົນເຊິ່ງໄດ້ຮັບທຶນຊ່ວຍເຫຼືອຈາກສໍານັກງານວ່າດ້ວຍສະຫະພັນເຄືອຈັກພົບ ແລະ ວຽກງານການຕ່າງປະເທດຂອງລາດຊະອານາຈັກອັງກິດ

**ສາລະບານ**


1. ວິທີການນຳໃຊ້ຄູ່ມືນີ້ ........ 1
2. ຄວນຈະຕິດຕາມອັນໃດແລະຍ້ອນຫຍັງມັນຈຶ່ງສຳຄັນ? ........ 3
3. ຄວນຕິດຕາມສິ່ງໃດ? ........ 5
4. ວິທີການຕິດຕາມແລະກິດຈະກຳຕ່າງໆ ........ 7
   4.1. ຂອກຫາກົນໄກທີ່ສາມາດມີສ່ວນຮ່ວມນຳ ........ 7
   4.2. ການມີສ່ວນຮ່ວມກັບກົນໄກສິດທິມະນຸດໃນທຸກດ້ານເພື່ອສ້າງປະໂຫຍດໃຫ້ໄດ້ຫຼາຍທີ່ສຸດ........8
   4.3. ການສ້າງຄຳແນະນຳກ່ຽວກັບສິດທິມະນຸດຈາກສິ່ງທີ່ພົບເຫັນ ........ 9
   4.4. ການວາງບູລິມະສິດແລະວາງແຜນ ........ 10
   4.5. ການຕິດຕາມກວດກາການຈັກຕັ້ງປະຕິບັດ ........ 15
   4.6. ການຢາດແຍ່ງເອົາໂອກາດ ........ 17
   4.7. ການສ້າງແລະການເຮັດວຽກຮ່ວມກັບສະຫະພັນ ........ 18
   4.8. ການຮ່ວມງານ ........ 20
   4.9. ການເຜີຍແຜ່ແລະປູກຈິດສຳນຶກ ........ 23
   4.10. ການປຸກລະດົມ ........ 26
   4.11. ການກໍ່ສ້າງຄວາມອາດສາມາດແລະສ້າງຄວາມເຂັ້ມແຂງ ........ 28
   4.12. ການເຊື່ອມໂຍງດ້ານບົດບາດຍິງຊາຍເຂົ້າໃນກິດຈະກຳທີ່ຕິດຕາມ ........ 29
   4.13. ການສະທ້ອນໃຫ້ເຫັນພາບລວມ, ຄວາມຫຼາກຫຼາຍແລະການເຂົ້າເຖິງ ........ 30
   4.14. ການນຳໃຊ້ຄຳແນະນຳໃນວຽກງານທາງຕຸລາການແລະການດຳເນີນຄະດີ ........ 30
   4.15. ການແລກປ່ຽນຜົນທີ່ໄດ້ຮັບຈາກການຕິດຕາມແລະການປະຕິບັດທີ່ດີ............31
   4.16. ການມີສ່ວນຮ່ວມນຳການຕິດຕາມຂະບວນການຈັດຕັ້ງປະຕະບັດກົນໄກສິດທິມະນຸດ 32
5. ການຕິດຕາມຂະບວນການຈັດຕັ້ງປະຕິບັດກົນໄກສິດທິມະນຸດ……………...……….31
   5.1. ອົງກອນສິດທິມະນຸດ ........ 33
   5.2. ສະພາສິດທິມະນຸດ ........ 38
   5.3. ຂະບວນການພິເສດ ........ 40
   5.4. ກົນໄກການທົບທວນ ........ 48
   5.5. ວິທີການເຂົ້າຫາແບບປະສົມປະສານ ........ 50
   5.6. ການຕອບໂຕ້ ........ 50
6. ການຮຽນຮູ້ເພີ່ມ ........ 52
7. ທີ່ຢູ່ຕິດຕໍ່ຫາ ........ 54

## 1. ວິທີນຳໃຊ້ຄູ່ມືນີ້

ຄູ່ມືນີ້ແມ່ນສ້າງຂື້ນໂດຍສຳນັກງານຂ້າຫຼວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ (OHCHR), ຈຸດປະສົງຫຼັກກໍ່ແມ່ນເພື່ອໃຫ້ພາກປະຊາສັງຄົມສາມາດຕິດຕາມກ່ຽວກັບຄຳແນະນຳຂອງກົນໄກສິດທິມະນຸດ, ພາລະໜ້າທີ່ ຫຼື ອົງກອນແຫ່ງສະຫະປະຊາຊາດ (UN).

ຜູ້ທີ່ສົນໃຈສຶກສາຍັງບໍ່ທັນຄຸ້ນເຄີຍກັບກົນໄກທີ່ວ່ານີ້ແມ່ນຄວນສຶກສາເບິ່ງຄູ່ມືຂອງ OHCHR ສຳລັບພາກປະຊາສັງຄົມ - ການເຮັດວຽກຮ່ວມກັບໂຄງການສິດທິມະນຸດແຫ່ງສະຫະປະຊາຊາດແລະຄູ່ມືຝຶກຫັດສຳລັບພາກປະຊາສັງຄົມ.[1] ພາກທີ 1 – 3 ຂອງຄູ່ມືນີ້ໄດ້ອະທິບາຍ 'ການຕິດຕາມ' ແລະ 'ການຈັດຕັ້ງປະຕິບັດ', ໃນຄະນະທີ່ພາກທີ 4 ໄດ້ອະທິບາຍວິທີການ ແລະ ກິດຈະກຳຕ່າງໆທີ່ສະມາຄົມພາກປະຊາສັງຄົມ (CSAs) ສາມາດເອົາໄປນຳໃຊ້. ພາກທີ 5 ແມ່ນໄດ້ທົບທວນຂະບວນການຕິດຕາມທີ່ມີຢູ່ ແລະ ການຈັດຕັ້ງປະຕິບັດກົນໄກສິດທິມະນຸດຂອງ ສປຊ ແລະ ວິທີການທີ່ສະມາຄົມ CSAs ສາມາດນຳໄປມີສ່ວນຮ່ວມ.



[1] Available at www.ohchr.org/EN/AboutUs/Pages/CivilSociety.aspx

ໃນຄູ່ມືນີ້ຍັງມີເຄື່ອງມືທີ່ສາມາດອຳນວຍຄວາມສະດວກໃຫ້ແກ່ກິດຈະກຳການຕິດຕາມຂອງພາກປະຊາສັງຄົມ. ເຄື່ອງມືທີ່ວ່າເຫຼົ່ານີ້ແມ່ນຢູ່ໃນພາກທີ 6.

ຈາກການທົບທວນເບິ່ງວິທີການຕິດຕາມກິດຈະການຕ່າງໆທີ່ໄດ້ສ້າງຂື້ນໂດຍສະມາຄົມພາກປະຊາສັງຄົມ CSAs[2] ແລະ OHCHR ຈາກພາກສະໜາມທີ່ມີປະສົບການຕົວຈິງ, ແລະ ໃຫ້ການປະກອບສ່ວນຢ່າງຈິງໃຈ, ຄູ່ມືຍັງມີລາຍການຂອງທາງເລືອກທີ່ CSAs ສາມາດເລືອກເອົາຕາມພື້ນຖານຂອງບູລິມະສິດ ແລະ ຄວາມສາມາດຂອງຕົນທີ່ມີ. ຄູ່ມືສະບັບນີ້ແມ່ນມີຈຸດປະສົງຕົ້ນຕໍສ້າງຂື້ນມາເພື່ອອີງການພາກປະຊາສັງຄົມ CSCS ຈະໄດ້ນຳໃຊ້ໃນລະດັບປະເທດໂດຍສະເພາະ. ຄື່ມືນີ້ແມ່ນໄດ້ຖືກພິມອອກເປັນທັງພາສາອາຣັບ, ຈີນ, ອັງກິດ, ຝຣັ່ງ, ລັດເຊຍ ແລະ ສະເປນ.



[2] ບົດສະຫລຸບຂອງກໍລະນີການສຶກສາທີ່ບໍ່ໄດ້ໄປຕາມກົນໄກຂອງ OHCHR

## 2. ການຕິດຕາມແມ່ນຫຍັງ ແລະ ມັນສຳຄັນແນວໃດ?

ກິດຈະກຳການຕິດຕາມແມ່ນມີເປົ້າໝາຍທີ່ຈະຮັບປະກັນວ່າຂໍ້ສະເໜີແນະແລະມະຕິຂອງອົງກອນ ແລະ ກົນໄກສິດທິມະນຸດນັ້ນໄດ້ຮັບການຈັດຕັ້ງປະຕິບັດໄປແນວໃດໃນການສົ່ງເສີມການເຄົາລົບ, ປົກປ້ອງ ແລະ ນຳຄວາມສຳເລັດດ້ານສິດທະມະນຸດມາສູ່ທຸກຄົນ.

ອົງກອນ ແລະ ກົນໄກສິດທິມະນຸດແຫ່ງຫະປະຊາຊາດພະຍາຍາມທີ່ຈະສົ່ງເສີມການປູກຈິດສຳນຶກດ້ານສິດທິມະນຸດໃຫ້ແກ່ທຸກປະເທດໃນໂລກ. ມະຕິທີ່ໄດ້ຮັບການຮັບຮອງຈາກສະພາສິດທິມະນຸດ, ຜົນທີ່ໄດ້ຈາກການສອບຖາມຂອງຄະນະກຳມາທິການ, ບັນດາຄຳນະນຳຂອງອົງກອນສິດທິມະນຸດ, ຂະບວນການພິເສດ ແລະ ກົນໄກການທົບທວນ, ແລະ ມະຕິຂອງອົງກອນສິດທິມະນຸດກ່ຽວກັບຄະດີສ່ວນບຸກຄົນທັງໝົດທີ່ມີເປົ້າໝາຍໃນການຊ່ວຍເຫຼືອແມ່ນໄດ້ແນະນຳໃຫ້ລັດຖະບານແລະພາກສ່ວນ ຕ່າງໆຈົ່ງພ້ອມກັນສົ່ງເສີມການປູກຈິດສຳນຶກຢ່າງເຕັມທີ່ກ່ຽວກັບສິດທິມະນຸດ. ບັນດາສິ່ງພົບເຫັນ, ຄຳແນະນຳ ແລະ ການຕົກລົງທີ່ຈະຊ່ວຍສ້າງການປ່ຽນແປງເພື່ອຊີວິດທີ່ດີຂຶ້ນແກ່ຜູ້ທີ່ຖືກລະເມີດສິດ. ພັນທະພື້ນຖານທີ່ຈະປ່ຽນແປງສິ່ງທີ່ວ່ານັ້ນແມ່ນຂຶ້ນຢູ່ກັບລັດຖະບານຕ່າງໆທີ່ຈະຕ້ອງໃສ່ໃຈໃນການເຄົາລົບ, ປົກປ້ອງ ແລະ ສ້າງຄວາມສຳເລັດໃຫ້ແກ່ສິດທິມະນຸດ. ເຖິງຢ່າງໃດກໍ່ດີ ທຸກພາກສ່ວນຕ່າງໆໃນສັງຄົມ, ຈາກສ່ວນບຸກຄົນຈົນເຖິງພາກເອກະຊົນ, ສະມາຄົມລະຫວ່າງປະເທດ ແລະ ພາກປະຊາສັງຄົມ ແມ່ນມີບົດບາດໃນການປູກຈິດສຳນຶກດ້ານສິດທິມະນຸດ. ພາກປະຊາສັງຄົມແມ່ນສາມາດສະແດງບົດບາດທີ່ສຳຄັນໃນການຕິດຕາມກ່ຽວກັບຄຳແນະນຳດ້ານສິດທິມະນຸດໂດຍສະເພາະ.

## ບັນດາຂັ້ນຕອນລວມສຳລັບການຕິດຕາມ



## 3. ຕິດຕາມກ່ຽວກັບຫຍັງ?

ບົດສະຫຼຸບແລະຂໍ້ສະເຫນີແນະຂອງອົງກອນແລະກົນໄກສິດທິມະນຸດຂອງສະຫະປະຊາຊາດແມ່ນມີຈຳນວນຫລາຍ. ພາກປະຊາສັງຄົມແມ່ນໃຫ້ການຕິດຕາມບົດສະຫຼຸບແລະຂໍ້ສະເຫນີແນະທີ່ມັນກ່ຽວຂ້ອງກັບເປົ້າໝາຍແລະຂອບເຂດການດຳເນີນງານຂອງຕົນ. ສິ່ງທີ່ກ່ຽວຂ້ອງແມ່ນ:

- ຂໍ້ສະເຫນີແນະໄດ້ຖືກຮັບຮອງໂດຍອົງກອນສິດທິມະນຸດທີ່ກ່ຽວກັບຜົນການທົບທວນທີ່ໄດ້ຈາກການກວດກາເບິ່ງການຈັດຕັ້ງປະຕິບັດສົນທິສັນຍາສິດທິມະນຸດຂອງລັດພາຄີ;
- ຂໍ້ສະເຫນີແນະຂອງຂະບວນການພິເສດຂອງສະພາສິດທິມະນຸດທີ່ມີຢູ່ໃນບົດລາຍງານກ່ຽວກັບການລົງຢ້ຽມຢາມປະເທດ, ບົດລາຍງານທີ່ສຳຄັນ ແລະ ການລາຍງານສື່ສານກ່ຽວກັບ ຄະດີສ່ວນບຸກຄົນ;
- ຄຳແນະນຳທີ່ໄດ້ຈາກຂະບວນການທົບທວນສິດທິມະນຸດ (UPR);
- ມະຕິ ແລະ ການຕົກລົງຂອງສະພາສິດທິມະນຸດແລະສະມັດຊາໃຫຍ່;
- ວຽກງານຂອງອົງກອນຍ່ອຍຂອງສະພາສິດທິມະນຸດ, ເຊັ່ນ: ຄະນະກຳມາທິການທີ່ປຶກສາ, ຂະບວນການຮ້ອງທຸກ, ກົນໄກຊ່ຽວຊານກ່ຽວກັບສິດທິຂອງຊົນເຜົ່າພື້ນເມືອງ, ກອງປະຊຸມກ່ຽວກັບບັນຫາຊົນເຜົ່າ, ກອງປະຊຸມທາງສັງຄົມ, ແລະ ກອງປະຊຸມກ່ຽວກັບສິດທິມະນຸດກັບການເຮັດທຸລະກິດ ;
- ຂໍ້ສະເຫນີແນະຂອງຄະນະກຳມາທິການສອບຖາມ, ໜ່ວຍງານຄົ້ນຫາຄວາມເປັນຈິງ, ແລະ ກົນໄກການສືບສວນສິດທິມະນຸດສະເພາະກິດທີ່ຖືກສ້າງຕັ້ງຂຶ້ນໂດຍສະພາສິດທິມະນຸດ, ຂ້າຫລວງໃຫຍ່ ຫຼື ເລຂາທິການໃຫຍ່;
- ຂໍ້ສະເຫນີແນະທີ່ມີຢູ່ໃນບົດລາຍງານແລະຜົນການສຶກສາຂອງຂ້າຫລວງໃຫຍ່ (ເຊັ່ນວ່າ ບົດລາຍງານກ່ຽວກັບກິດຈະກຳຈາກພາກສະຫນາມ; ບົດລາຍງານແລະຜົນການສຶກສາກ່ຽວກັບສະພາບການຂອງປະເທດໃດໜຶ່ງແລະສະຖານະການທີ່ໜ້າຈັບຕາທີ່ໄດ້ຮັບການມອບໝາຍຈາກ ສະພາສິດທິມະນຸດ);
- ຄຳຮຽກຮ້ອງຕໍ່ລັດຫຼືຕໍ່ສະມາຄົມລະຫວ່າງປະເທດຂອງຂ້າຫລວງໃຫຍ່ ຫຼື ຊ່ຽວຊານສິດທິມະນຸດອິດສະຫລະທີ່ມີໃນຖະແຫລງການທົ່ວໄປ.
- ບັນຊີລາຍການຂອງຄຳແນະນຳສຳລັບພາກປະຊາສັງຄົມ ແລະ ພາກລັດທີ່ຄວນຈະດຳເນີນການຕິດຕາມທີ່ກ່າວມານີ້ແມ່ນຍັງບໍ່ທັນຄົບຖ້ວນສົມບູນເທື່ອ. ອີງຕາມກົນໄກຂອງ ສປຊ, ກົນໄກສິດທິມະນຸດໃນພາກພື້ນ ແລະ ສາກົນຍັງໄດ້ອອກບົດລາຍງານ ແລະ ຂໍ້ສະເໜີແນະທີ່ເນັ້ນການສົ່ງເສີມການປູກຈິດສຳນຶກກ່ຽວກັບສິດທິມະນຸດ.

ອີງຕາມສິ່ງທີ່ຢາກຈະລົງເລິກ, ມັນມີຄວາມສຳຄັນທີ່ຈະຫຼີກເວັ້ນການຕິດຕາມບັນຫາທີ່ມີລັກສະນະທີ່ເປັນ ຊ່ອງຫວ່າງ ຫຼື ກະແຈກກະຈາຍ. ໃນຂະນະທີ່ກົນໄກສິດທິມະນຸດທີ່ມີຄວາມແຕກຕ່າງກັນມັນກໍ່ມີຂະບວນຕິດຕາມ ແລະ ການປະຕິບັດທີ່ແຕກຕ່າງກັນເຊິ່ງໄດ້ອະທິບາຍຢູ່ໃນພາກທີ 5 ຂອງຄູ່ມືນີ້, ໜຶ່ງໃນບັນດາປະ ໂຫຍດທີ່ສຳຄັນທີ່ທາງພາກປະຊາສັງຄົມສາມາດເອົາໄປນຳໃຊ້ກໍ່ຄືການຮັບຮອງເອົາຍຸດທະວິທີການຕິດຕາມແບບສະເພາະ.

ຍຸດທະວິທີສະເພາະແມ່ນວິທີການນຳໃຊ້ປະໂຫຍດຈາກກົນໄກສິດທິມະນຸດທີ່ຫລາກຫລາຍ, ແທນທີ່ຈະສຸມໃສ່ກັບຂໍ້ສະເໜີແນະອັນໃດອັນໜຶ່ງພຽງຢ່າງດຽວ. ຍຸດທະວິທີທີ່ວ່ານັ້ນແມ່ນກ່ຽວຂ້ອງກັບບັນດາກົນໄກສິດທິມະນຸດໃນທຸກຂັ້ນຕອນຂອງການດຳເນີນງານ. ກົນໄກສິດທິມະນຸດແມ່ນດຳເນີນງານແບບນຮອບວຽນເຊິ່ງມັນເປັນການ ງ່າຍທີ່ຈະຕິດຕາມ: ການເກັບກຳຂໍ້ມູນຂ່າວສານ, ການລາຍງານ, ການສົນທະນາກັບລັດທີ່ກ່ຽວຂ້ອງ, ແລະ ການຕິດຕາມຂໍ້ສະເໜີແນະຕ່າງໆ.

ວຽກງານຂອງພາກປະຊາສັງຄົມກ່ຽວກັບການຕິດຕາມທີ່ອາດຈະມີປະສິດທິພາບຂຶ້ນຖ້າຫາກວ່າໄດ້ ເຂົ້າຮ່ວມໃນວຽກງານຂອງກົນໄກສິດທິມະນຸດຢ່າງເຕັມທີ່. ໃນຄະນະທີ່ມີການຮ່ວມງານຢ່າງສະໝ່ຳສະເໝີ ຕະຫຼອດໄລຍະການດຳເນີນງານຂອງກົນໄກສິດທິມະນຸດນັ້ນ ແມ່ນມັນມີຄວາມເປັນໄປໄດ້ສູງທີ່ຈະໄດ້ຮັບ ປະສິດທິຜົນຫລາຍຂື້ນ, ອີງການພາກປະຊາສັງຄົມສາມາດໄດ້ປະໂຫຍດຈາກຜົນງານ ແລະ ຂໍ້ສະເໜີແນະຂອງກົນໄກສິດທິມະນຸດເຖິງວ່າຈະບໍ່ມີສ່ວນຮ່ວມໃນໄລຍະທີ່ຜ່ານມາກໍ່ຕາມ.

## ວົງຈອນຂອງກົນໄກສິດທິມະນຸດ



## 4. ກິດຈະກໍາແລະວິທີຕິດຕາມ

ໃນພາກນີ້ແມ່ນໄດ້ສ້າງສາລະບານຂອງບາງວິທີການແລະກິດຈະກໍາສໍາລັບພາກປະຊາສັງຄົມເພື່ອການຕິດຕາມ, ພ້ອມນັ້ນຍັງມີບາງຕົວຢ່າງຂອງການປະຕິບັດທີ່ຜ່ານມາ.

### 4.1. ການກໍານົດກົນໄກທີ່ຈະເຂົ້າຮ່ວມ

ການປູກຈິດສໍານຶກດ້ານສິດທິມະນຸດໃຫ້ແກ່ທຸກຄົນແມ່ນເປັນເປົ້າໝາຍທີ່ສໍາຄັນຂອງອົງກອນສິດທິມະນຸດແຫ່ງ ສປຊ ທັງໝົດ. ໃນຫລາຍໆປະເທດທີ່ມີຄວາມສໍາເລັດນັ້ນມັນແມ່ນມາຈາກຫລາຍປັດໃຈ, ນັບຕັ້ງແຕ່ການປະຕິບັດທາງການເມືອງຂອງຜູ້ກໍາອໍານາດຈົນເຖິງຜູ້ທີ່ນໍາໃຊ້ກົດໝາຍ, ການດໍາເນີນງານຂອງພາກປະຊາສັງຄົມ, ມະຕິຕົກລົງ ແລະ ລະດັບຄວາມມີເອກະລາດຂອງສານປະຊາຊົນ, ອິດທິພົນຂອງອົງການຈັດຕັ້ງໃນລະດັບພາກພື້ນ, ການປ່ຽນແປງໃນລັດຖະບານ, ແລະ ອື່ນໆ. OHCHR ແລະ ກົນໄກສິດທິມະນຸດ ສປຊ ແມ່ນມີບົດບາດສໍາຄັນໃນການປູທາງໄປສູ່ການປະຕິບັດທີ່ແທ້ຈິງ.




ກົນໄກໃດທີ່ມີປະສິດທິພາບກ່າວໝູ່? ການລົງຢ້ຽມຢາມຂອງຂະບວນການພິເສດ? ຂໍ້ສະເໜີແນະທີ່ໄດ້ຮັບການແກ້ໄຂໂດຍລັດທີ່ຢູ່ໃນຂະບວນການທົບທວນ (UPR) ແລະ ຂະບວນການທາງການເມືອງທີ່ກ່ຽວ ຂ້ອງ? ຫຼື ແມ່ນການພິຈາລະນາຄໍາຮ້ອງທຸກຂອງອົງກອນສິດທິມະນຸດ? ຫຼືວ່າ ຍ້ອນທຸກຢ່າງທີ່ກ່າວມານີ້, ຫຼືຍັງມີຢ່າງອື່ນອີກຢູ່? ຄຸນຄ່າທີ່ໄດ້ມີຫຍັງທີ່

ກົນໄກສິດທິມະນຸດສາມາດນຳວຽກງານມາໃຫ້ແກ່ພາກປະຊາສັງຄົມແບບໃດທີ່ກ່ຽວກັບບັນຫາສິດທິມະນຸດສະເພາະທີ່ສຳຄັນໃດໜຶ່ງ/ຫຼື ໃຫ້ໃນປະເທດ, ໃຫ້ພາກພື້ນ ຫຼື ມາໃຫ້ເຂດປົກຄອງໃດໜຶ່ງ?

ວິທີການມີສ່ວນຮ່ວມກັບກົນໄກສິດທິມະນຸດໃດທີ່ຈະເໝາະສົມກັບບູລິມະສິດ, ແຜນງານ ແລະ ຄວາມອາດສາມາດຂອງພາກປະຊາສັງຄົມ?

ການດຳເນີນການວິເຄາະກົນໄກອັນໃດທີ່ສາມາດໃຊ້ໄດ້ ແລະ ຜົນງານວິໃຈທີ່ມີຂໍ້ສະເໜີແນະຕ່າງໆແມ່ນເປັນພື້ນຖານຂອງບາດກ້າວທີ່ຈະ: 1) ໃຫ້ການຕັດສິນໃຈກ່ຽວກັບການໃຫ້ມີສ່ວນຮ່ວມຂອງພາກປະຊາສັງຄົມໃນກົນໄກດັ່ງກ່າວ /; 2) ດຳເນີນການສ້າງການມີສ່ວນຮ່ວມດັ່ງກ່າວ; ແລະ 3) ເຊື່ອມໂຍງການມີສ່ວນຮ່ວມດັ່ງກ່າວໃສ່ໃນແຜນຍຸດທະສາດ ແລະ ແຜນງານຂອງພາກປະຊາສັງຄົມ.

## 4.2. ການມີສ່ວນຮ່ວມກັບກົນໄກສິດທິມະນຸດໃນທຸກຂົງເຂດວຽກງານເພື່ອສ້າງປະໂຫຍດໃຫ້ໄດ້ຫລາຍທີ່ສຸດ

ຕາມປະສົບການແມ່ນມັນໄດ້ສະແດງໃຫ້ເຫັນວ່າການມີສ່ວນຮ່ວມຂອງພາກປະຊາສັງຄົມໃນກົນໄກສິດທິມະນຸດນັ້ນແມ່ນມັນໄດ້ສ້າງປະໂຫຍດຫຼຫາຍຢ່າງໂດຍສະເພາະໃນເວລາທີ່ເຂົ້າຮ່ວມກັບທຸກໂຄງການຂອງກົນໄກສິດທິມະນຸດ. ຕົວຢ່າງ: ໃນເວລາທີ່ສົ່ງຂໍ້ມູນກ່ຽວກັບລັດທີ່ກຳລັງຖືກກວດກາໃຫ້ແກ່ຂະບວນການທົບທວນ, ພາກປະຊາສັງຄົມແມ່ນສາມາດເລືອກ ເອົາບັນຫາທີ່ເຫັນວ່າມັນໜ້າເປັນຫ່ວງທີ່ສຸດ, ບໍ່ວ່າຈະເປັນການລົງໂທດທາງຮ່າງກາຍໃສ່ເດັກນ້ອຍຫຼືການຈຳແນກຕໍ່ຊົນເຜົ່າສ່ວນນ້ອຍ. ພາກປະຊາສັງຄົມອາດຈະດຳເນີນການປຶກສາຫາລືກັບລັດຖະບານຂອງຕົນກ່ອນ ແລະ ຕໍ່ມາກໍ່ຄ່ອຍດຳເນີນການປຶກສາກັບຄະນະຜູ້ແທນຂອງລັດພາຄີຜູ້ທີ່ຈະເຂົ້າຮ່ວມໃນການສົນທະນາແບບເປີດກວ້າງໃນຂະ ບວນການທົບທວນ, ແລະ ກະຕຸ້ນໃຫ້ມີການອອກຂໍ້ສະເໜີແນະກ່ຽວກັບບັນຫາດັ່ງກ່າວ. ບົດສະຫຼຸບຂອງຂະບວນການທົບ ທວນແມ່ນຈະຮວບລວມບັນດາຂໍ້ສະເໜີແນະຕ່າງໆ ທີ່ອາດຈະຖືກນຳໄປຈັດຕັ້ງປະຕິບັດໃນລະດັບປະເທດເພື່ອສ້າງຄວາມ ເຂັ້ມແຂງໃຫ້ແກ່ການສະນັບສະໜູນ ຫຼື ເຂົ້າໃນກິດຈະກຳຂອງພາກປະຊາສັງຄົມ.

ມີຫລາຍໆຂະບວນການທີ່ຄ້າຍຄືກັນນີ້ແມ່ນໄດ້ຖືກເຂົ້າມາປ່ຽນແທນດ້ວຍກົນໄກອັນອື່ນ. ໃນໄກສິດທິມະນຸດແມ່ນມີເອກະສານທີ່ພຽບພ້ອມ ແລະ ມີຄວາມໜ້າເຊື່ອຖືກ່ຽວກັບບັນຫາທີ່ໜ້າເປັນຫ່ວງທີ່ພາກປະຊາສັງຄົມໄດ້ດຳເນີນການຄົ້ນຫາບັນດາຄຳແນະນຳທີ່ກ່ຽວຂ້ອງ ແລະ ເຈາະຈົງ. ຂໍ້ສະເໜີແນະທີ່ດີຂອງອົງກອນສິດທິມະນຸດແມ່ນມີຄວາມສຳຄັນໃນການສະໜັບສະໜູນວຽກງານຂອງພາກປະຊາສັງຄົມໃນລະດັບຊາດ, ມີຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດ, ແລະ ຊ່ວຍແກ້ໄຂບັນຫາຊ່ອງຫວ່າງຂອງການປົກປ້ອງສິດທິມະນຸດ.

### 4.3. ການສ້າງຄຳແນະນຳກ່ຽວກັບສິດທິມະນຸດຈາກບົດສະຫລຸບ

ຂໍ້ສະເໜີແນະຈາກບົດສະຫຼຸບຂອງກົນໄກສິດທິມະນຸດ, ທັງສຳຄັນ ແລະ ມີຄວາມໝາຍລະດັບປະເທດຢ່າງຫລວງຫລາຍ. ການລວບລວມ ແລະ ເຕົ້າໂຮມສິ່ງທີ່ກ່າວມານີ້ໂດຍອີງໃສ່ພື້ນຖານຄວາມ ສຳຄັນ ຫຼື ອີງຕາມພາກພື້ນທາງພູມສາດທີ່ໜ້າສົນໃຈແມ່ນສາມາດເປັນການກະກຽມທາງຍຸດທະ ສາດທີ່ປັນປະໂຫຍດສຳລັບການຕິດການຈັດຕັ້ງປະຕິບັດ. ການສ້າງຄຳແນະນຳຈາກບົດສະຫຼຸບແມ່ນສາມາດ:

- ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຂໍ້ສະເໜີແນະ;
- ຊ່ວຍປູກຈິດສຳນຶກ ແລະ ຊ່ວຍເຜີຍແຜ່ຂໍ້ມູນຂ່າວສານ;
- ຊ່ວຍໃນການສ້າງຂະບວນທົບທວນບັນດາຂໍ້ສະເໜີແນະທີ່ມີຢູ່ຢ່າງຮອບດ້ານ ແລະ ຊ່ວຍສ້າງພື້ນຖານສຳລັບຍຸດທະສາດທີ່ສຳຄັນໃນຂະບວນການຕິດຕາມ;
- ອຳນວຍຄວາມສະດວກໃນການວາງບູລິມະສິດເພື່ອຈັດຕັ້ງປະຕິບັດ ແລະ ການຕິດຕາມ;
- ເພື່ອເປັນພື້ນຖານໃນການພັດທະນາແຜນການກວດກາ.

**ເຄື່ອງມືຕໍ່ໄປນີແມ່ນສາມາດຊ່ວຍໃນຂະບວນການ:**

**ດັດສະນີສິດທິມະນຸດສາກົນ**

ດັດສະນີສິດທິມະນຸດສາກົນແມ່ນ[3] ຖານຂໍ້ມູນອອນໄລນທີ່ລວບລວມບັດດາຄຳແນະນຳຈາກອົງກອນສິດທິມະນຸດ, ຂະບວນການພິເສດ ແລະ ກົນໄກທົບທວນ UPR. ດັດສະນີເຮັດໃຫ້ຜູ້ນຳໃຊ້ສາມາດເຂົ້າຫາ ແລະ ຄົ້ນຫາກ່ຽວກັບ ອົງກອນສິດທິມະນຸດ, ຂະບວນການພິເສດ ແລະ ຄຳແນະນຳຂອງ UPR ທີ່ມີຂໍ້ມູນຫລາກຫລາຍຄື: ກ່ຽວກັບລັດ, ສິດທິ, ອົງກອນ, ບຸກຄົນທີ່ໄດ້ຮັບຜົນກະທົບ, ກຳນົດເວລາຂອງລັດທີ່ຈະຖືກກວດກາຈາກ UPR, ປະເທດທີ່ໃຫ້ຂໍ້ສະເໜີແນະ, ແລະ ກອງປະຊຸມຕ່າງໆ. ການຄົ້ນຫາໃນຖານຂໍ້ມູນແມ່ນໃຊ້ເວລາກົດເຂົ້າພຽງສອງສາມຄັ້ງກໍ່ສາ ມາດເຂົ້າຫາຂໍ້ມູນການປະເມີນຂອງກົນໄກ ແລະ ຂອງອົງກອນສິດທິມະນຸດທີ່ກ່ຽວກັບສະຖານະພາບຂອງການ ຈັດຕັ້ງປະຕິບັດສິດທິມະນຸດໃນທຸກສະພາບການ. ການນຳໃຊ້ວິທີການຄົ້ນຫາດັ່ງກ່າວແມ່ນສາມາດໄດ້ຂໍ້ມູນທີ່ຫລາ ຍ ຢ່າງຂອງ ສປຊ ທີ່ກ່ຽວກັບສິກທິມະນຸດທີ່ແທ້ແທ້ຈິງ ແລະ ສະດວກ.

**ການຈັດກຸ່ມບັນດາຄຳແນະນຳໃນເອເຊຍກາງ**

ໃນປະເທດເກີກິດສະຖານ, ສຳນັກງານພາກພື້ນຂອງ OHCHR ເພື່ອເອເຊຍກາງໄດ້ໃຫ້ການສະນັບສະໜູນສະຖາ ບັນການສຶກສາໃນການລວບລວມຈັດກຸ່ມບັນດາຄຳແນະນຳຂອງກົນໄກສິດທິມະນຸດຂອງ ສປຊ ດ້ວຍການຈັດແຍກອອກເປັນ: ຄຳແນະນຳທີ່ມາຈາກອົງກອນສິດທິມະນຸດ, ຂະບວນການພິເສດ ແລະ ຈາກ UPR. ການຈັດນີ້ແມ່ນຈະເປັນພື້ນຖານໃນການວາງແຜນການເຮັດວຽກກ່ຽວກັບການຈັດຕັ້ງປະຕິບັດຕາມບັນດາຄຳແນະນຳຕ່າງໆ.[4]

3 http://uhri.ohchr.org/

4. ຂໍ້ມູນສາມາດເບິ່ງໄດ້ໃນເວບ www.auca.kg

### 4.4. ການວາງແຜນບູລິມະສິດ

ພາກປະຊາສັງຄົມອາດເລືອກເອົາບາງຄໍາແນະນໍາທີ່ເຫັນວ່າມັນກ່ຽວຂ້ອງແລະອາດເລືອກເອົາໂຕທີ່ມັນສໍາຄັນແລະເປັນບູລິມະສິດທາງພາກພື້ນ. ການເລືອກນັ້ນຄວນເບິ່ງວ່າບາງຄໍາແນະນໍານັ້ນແມ່ນງ່າຍທີ່ຈະປະຕິບັດ ແລະ ບາງອັນກໍ່ຍາກທີ່ຈະຫາຊັບພະຍາກອນມາສະໜັບສະໜູນ. ຄໍາແນະນໍາບາງຢ່າງອາດໄດ້ມາຈາກວຽກທີ່ໄດ້ກະກຽມດໍາເນີນການປະຕິບັດຂອງພາກປະຊາສັງຄົມແລະກົນໄກສິດທິມະນຸດ. ການຕິດຕາມຄໍາແນະນໍາໃນລັກສະນະນີ້ແມ່ນຈະດີ ແລະ ສາມາດເຊື່ອມໂຍງເຂົ້າກັບແຜນງານ ແລະ ແຜນຍຸດທະສາດຂອງພາກປະຊາສັງຄົມ.

**ການກະທໍາທີ່ບໍ່ເໝາະສົມແລະການໃຊ້ຄວາມຮຸນແຮງທີ່ເກີດຈາກການກະທໍາຂອງພາກເອກະຊົນໃນການາດາ.**

ໃນປີ 2001 ມີ110 ໜ່ວຍງານຂອງສະຫະພັນມະຫາວິທະຍາໄລຂອງແມ່ຍິງ CFUW ໄດ້ຮຽກຮ້ອງ ໃຫ້ລັດຖະບານການາດາຕ້ອງດໍາເນີນການລົງໂທດທາງອາຍາເປັນພິເສດແກ່ພາກເອກະຊົນທີ່ມີການໃຊ້ຄວາມຮຸນແຮງ.

ໃນກົດໝາຍອາຍາຂອງການາດາແມ່ນໄດ້ວາງໂທດໃສ່ພາກລັດທີ່ມີການກະທໍາກ່ຽວກັບການໃຊ້ຄວາມຮຸນແຮງເທົ່ານັ້ນ. ໃນເວລາທີ່ມີການກະທໍາທີ່ກ່ຽວກັບການໃຊ້ຄວາມຮຸນແຮງທີ່ເກີດຈາກສ່ວນບຸກຄົນເຊັ່ນວ່າເກີດຄວາມຮຸນແຮງພາຍໃນປະເທດ, ໃນກໍລະນີດັ່ງກ່າວກົດໝາຍແມ່ນບໍ່ໄດ້ມີຂໍ້ກໍານົດທີ່ຈະລົງໂທດອາດສະຍາກໍາທີ່ກ່ຽວເນື່ອງກັບການໃຊ້ຄວາມຮຸນແຮງທີ່ເກີດຂື້ນ. ໃນເດືອນເມສາ 2012, CFUW ໄດ້ຍື່ນບົດລາຍງານໃຫ້ແກ່ຄະນະກໍາມາທິການຕ້ານການທໍລະ ມານ (CAT). ສະມາຊິກຂອງ CFUW ໄດ້ເຂົ້າຮ່ວມກອງປະຊຸມໃນເດືອນພຶດສະພາຂອງຄະນະກໍາມາທິການ ໃນນະຄອນເຈນນີວາ. ຕົວແທນຂອງ CFUW ສອງທ່ານໄດ້ກ່າວວ່າ "ຜ່ານການຮັບຟັງທາງຄະນະກໍາມາທິການທີ່ໄດ້ກ່າວແລະຢືນຢັນກັບຄະນະຜູ້ແທນຂອງປະເທດການາດາວ່າຮູບແບບຄວາມຮຸນແຮງທີ່ມີຕໍ່ເພດຕ່າງໆນັ້ນແມ່ນຖືວ່າເປັນການທໍລະມານເຖິງວ່າຜູ້ກະທໍານັ້ນບໍ່ແມ່ນພາກລັດກໍ່ຕາມ ແລະ ຄວາມຜິດນີ້ແມ່ນໄດ້ຖືກກໍານົດໃນສົນທິສັນຍາວ່າດ້ວຍການຕ້ານການທໍລະມານ. ສິ່ງທີ່ໄດ້ຮັບຟັງນັ້ນເຫັນວ່າມັນແມ່ນຜົນງານອັນໜຶ່ງທີ່ໄດ້ເຫັນຄວາມເທົ່າທຽມທາງເພດ ແລະ ແມ່ຍິງແລະເດັກຍິງແມ່ນຈະໄດ້ຮັບການປົກປ້ອງຈາກການໃຊ້ຄວາມຮຸນແຮງຂອງພາກເອກະຊົນ. ບົດສະຫລຸບທີ່ໄດ້ມາຈາກ (CAT) ນັ້ນແມ່ນເປັນທີ່ໜ້າພໍໃຈ ແລະ ທາງ CFUW ກໍຈະນໍາເອົາໄປຈັດຕັ້ງປະຕິບັດ" ເພື່ອຕິດຕາມຄໍາແນະນໍາຂອງ (CAT), ທາງCFUW ແມ່ນໄດ້ຍື່ນເອກະສານໃຫ້ແກ່ຄະນະກໍາມາທິການວ່າດ້ວຍແມ່ຍິງ ແລະ ກໍໄດ້ສົ່ງໃຫ້ແກ່ ໜ່ວຍງານ UPR ທີ່ການາດາເພື່ອດໍາເນີນການຈັດຕັ້ງປະຕິບັດຕາມບົດສະຫລຸບແລະຄໍາແນະນໍາຂອງ (CAT) ວ່າດ້ວຍການທໍລະມານ ແລະ ການກະທໍາທີ່ບໍ່ເໝາະສົມຂອງພາກເອກະຊົນ.

ມີຫຼືບໍ່ມີການຮ່ວມງານໃນໄລຍະທີ່ຜ່ານມາກັບວົງຈອນກົນໄກສິດທິມະນຸດກໍ່ຕາມ, ພາກປະຊາສັງຄົມໄດ້ພົບວ່າການວາງບູລິມະສິດໃຫ້ແກ່ຄໍາແນະນໍາທີ່ມີຕາມບົດສະຫຼຸບໂດຍການຄັດເລືອກເອົາຄໍາແນະນໍາທີ່ກ່ຽວຂ້ອງກັບເປົ້າໝາຍ ວຽກງານດ້ານສິດທິມະນຸດແມ່ນເປັນບາດກ້າວທີ່ສໍາຄັນອັນໜຶ່ງໃນການພັດທະນາແຜນການຕິດຕາມໃຫ້ເປັນຈິງ.

**ພາກປະຊາສັງຄົມແມ່ນສາມາດນຳໃຊ້ເງື່ອນໄຂຕ່າງໆເພື່ອວາງບູລິມະສິດໃຫ້ແກ່ຄຳແນະນຳເຊັ່ນ:**

- ຄຳແນະນຳທີ່ອອກມາຈາກກົນໄກ ຫຼື ອົງກອນສິດທິມະນຸດທີ່ສະໜັບສະໜູນພາກສ່ວນ ປະຊາສັງຄົມ;
- ຄຳແນະນຳທີ່ເຂົ້າກັບເປົ້າໝາຍ ແລະ ກິດຈະກຳຂອງພາກປະຊາສັງຄົມເພື່ອ ນຳໃຊ້ໃນວຽກງານຕິດຕາມຕົວຈິງ;
- ຄຳແນະນຳແລະຜົນຈາກການທົບທວນທີ່ໄດ້ສ້າງຄວາມສຳເລັດອັນໃໝ່ໃນການຕີຄວາມໝາຍ ແລະ ການນຳໃຊ້ກົດໝາຍສິດທິມະນຸດ;
- ຄຳແນະນຳທີ່ໄດ້ຖືກນຳໄປຈັດຕັ້ງປະຕິບັດນັ້ນແມ່ນອາດໄດ້ຮັບຜົນສຳເລັດມາຈາກຫລາຍປັດໃຈ (ລັດໃຫ້ຄວາມສຳຄັນ; ຄວາມກົດດັນ/ການຊ່ວຍເຫລືອຂອງສາກົນ; ມີຄວາມພ້ອມດ້ານ ຊັບພະຍາກອນ);
- ພາກປະຊາສັງຄົມນັ້ນສາມາດຕິດຕາມການຈັດຕັ້ງປະຕິບັດຕາມຄຳແນະນຳໂດຍຮ່ວມມືກັບໜ່ວຍງາ ນອື່ນໆ;
- ພາກປະຊາສັງຄົມສາມາດດຳເນີນການກວດກາບັນດາຄຳແນະນຳທີ່ກຳລັງໄດ້ຈັດຕັ້ງປະຕິບັດຢູ່;
- ພາກປະຊາສັງຄົມບໍ່ຈຳເປັນຕ້ອງຕິດຕາມຄຳແນະນຳທີ່ບໍ່ກ່ຽວຂ້ອງກັບວຽກງານຕົນ;
- ຄຳແນະນຳທີ່ກ່ຽວຂ້ອງກັບພາກປະຊາສັງຄົມໂດຍເພາະ (ຄຳແນະນຳຂອງຂະບວນ ການພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວສິດທິມະນຸດເພື່ອສະມາຄົມຂອງນັກເຄື່ອນໄຫວສະເພາະ)

## ການວາງບູລິມະສິດໃຫ້ຄຳແນະນຳຂອງ UPR ກ່ຽວກັບໂຄງການບໍ່ຈຳແນກເພດແລະລັກສະນະຂອງເພດ

ບົດຝຶກຫັດໃນການວາງບູລິມະສິດໃຫ້ຄຳແນະນຳຂອງUPR ແລະ ການພັດທະນາແຜນງານລິເລີ່ມແມ່ນມີຢູ່ຂ້າງລຸ່ມນີ້:

| ຄຳແນະນຳຂອງ UPR | ວາງບູລິມະສິດ | ຮູບແບບການຕິດຕາມ ແລະກິດຈະກຳຫຼັກ | ອົງການທີ່ຮັບຜິຊອບແລະຊັບພະຍາກອນ | ກຳນົດເວລາ | ຕົວຊີ້ວັດ |
|---|---|---|---|---|---|
| ການນຳໃຊ້ມາດຕະການປ້ອງກັນທາງກົດໝາຍຕໍ່ກັບການຈຳແນກຄວາມແຕກຕ່າງທາງເພດ ແລະ ລັກສະນະຂອງເພດ ໃຫ້ເປັນຄວາມຜິດຂອງການຈຳແນກ | ການວາງບູລິມະສິດແມ່ນມີຄວາມສຳຄັນທີ່ລັດຖະບານອາດມອງຂ້າມຖ້າຫາກບໍ່ມີການກະຕຸ້ນຈາກພາກເອກະຊົນແລະສາກົນ | ການສະໜັບສະໜູນ.<br>ການຊັກຊວນສະມາຊິກສະພາ<br><br>ເຂົ້າຮ່ວມການຮ່າງນິຕິກຳ.<br>ການດົນນະລົງ | ກຸ່ມເກແລະທອມ.<br><br>ອົງການທີ່ຮ່ວມມືກັບພາກປະຊາສັງຄົມຕ່າງໆ. ເປັນສ່ວນໜຶ່ງຂອງກິດຈະກຳທີ່ດຳ ເນີນຢູ່ | ສີ່ປີຂ້າງໜ້າ | **ເພດ**<br>ລັກສະນະແລະເອກະລັກທາງເພດ ຖືວ່າເປັນ ຫຼັກການຫ້າມມີການຈຳແນກໃນກົດໝາຍຫ້າມບໍ່ໃຫ້ຈຳແນກ |
| ການເລີ່ມຫຼືຮ່ວມປູຈິດສຳນຶກໃຫ້ສາທາລະນະ ເພື່ອສະໜັບສະໜູນຄວາມອົດທົນທີ່ມີຕໍ່ເພດ, ບຸກ ຄົນທີ່ແປງເພດ ແລະ ບຸກຄົນທີ່ມັກເພດດຽວກັນ | ໃຫ້ເບິ່ງຂໍ້ມູນຂ້າງເທິງ | ເຂົ້າຮ່ວມການດົນນະລົງ. ຈະຈົງກຸ່ມຊາວໜຸ່ມເປົ້າໝາຍ, ຄົນທົ່ວໄປ, ສຳນັກງານທີ່ບັງຄັບໃຊ້ ກົດໝາຍ. ສະພາບແວດລ້ອມທີ່ເຈາະຈົງ: ໂຮງຮຽນມັດທະຍົມ; ມະຫາວິທະຍາໄລ; ສະໂມສອນກິລາ; ສູຝຶກຕຳຫຼວດ | ກຸ່ມເກແລະທອມ.<br><br>ອົງການທີ່ຮ່ວມມືກັບພາກປະຊາສັງຄົມຕ້ອງຊອກຫາຊັບ ພະຍາກອນເພີ້ມ | ສີ່ປີຂ້າງໜ້າ | ລັກສະນະແລະເອກະດົນນະລົງໃຫ້ຈັດຕັ້ງປະຕິບັດ. ປະເພດຄົນທີ່ເລືອກທີ່ຈະເຂົ້າເຖິງ<br><br>ລັກທາງ ເພດ ຖືວ່າເປັນ ຫຼັກການ |

| ຄຳແນະນຳຂອງ UPR | ວາງບູລິມະສິດ | ຮູບແບບການຕິດຕາມ ແລະກິດຈະກຳຫຼັກ | ອົງການທີ່ຮັບຜິດຊອບແລະຊັບພະຍາກອນ | ກຳນົດເວລາ | ຕົວຊີ້ວັດ |
|---|---|---|---|---|---|
| ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ແລະ<br>ໃຫ້ແກ່ນະໂຍບາຍປົກປ້ອງທີ່ກ່ຽວກັບບັນຫາທາງເພດ ແລະ ການຈຳແນກແມ່ຍິງ | ລັດຖະບານຄວນໄດ້ຮັບການຊຸກຍູ້ໃນການສະ ໜັບສະໜູນໃຫ້ສ້າງຄວາມ ເຂັ້ມແຂງ, ຄວາມເທົ່າທຽມ, ຄວາມພຽງພໍດ້ານຊັບພະຍາກອນຂອງອົງການ | ກວດກາແລະສະໜັບສະໜູນ. ທາງົບປະມານທີ່ແບ່ງໃຫ້ແກ່ກະຊວງເພື່ອໃຫ້ເທົ່າທຽມກັນ. ກວດກາກິດຈະກຳທີ່ນຳມາສະເໜີຈາກກະຊວງແລະຈັດຕັ້ງປະຕິບັດໂດຍລັດຖະບານ | ອົງການຈັດຕັ້ງຂອງແມ່ຍິງທີ່ຮ່ວມງານກັບພາກປະຊາສັງຄົມ. ສ່ວນປະກອບຂອງກິດຈະກຳທີ່ດຳເນີນຢູ່. ໃຫ້ຄວາມຮູ້ເພີ້ມກ່ຽວກັບການກວດກາທາງົບປະມານ | ສີ່ປີຂ້າງໜ້າ | ການແບ່ງຊັບພະຍາກອນໃຫ້ແກ່ກະຊວງເພື່ອໂອກາດທີ່ເທົ່າທຽມ. ນະໂຍບາຍທີ່ສະ ເໜີຈາກກະຊວງທີ່ໄດ້ຮັບການຮັບ ຮອງແລະຈັດຕັ້ງປະຕິບັດໂດຍລັດຖະບານ. |
| ໃຫ້ບູລິມະສິດການຈັດຕັ້ງປະຕິບັດຂອງການປະຕິຮູບກົດໝາຍໃນປະຈຸບັນເພື່ອລົບລ້າງບັນດາຫຼັກການທີ່ມີການຈຳແນກແມ່ | ເຖິງເວລາແລ້ວທີ່ຈະມີກົດໝາຍທີ່ບໍ່ມີການຈຳແນກ | ກວດການິຕິກຳ. ສ່ວນໜຶ່ງຂອງການ ຕິດຕາມການຈັດຕັງປະບັດ CEDAW | ອົງການຂອງແມ່ຍິງທີ່ຮ່ະມງານກັບພາກປະຊາສັງຄົມ. ສ່ວນໜຶ່ງຂອງກິດ ຈະກຳທີ່ດຳເນີນຢູ່ | ບົດລາຍງານຄັ້ງຕໍ່ໄປພາຍໄຕ້ CEDAW | ຂໍ້ກຳນົດທີ່ທາງ CEDAW ເຫັນວ່າມີການຈຳແນກແມ່ນໄດ້ຖືກລົບລ້າງ |
| ຄັດເອົາມາດຕະການທີ່ເໝາະສົມເພື່ອລົບລ້າງ<br>ຊ່ອງຫວ່າງຄ່າແຮງງານລະຫວ່າງຍິງຊາຍ | ຖືວ່າບໍ່ໄດ້, ແຕ່ພາກປະຊາສັງຄົງໃຫ້ການສະໜັບ ສະໜູນ. ເກີນຄວາມສາ | | | | |

| ຄຳແນະນຳຂອງ UPR | ວາງບູລິມະສິດ | ຮູບແບບການຕິດຕາມ ແລະກິດຈະກຳຫຼັກ | ອົງການທີ່ຮັບຜິຊອບແລະຊັບພະຍາກອນ | ກຳນົດເວລາ | ຕົວຊີ້ວັດ |
|---|---|---|---|---|---|
| ສ້າງ, ຮ່ວມມືກັບພາກປະຊາສັງຄົມ, ຍຸດທະສາດທີ່ລະອຽດທີ່ມີເປົ້າໝາຍໃນການລົບລ້າງການປະຕິບັດທາງວັດທະນາທຳທີ່ບໍ່ເໝາະສົມແລະເລືອກປະຕິບັດຕໍ່ແມ່ຍິງ | ມີຄວາມເໝາະສົມ. ວິທີການນີ້ແມ່ນໄດ້ຮັບການສ້າງໂດຍສະຫະພັນ, ແລະ ຂໍ້ສະເໜີແນະທີ່ໃຫ້ພາກປະຊາສັງຄົມມີບົດບາດທີ່ຈະແຈ້ງ | ເຂົ້າຮ່ວມໃນການພັດທະນຍຸດທະສາດ | ອົງການຈັດຕັ້ງຂອງແມ່ຍິງທີ່ຮ່ວມມືກັບ ອົງກອນແມ່ຍິງຂອງ ສປຊ | ໜຶ່ງປີ | ຮັບຮອງເອົາຍຸດທະສາດ |
| ສ້າງຄວາມເຂັ້ມແຂງໃນການລົບລ້າງແຮງງານເດັກ, ຍົກລະດັບການຮ່ວມມືປະສານງານໃນບັນດາສະຖາບັນແຫ່ງຊາດຕ່າງໆທີ່ເຮັດໜ້າທີ່ດ້ານສິດທິຂອງເດັກ | ບໍ່ເໝາະ. ມັນເກີນຂອບເຂດຂອງກິດຈະກຳຂອງພາກປະຊາສັງຄົມທີ່ເຂົ້າຮ່ວມ | | | | |

### 4.5. ການກວດກາການຈັດຕັ້ງປະຕິບັດ

ການກວດກາການຈັດຕັ້ງປະຕິບັດຂອງລັດພາຄີຕາມຄຳແນະນຳຂອງກົນໄກການທົບທວນແມ່ນເປັນກິດຈະກຳທີ່ມີຄວາມສຳຄັນສຳລັບພາກປະຊາສັງຄົມເພື່ອຕິດຕາມການປະຕິບັດພັນທະຂອງລັດຖະບານ. ການກວດກາລວມມີການເບິ່ງຂໍ້ມູນຂ່າວສານກ່ຽວກັບລັດຕ່າງໆວ່າໄດ້ໃຫ້ສັດຕະຍາບັນສົນທິສັນຍາໃດໜຶ່ງແລ້ວຫຼືບໍ່, ໃຫ້ການເຊື້ອເຊີນຂະບວນການພິເສດລົງຢ້ຽມຢາມປະເທດທີ່ກ່ຽວຂ້ອງ, ຮັບຮອງເອົາກົດໝາຍວ່າດ້ວຍການບໍ່ເລືອກປະຕິບັດ; ຫລື ດຳເນີນຂະບວນການຕິດຕາມກວດກາທີ່ສະລັບສັບຊ້ອນທີ່ກ່ຽວຂ້ອງກັບການເກັບກຳແລະສະໜັບສະໜູນຂໍ້ມູນຈຳນວນຫລາຍຈາກແຫຼ່ງຂໍ້ມູນຕ່າງໆແລະຈາກສະຖານທີ່ອື່ນໆ, ຫລືດຳເນີນການວິເຄາະຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບຕົວຊີ້ວັດແລະເກນມາດຖານທີ່ເກີນເວລາທີ່ກຳນົດ. ບໍ່ວ່າຈະເປັນການຕິດຕາມກວດກາປະເພດໃນກໍ່ຕາມ, ງ່າຍດາຍຫຼືສະລັບສັບຊ້ອນ, ມັນເປັນສິ່ງທີ່ສຳຄັນວ່າບົດສະຫຼຸບນັ້ນແມ່ນຖືກຕ້ອງແລະເຊື່ອຖືໄດ້ບໍ່. ບົດສະຫຼຸບແມ່ນສາມາດໃຊ້ເປັນພື້ນຖານສຳລັບການສະໜັບສະໜູນໃຫ້ລັດຖະບານຂອງປະເທດແລະອາດຈະໄດ້ຮັບການພັດທະນາເປັນຂໍ້ສະເໜີໃຫ້ແກ່ກົນໄກສິດທິມະນຸດ, ຕົວຢ່າງ, ໃນຮອບວຽນທີສອງຫຼືທີສາມຂອງ UPR, ຖືວ່າເປັນການອັບເດດຂໍ້ມູນທາງປາກເປົ່າໃຫ້ແກ່ສະພາສິດທິມະນຸດສຳລັບການທົບທວນຂອງອົງກອນສິດທິມະນຸດທີ່ຈະມາເຖິງ. ຄູ່ມືຂອງ OHCHR ກ່ຽວກັບການກວດກາ[5] ແມ່ນໄດ້ໃຫ້ລາຍລະອຽດລົມຄວນກ່ຽວກັບວິທີການກວດກາທີ່ເປັນແບບການດຳເນີນການຮ່ອມ, ການຍັ້ງຢືນ, ການວິເຄາະແລະການນຳໃຊ້ຂໍ້ມູນເພື່ອປະເມີນແລະການແກ້ໄຂບັນຫາສິດທິມະນຸດທີ່ກ່ຽວຂ້ອງ. ອີງຕາມສິ່ງທີ່ກ່າວມານີ້, ການຕິດຕາມກວດກາແມ່ນຈະໃຊ້ເວລາຍາວນານພໍສົມຄວນ. ຂະບວນການກວດກາທັງໝົດຍັງໝາຍເຖິງຮອບວຽນຂອງການຕິດຕາມກວດກາສິດທິມະນຸດ (ເບິ່ງຢູ່ຂ້າງລຸ່ມ).

### ຮອບວຽນການກວດກາ




5 ຄູ່ມືກ່ຽວກັບການກວດກາສິດທິມະນຸດ (ສຳນັກພິມ ສປຊ, HR/P/PT/7/Rev.1).

## ການກວດກາທີ່ສາມາດເຂົ້າເຖິງຂໍ້ມູນແລະແຫລ່ງທີ່ມາຂອງຂໍ້ມູນທີ່ສະຖາທີ່ເລືອກຕັ້ງໃນຮົງກົງ

ປະເທດຈີນລວມທັງຮ່ອງກົງແມ່ນໄດ້ຖືກທົບທວນໂດຍຄະນະກຳມາທິການກ່ຽວກັບສິດຂອງຄົນພິການ (CRPD) ໃນເດືອນກັນຍາ 2012. ກຸ່ມທີ່ສະໜັບສະໜູນຕົນເອງຈາກອົງການ Chosen Power ໄດ້ເຂົ້າຮ່ວມກອງປະຊຸມ CRPD ທັງສອງຄັ້ງຄືທີ 7 ແລະ 8 ເພື່ອກ່າວສະຫຼຸບໂດຍຫຍໍ້ກ່ຽວກັບວິທີການທີ່ລັດຖະບານຂອງເຂົາເຈົ້າໄດ້ປະຕິບັດແນວໃດຕໍ່ສິດທິຂອງເຂົາ, ແລະ ໄດ້ບັນຍາຍກ່ຽວກັບປະສົບການໃນການເຮັດວຽກທີ່ກ່ຽວຂ້ອງຢູ່ໃນຮົງກົງ. ອົງການ Chosen Power ເປັນອົງການທຳອິດທີ່ສະໜັບສະໜູນຕົນເອງແລະເປັນອົງການທີ່ຊ່ວຍເຫລືອຕົນເອງທີ່ໄດ້ມີບຸກຄະລາກອນມາຈາກຫລາຍພາກສ່ວນໃນອາຊີແລະການເຂົ້າຮ່ວມກອງປະຊຸມໃນນະຄອນເຈນີວານັ້ນແມ່ນເປັນຄັ້ງທຳອິດທີ່ມີຕົວແທນຂອງຄົນພິການທາງປັນຍາເຂົ້າຮ່ວມແລະກ່າວສະເໜີໃນຕໍ່ໜ້າຄະນະກຳມາທິການ.

ຕາມກອງປະຊຸມຄັ້ງທີ 7 ທີ່ບັນຊີລາຍການຂອງບັນຫາຕ່າງໆແມ່ນໄດ້ຮັບການຮັບຮອງ, Chosen Power ແມ່ນໄດ້ຂໍໃຫ້ມີການເປີດກວ້າງໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ເອກະສານຢູ່ໃນສະຖາທີ່ເລືອກຕັ້ງສຳລັບຄົນພິການທາງປັນຍາ, ແລະ ຄວນມີຜູ້ຕິດຕາມທີ່ພວກເຂົາໄດ້ເລືອກມາເພື່ອພາເຂົ້າໄປໃນສະຖານທີ່ປ່ອນບັດເລືອກຕັ້ງ. Chosen Power ໄດ້ເຂົ້າພົບກັບພະນັກງານຂອງອົງການຈັດທະບຽນການເລືອກຕັ້ງໃນເດືອນກໍລະກົດ 2012ເພື່ອສົນທະນາບັນຫາບັນຫາກ່ຽວກັບຄົນຕາບອດຫຼືຜູ້ພິການທາງສາຍຕາທີ່ບໍ່ສາມາດເຂົ້າເຖິງການລົງຄະແນນສຽງເລືອກຕັ້ງ, ຫຼື ຄວາມເປັນໄປບໍໄດ້ສຳລັບຄົນທີ່ກຳລັງຮັກສາຕົວໃນໂຮງໝໍທີ່ຈະອອກມາລົງຄະແນນສຽງ, ແລະ ບັນຫາຂອງຄວາມຈິງທີ່ວ່າຄົນທີ່ມີບັນຫາດ້ານສຸກຂະພາບຈິດ ແມ່ນບໍ່ສາມາດລົງຄະແນນສຽງເລືອກຕັ້ງໄດ້.

ການເລືອກຕັ້ງທີ່ໄດ້ຈັດຂຶ້ນໃນເດືອນກັນຍາ 2012 ແລະ ອົງການ Chosen Power ກໍ່ໄດ້ດຳເນີນການຕິດຕາມກວດກາຂະບວນການເລືອກຕັ້ງໃນຫລາຍດ້ານ. ພວກເຂົາໄດ້ພົບເຫັນວ່າເວັບໄຊ້ການເລືອກຕັ້ງນັ້ນແມ່ນບໍ່ສາມາກເຂົ້າເຖິງໄດ້, ພວກເຂົາຕ້ອງໄດ້ລໍຖ້າເປັນເວລາຍາວນານກ່ອນທີ່ຈະເຂົ້າໃຊ້ເວບໄດ້, ນອກນີ້ ໃນເວລານັ້ນພວກເຂົາຮູ້ສືກວ່າຜູ້ທີ່ອຳນວຍຄວາມສະດວກໃນສະຖາທີ່ເລືອກຕັ້ງນັ້ນແມ່ນບໍ່ໄດ້ໃຫ້ການເຄົາລົບດ້ານສິດ ແລະ ຄວາມເປັນສ່ວນຕົວຂອງພວກເຂົາແຕ່ຢ່າງໃດເລີຍ.

ຜົນສຳເລັດທີ່ພໍໃຈຂອງການເຂົ້າຮ່ວມໃນຂະບວນການທົບທວນຂອງຄະນະກຳອາທິການ CRPD ແມ່ນຖືວ່າເປັນການເຕົ້າໂຮມອົງການຂອງຄົນພິການຕ່າງໆ ແລະ ອົງການພາກປະຊາສັງຄົມ ໃນການຮ່ວມພະລັງເປັນໜຶ່ງດຽວທີ່ສາມາດຊ່ວຍດຶງເອົາບັນຫາຂອງຄົນພິການມາສູ່ສັງຄົມວົງກວ້າງໄດ້. ຢູ່ໃນຮົງກົງ ອົງການຈັດຕັ້ງເຫຼົ່ານີ້ຍັງໄດ້ເຮັດວຽກຮ່ວມກັນເພື່ອປະກອບສ່ວນໃນການສົ່ງຂໍ້ມູນໃຫ້ແກ່ຄະນະກຳມາທິການສິດທິມະນຸດເພື່ອສ້າງເປັນບັນຊີລາຍການກ່ຽວກັບບັນຫາຕ່າງໆໃນຮົງກົງທີ່ພວກເຂົາໄດ້ພະຍາຍາມຍົກຂຶ້ນມາເພື່ອໃຫ້ໄດ້ມີສ່ວນຮ່ວມທາງດ້ານການເມືອງ, ແລະ ເພື່ອກົດດັນໃຫ້ລັດຖະບານຕ້ອງປັ່ງປແປງເພື່ອການມີສ່ວນຮ່ວມທີ່ເທົ່າທຽມຂອງເຂົາເຈົ້າ.

### ການນຳໃຊ້ຕົວຊີ້ວັດສິດທິມະນຸດເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດ

ຕົວຊີ້ວັດດ້ານປະລິມານແລະຄຸນນະພາບແມ່ນສາມາດຖືກນຳໃຊ້ເພື່ອຕິດຕາມກວດກາການປະຕິບັດຕາມຜົນການທົບທວນໂດຍອີງໃສ່ຄຸນລັກສະນະແລະວິທີການທີ່ໂປ່ງໃສ. ຕົວຢ່າງ, ຕົວຊີ້ວັດເພື່ອກວດກາການຈັດຕັ້ງປະຕິບັດກົດໝາຍກ່ຽວກັບສຸຂະພາບທາງເພດ ແລະ ທາງການຈະເລີນພັນແມ່ນຄວນຈະເບິ່ງແຕ່ວັນທີທີ່ມີຜົນບັງຄັບໃຊ້ແລະເຂດເຂດຂອງກົດໝາຍ.

ຄຳແນະນຳອື່ນໆທີ່ຢູ່ໃນຂົງເຂດດັ່ງກ່າວກໍ່ອາດແມ່ນ "ສືບຕໍ່ຄວາມພະຍາຍາມເພື່ອເພີ່ມທະວີການເຂົ້າເຖິງການບໍລິການຄຸມກຳເນີດມີຄວາມປອດໄພແລະລາຄາບໍ່ແພງໃນທົ່ວປະເທດ".

ຕົວຊີ້ວັດກ່ຽວກັບອັດຕາສ່ວນຂອງແມ່ຍິງຫຼືຄູ່ຄອງຂອງເຂົາເຈົ້າໃນການນຳໃຊ້ວິທີການຄຸມກຳເນີດແມ່ນຄວນອະນຸຍາດໃຫ້ພາກສ່ວນກ່ຽວຂ້ອງດຳເນີນການປະເມີນ ການຈັດຕັ້ງປະຕິບັດ.

ຂໍ້ມູນກ່ຽວກັບການຄຸມກຳເນີດແມ່ນສ້າງຂື້ນມາໂດຍພະແນກປະຊາກອນສະຫະປະຊາຊາດທີ່ນຳໃຊ້ການສຳຫຼວດໃນທົ່ວປະເທດ.

ໃນເວລາທີ່ເກັບກຳຂໍ້ມູນສຳລັບຕົວຊີ້ວັດ, ມັນເປັນສິ່ງສຳຄັນທີ່ຈະແຍກຂໍ້ມູນຕາມ ລັກສະນະຂອງສະພາບການ. ໃນບັນຊີລາຍຊື່ທີ່ບໍ່ທັນໄດ້ຄົບຖ້ວນແລະຂື້ນຢູ່ກັບສິ່ງທີ່ມີຄວາມກ່ຽວຂ້ອງແລະເໝາະສົມໃນແຕ່ລະສະພາບການ, ຕົວຊີ້ວັດສາມາດ ຈັດແບ່ງຕາມພື້ນຖານຂອງເຊື້ອຊາດ, ສີຜິວ, ເພດ, ອາຍຸ, ພາສາ, ສາດສະໜາ, ແນວຄິດທາງການເມືອງຫຼືອື່ນໆ, ຊາດກຳເນີດຫຼືສັງຄົມ, ຊັບສິນ ,. ການເກີດ, ຄວາມພິການທາງດ້ານຮ່າງກາຍຫຼືຈິດໃຈ, ສະຖານະທາງສຸຂະພາບ (ລວມທັງເຊື້ອໂລກເອດສ / ໂລກເອດສ), ປະຖົມນິເທດທາງເພດ, ແລະສະຖານະທາງພົນລະເຮືອນ, ການເມືອງຫຼືສະຖານະອື່ນໆ. ເມື່ອໄດ້ຕົວຊີ້ວັດທີ່ກ່ຽວຂ້ອງແລ້ວ, ມັນຈະເປັນປະໂຫຍດໃນການຕັ້ງມາດຕະຖານທີ່ຈະບັງຄັບໃຫ້ລັດຕ່າງໆຕ້ອງໃຫ້ຄຳໝັ້ນສັນຍາ ແລະ ຈັດຕັງປະຕິບັດຕາມຄຳແນະນຳຕ່າງໆ.

ອົງການ Social Watch[6] ແລະ ສູນສຳລັບສິດທິທາງເສດຖະກິດແລະສັງຄົມ[7] ແມ່ນເປັນອົງທີ່ມີປະສົບການຫລາຍຢ່າງໃນການນຳໃຊ້ຕົວຊີ້ວັດເພື່ອຕິດຕາມການຈັດຕັ້ງປະຕິບັດ.[8]

### 4.6. ການຍາດແຍ່ງໂອກາດ

ການທົບທວນສະຖານະການສິດທິມະນຸດຂອງລັດພາຄີໂດຍກົນໄກສິດທິມະນຸດ ສປຊ ຫຼື ການລົງຢ້ຽມຢາມຂອງຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກຂະບວນການພິເສດແມ່ນສາມາດສ້າງ ກາລະໂອກາດໄດ້ເຊັ່ນ:

- ສ້າງຄວາມສົນໃຈເປັນພິເສດໃຫ້ແກ່ສື່ມວນຊົນຕໍ່ກັບສະຖານະການສິດທິມະນຸດທີ່ບໍ່ເຄີຍມີມາກ່ອນ;
- ເຈົ້າໜ້າທີ່ຂອງລັດຈະເປີດກວ້າງການແກ້ໄຂບາງບັນຫາສິດທິມະນຸດຢູ່ຂັ້ນສູນກາງຫຼືຂັ້ນທ້ອງຖິ່ນ;

6 www.socialwatch.org
7 www.cesr.org
8 ຂໍ້ມູນເພີ່ມເຕີມກ່ຽວກັບຕົວຊີ້ວັດແມ່ນສາມາດອ່ານໄດ້ໃນເອກະສານຕົວຊີ້ວັດສິດທິມະນຸດ-ຄູ່ມືການກວດກາແລະຈັດຕັ້ງປະຕິບັດ (ສຳນັກງານພິມ ສປຊ, HR/PUB/12/5).

- ຈະໄດ້ຄູ່ສົນທະນາໃຫມ່ກັບລັດຖະບານທີ່ພ້ອມຈະເຂົ້າຮ່ວມໃນການປຶກສາຫາລືກັບພາກປະຊາສັງຄົມ;
- ໄດ້ແຮງພັກດັນໃໝ່ສຳລັບມາດຕະການເພື່ອສ້າງຄວາມກ້າວໜ້າດ້ານສິດທິມະນຸດ;
- ເປັນການສະແດງເຈດຈຳນົງທາງການເມືອງທີ່ຈະຮັບເອົານິຕິກຳການຮ້ອງທຸກທີ່ມີມາດຕະຖານທາງສິດທິມະນຸດ;
- ເກີດມີຊັບພະຍາກອນໃຫມ່ທີ່ຈະຊ່ວຍໃນການປະຕິບັດໜ້າທີ່ຢູ່ໃນຂອບເຂດຄວາມຮັບພິຊອບທີ່ມີ; ແລະ
- ເກີດມີການຮ່ວມມືແລະການເຕົ້າໂຮມເພື່ອເສີມສ້າງຫຼືສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການທົບທວນ.

ພາກປະຊາສັງຄົມແມ່ນມີບົດບາດສຳຄັນທັງໃນດ້ານການສ້າງກາລະໂອກາດໃຫ້ແກ່ກົດຈະກຳອ້ອມຂ້າງຂອງກົນໄກສິດທິມະນຸດແລະໃນການຍາດແຍ່ງເອົາໂອກາດດັ່ງກ່າວເພື່ອສ້າງຄວາມກ້າວຫນ້າທາງຍຸດທະສາດສຳລັບການປັບປຸງມາດຕະການປົກປ້ອງໃຫ້ແກ່ສິດທິມະນຸດ.

### 4.7. ການສ້າງແລະການເຮັດວຽກຮ່ວມກັບສະຫະພັນ

ການເຂົ້າຮ່ວມໃນວຽກງານຂອງກົນໄກສິດທິມະນຸດໂດຍຜ່ານສະຫະພັນພາກປະຊາສັງຄົມແມ່ນໄດ້ສ້າງໝາກຜົນທີ່ ໜ້າພໍໃຈ. ຕົວຢ່າງ:

- ຂໍ້ມູນທີ່ສົ່ງໃຫ້ກົນໄກສິດທິມະນຸດຍິ່ງມີຄວາມລະອຽດຫລາຍເທົ່າໃດ, ມັນກໍ່ຈະສະດວກໃນການເລືອກບູລິມະສິດຂອງຄຳແນະນຳໄດ້ງ່າຍຂື້ນເທົ່ານັ້ນ.
- ພະແນກແຮງງານແມ່ນໜຶ່ງໃນຈຳນວນບັນດາອົງການຈັດຕັ້ງທີ່ຢູ່ໃນທະສະພັນຍ້ອນວ່າພະແນກມີຄວາມ ຊຳນານສະເພາະ, ມີຊັບພະຍາກອນແລະຄວາມສາມາດ, ມີຜົນງານຫລາຍຢ່າງໃນການມີສ່ວນຮ່ວມແລະການຕິດຕາມ (ເຊັ່ນ: ບາງອົງການແມ່ນຈະສຸມໃສ່ການສະຫນັບສະຫນູນຫຼືປູກຈິດສຳນຶກ, ບາງອົງການແມ່ນເຮັດກ່ຽວກັບການຕິດຕາມກວດກາ, ການເກັບກຳແລະວິເຄາະຂໍ້ມູນ, ເຊິ່ງລວມມີທັງຂໍ້ມູນທາງວິຊາການແລະຂໍ້ມູນອື່ນ ໆ,ບາງອົງການກໍ່ໃຫ້ການສະຫນັບສະຫນູນຜູ້ຖືກເຄາະຮ້າຍຈາກການລະເມີດສິດທິມະນຸດແລະຊ່ວຍເປັນກະບອກສຽງແລະຊ່ວຍເປັນສັກຂີພະຍານ).
- ປັບປຸງ ສາຍພົວພັນໃນການຮ່ວມງານ, ຮ່ວມມືແລະສ້າງຄວາມສາມັກຄີໃນບັນດາພາກປະຊາສັງຄົມ. ວຽກງານທີ່ວ່ານີ້ແມ່ນມີຄວາມສຳຄັນເປັນພິເສດໂດຍສະເພາະແມ່ນໃນເວລາທີ່ ພາກປະຊາສັງຄົມຕົກຢູ່ໃນພາວະຖືກຂົ່ມຂູ່.
- ເພີ່ມອິດທິພົນແລະຄວາມຫນ້າເຊື່ອຖືຂອງສະຫະພັນທີ່ມີນ້ຳໜຶ່ງໃຈດຽວກ່ຽວກັບເປົ້າໝາຍແລະວັດຖຸປະສົງຂອງກົນໄກສິດທິມະນຸດ, ເຈົ້າໜ້າທີ່ລັດແລະພາກສ່ວນກ່ຽວຂ້ອງອື່ນໆ (ເຊັ່ນ: ພາລະກິດທາງການທູດ: ສະຖາບັນສິດທິມະນຸດແຫ່ງຊາດ).
- ພາກປະຊາສັງຄົມຂະຫນາດນ້ອຍແມ່ນສາມາດດຶງດູດຄວາມສົນໃຈໄດ້ຫຼາຍໃນເວລາທີ່ບັນຫາຂອງເຂົາໄດ້ຖືກນຳມາແກ້ໄຂຜ່ານທາງສະມາຄົມ.

### ສະມາຄົມພາກປະຊາສັງຄົມໄດ້ສ້າງຄວາມກ້າວໜ້າໃນການປ້ອງກັນການທໍລະມານໂດຍຜ່ານຂະບວນການ UPR ໃນຟີລິບປີນ

ກຸ່ມທາງການແພດ (MAG) ໄດ້ເຂົ້າຮ່ວມໃນກອງປະຊຸມກະກຽມເຮັດບົດລາຍງານຮ່ວມຂອງພາກປະຊາສັງຄົມເພື່ອສົ່ງໃຫ້ແກ່ UPR ກ່ຽວປະເທດກັບຟີລິບປີນ. ກ່ອນ UPR ຈັດກອງປະຊຸມໃນເດືອນພຶດສະພາ 2012, ສະມາຊິກຂອງ ພາກປະຊາສັງຄົມໄດ້ຈັດກອງປະຊຸມທາງການທູດໃນກຸງມະນີລາ, ໃນກອງປະຊຸມແມ່ນມີບັນດາສະຖານທູດຕ່າງໆເຂົ້າຮ່ວມປະມານ 20 ສະຖານທູດ. ໃນນະຄອນເຈນີວາ, ສະມາຄົມພາກປະຊາສັງຄົມໄດ້ຈັດກອງປະຊຸມກ່ຽວກັບ16 ພາລະກິດທາງການທູດເພື່ອເປັນການສ້າງຄວາມຕື່ນຕົວກ່ຽວກັບບັນຫາຕ່າງໆຂອງພວກເຂົາ. ສະມາຊິກຂອງສະມາຄົມ ພາກປະຊາສັງຄົມໄດ້ກ່າວວ່າ "ພວກເຮົາສາມາດສະຫລຸບບັນຫາທີ່ສຳຄັນແລະມີລັກສະນະສະເພາະເຂົ້າໃນເອກະສານຄວາມຮູ້ທົ່ວໄປທີ່ກ່ຽວກັບແຕ່ລະບັນຫາ". "ມັນເປັນຄຸນຄ່າທີ່ຍິ່ງໃຫຍ່ທີ່ໄດ້ຮ່ວມງານໃນສະມາຄົມພາກປະຊາສັງຄົມໃນການສ້າງບົດລາຍງານ ແລະ ກະຕຸ້ນໃຫ້ລັດຖະບານເຂົ້າຮ່ວມໃນຂະບວນການຂອງ UPR ທີ່ໄດ້ກໍ່ໃຫ້ເກີດບັນດາຄຳແນະນຳທີ່ກ່ຽວຂ້ອງ. ນອກຈາກນີ້ ທາງສະມາຄົມຍັງໄດ້ອຳນວຍຄວາມສະດວກໃນການຕິດຕາມແລະມີສ່ວນຮ່ວມຢ່າງຫ້າວ ຫັນກັບລັດຖະບານທີ່ກ່ຽວກັບການຈັດຕັ້ງປະຕິບັດຕາມບົດສະຫລຸບຈາກການທົບທວນ. " ກຸ່ມ MAG ແລະ ສະມາຄົມ ຮ່ວມຕໍ່ຕ້ານການທໍລະມານ (UATC) -ໃນຟີລິບປີນແມ່ນກຳລັງນຳໃຊ້ຄຳແນະນຳຂອງ UPR ເພື່ອສະໜັບສະໜູນວຽກງານຂອງຕົນເອງກ່ຽວກັບການປ້ອງກັນການທໍລະມານ. ຜູ້ແທນຂອງ ກຸ່ມ MAG ໄດ້ໃຫ້ການ ສະຫລຸບວ່າ "ພວກເຮົານຳໃຊ້ຂໍ້ສະເໜີແນະຂອງ UPR ໃນວຽກງານຕິດຕາມກວດກາ ແລະ ໃນກິດຈະກຳການສະໜັບສະໜູນທີ່ໄດ້ສຸມໃສ່ການດຶງດູດຄວາມສົນໃຈໃຫ້ສາທາລະນະໃນດ້ານການແພດຈາກການຖືກທໍລະ ມານ, ລວມທັງບັນທຶກຂໍ້ມູນໂດຍອີງໃສ່ ອະນຸສັນຍາແຫ່ງເມືອງເອສຕັນບູ ແລະ ການສ້າງໂຄງການການຟື້ນຟູສຳລັບຜູ້ລອດຊີວິດຈາກການທໍລະມານແລະຄອບຄົວຂອງເຂົາເຈົ້າ. ຂໍ້ສະເໜີແນະຂອງ UPR ມີຜົນກະທົບຫລາຍຢ່າງໃນການສ້າງຄວາມອາດສາມາດໃຫ້ແກ່ຂະບວນການເຄື່ອນໄຫວເພື່ອປ້ອງກັນການທໍລະມານໃນຟີລິບ ປີນ.

### ແນວທາງເພື່ອຈັດຕັ້ງປະຕິບັດຕາມຂໍ້ສະເໜີແນະກ່ຽວກັບສິດທິທາງເສດຖະກິດ, ສັງຄົມແລະວັດທະນະທຳໃນສະວິດເຊີແລນ

ສະມາຄົມ Suisse Romande sur les droits Economique, sociaux Et Culturel ໄດ້ລິເລີ່ມຂະບວນການຕິດຕາມການຈັດຕັ້ງປະຕິບັດຕາມບົດສະຫລຸບທີ່ໄດ້ຈາກການທົບທວນກ່ຽວກັບສະວິດເຊີແລນຂອງຄ ະນະກຳມາທິການທາງດ້ານເສດຖະກິດ, ສັງຄົມແລະວັດທະນະທຳ. ສະມາຄົມແມ່ນໄດ້ ເຊີນພາກປະຊາສັງຄົມທີ່ຊຳນານໃນຂົງເຂດຕ່າງໆເຊິ່ງມັນກ່ຽວຂ້ອງກັບເນື້ອໃນບົດສະຫລຸບການທົບທວນເພື່ອປະກອບສ່ວນ ໃນການອະທິບາຍເຖິງເງື່ອນໄຂອັນໃດທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດຕາມແຕ່ລະຂໍ້ສະເໜີແນະ. ບັນດາປັດໄຈນຳເຂົ້າທັງໝົດແມ່ນໄດ້ຖືກລວບລວມເຂົ້າໃນຄູ່ມືທີ່ຊັດເຈນທີ່ໄດ້ຮັບການຮ່ວມມືແລກປ່ຽນແລະປຶກສາຫາລືໃນ ກອງປະຊຸມໂຕະມົນກັບພະນັກງານລັດຖະບານ.

ຈາກປະສົບການມັນໄດ້ສະແດງໃຫ້ເຫັນວ່າການຮ່ວມງານກັບສະມາຄົມແມ່ນມັນໄດ້ໃຫ້ຜົນງານທີ່ ເພິ່ງພໍໃຈ, ບົດຮຽນຈາກການປະຕິບັດໄລຍະຜ່ານມາຍັງຊ່ວຍໃນການຄົ້ນຫາສິ່ງທ້າທາຍບາງຢ່າງທີ່ມີທົ່ວໄປເຊັ່ນ:

- ສິ່ງທ້າທາຍກ່ຽວກັບຊັບພະຍາກອນແລະກຳນົດເວລາທີ່ມີຜົນຕໍ່ກັບວຽກປະສານງານ.

**ການຍອມຮັບບູລິມະສິດແລະພາລະບົດບາດ.**
**ການຮັກສາກາລະໂອກາດແລະຈຸດປະສົງທີ່ຕັ້ງໃຈຂອງສະມາຄົມ**
**ການໄດ້ຮັບຄວາມເປັນເອກະສັນອາດຊ່ວຍລົດບັນຫາບາງຢ່າງລົງ**

### ການຕໍ່ສູ້ກັບການຈຳແນກເຊື້ອຊາດໃນຍີ່ປຸ່ນ

ເຄືອຂ່າຍ NGO ຍີ່ປຸ່ນເພື່ອການລຶບລ້າງການຈຳແນກເຊື້ອຊາດ (ERD Net) ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2007 ຫຼັງຈາກການຢ້ຽມຢາມຂອງຂະບວນການພິເສດກ່ຽວກັບຮູບແບບການຈຳແນກສັນຊາດ, ເຊື້ອຊາດ, ການລັງກຽດ ຊາວຕ່າງດ້າວ ແລະ ຄວາມເປັນຊາດນິຍົມໃນປີ 2005.

ດ້ວຍການສະໜັບສະໜູນຂອງຂະບວນການເຄື່ອນໄຫວສາກົນເພື່ອຕໍ່ຕ້ານທຸກຮູບແບບຂອງການຈຳແນກເຊື້ອຊາດ (IMADR), ອົງການ ERD Net ໄດ້ຖືກຮັບພິຊອບ
ວຽກງານກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດ (ICERD) ໃນປະເທດຍີ່ປຸ່ນ. ERD Net ໄດ້ສົ່ງບົດລາຍງານຕິດຕາມກ່ຽວກັບປະເທດຍີ່ປຸ່ນໃຫ້ແກ່ຄະນະກຳມາທິການວ່າ ດ້ວຍການລົບລ້າງການຈຳແນກເຊື້ອຊາດ (CERD). ໃນເດືອນກຸມພາ 2010, ຄະນະຜູ້ແທນ ຂອງ ERD Net ໄດ້ເຂົ້າຮ່ວມກອງປະຊຸມແລະກ່າວບົດສະຫຼຸບຫຍໍ້ໃຫ້ແກ່ CERD. ໃນລະຫວ່າງເດືອນສິງຫາ 2010 ແລະ ມິຖຸນາ 2012, ອົງການ ERD Net ໄດ້ຈັດການພົບປະເພື່ອປຶກສາຫາລືກັບລັດຖະບານຫລາຍຄັ້ງ ແລະ ຈັດກອງປະຊຸມເພື່ອສົນສະນາກັບສະມາຊິກສະພາແຫ່ງຊາດໂດຍອີງຕາມບົດສະຫລຸບການທົບທວນຂອງ CERD.
ສະມາຊິກຂອງອົງການ ERD Net ຜູ້ໜຶ່ງໄດ້ກ່າວວ່າ
"ກິດຈະກຳຕ່າງໆທີ່ໄດ້ດຳເນີນມານີ້ແມ່ນໄດ້ເຮັດໃຫ້ພວກເຮົາສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ພາລະກິດການສະໜັບສະໜູນ ທັງໃນລະດັບທະປະຊາຊາດແລະໃນລະດັບຊາດ. ນອກຈາກນີ້
ເລື່ອງວຽກງານສາຍພົວພັນຮ່ວມມືຂອງພວກເຮົາກໍ່ຍັງໄດ້ຮັບການປັບປຸງໃຫ້ດີຂື້ນ. ຈາກປະສົບການທີ່ໄດ້ດຳເນີນງານມານີ້ ມັນຍັງໄດ້ເຮັດໃຫ້ພວກເຮົາສາມາດໄດ້ເຫັນຄວາມສຳຄັນຂອງສື່ມວນຊົນທີ່ເຂົ້າມາເປັນສ່ວນໜຶ່ງທີ່ເຮັດໃຫ້ເຮົາມີການດຳເນີນຢ່າງມີ ຄວາມຫ້າວຫັນ. ການໃສ່ໃຈຂອງສື່ມວນຊົນກ່ຽວກັບວິທີກົນໄກສາກົນຫລາຍເທົ່າໃດ
ມັນຍິ່ງຈະເຮັດໃຫ້ສະພາບການຂອງສິດທິມະນຸດໃນປະເທດຍີ່ປຸ່ນໄດ້ຮັບປະໂຫຍດຫລາຍເທົ່ານັ້ນ".

## 4.8. ການຮ່ວມງານ

ການເຮັດວຽກຮ່ວມກັບຄູ່ຮ່ວມງານໃນການຕິດຕາມກວດກາແລະການຈັດຕັ້ງປະຕິບັດສິດທິມະນຸດອາດຈະສ້າງຄຸນຄ່າທາງຍຸດທະສາດ ໄດ້. ຈາກປະສົບການທີ່ຜ່ານມາ ມັນໄດ້ສະແດງໃຫ້ເຫັນວ່າການມີສ່ວນຮ່ວມໃນຂະບວນການສິດທິມະນຸດຂອງ ສປຊ ນັ້ນແມ່ນເປັນໂອກາດສຳຄັນສຳລັບການໄດ້ມີຄູ່ຮ່ວມງານໃຫມ່ແລະໄດ້ການປະສານງານຮ່ວມມືກັບບັນດາພາກປະຊາສັງຄົມອື່ນ. ການສວຍໃຊ້ໂອກາດເຫຼົ່ານີ້ແລະການໃຊ້ ປະໂຫຍດຈາກການຮ່ວມມືດັ່ງກ່າວແມ່ນສາມາດສ້າງປະໂຫຍດໄດ້ຫລາຍຢ່າງ. ໃນເວລາທີ່ໄດ້ຄູ່ຮ່ວມງານ, ບັນດາຄວາມຫຼາກຫຼາຍຂອງຄູ່ຮ່ວມງານນັ້ນແມ່ນຖືວ່າມີຄວາມສຳຄັນໃນການສ້າງຫຼັກປະກັນໃຫ້ທຸກ ວັດຖຸປະສົງເປົ້າໝາຍຂອງວຽກງານຈະໄດ້ຮັບການສະໜັບສະໜູນ.
ການຮ່ວມງານກັບຄູ່ຮ່ວມງານແມ່ນສາມາດເຮັດໄດ້ໃນຫລາຍລະດັບ: ບາງຄູ່ຮ່ວມງານອາດມີວັດຖຸປະສົງດຽວກັນ, ບາງອົງການອາດຈະມີຊັບພະຍາກອນ, ບາງອົງການອາດມີຄວາມສາມາດສະເພາະຫຼືມີເຄືອຂ່າຍທີ່ກວ້າງ; ແລະ ອົງການອື່ນໆອາດເປັນຜູ້ມີຍຶດຕຳແໜ່ງສູງ ແລະ ມີອິດທິພົນໃນບາງດ້ານ.

ການຄັດເລືອກຜູ້ທີ່ມີສ່ວນຮ່ວມສຳຄັນເຊິ່ງອາດໄດ້ປະໂຫຍດບາງຢ່າງຈາກເຂົາເຈົ້າ ແລະ ມັນອາດຈະມີທັງຄວາມສ່ຽງແລະໄພຂົ່ມຂູ່ທີ່ຕາມມາ ແຕ່ວ່າມັນຈະເປັນພື້ນຖານສຳຄັນສຳລັບການພັດທະນາຍຸດທະສາດ, ແລະ ການກຳນົດພາລະບົດບາດ. ໃນການດຳເນີນງານທີ່ຍັງຕ້ອງການການສະໜັບສະໜູນ, ພາກປະຊາສັງຄົມແມ່ນມີປະສົບການຫລາກຫລາຍຈາກການຮ່ວມມືແລະສາມາດຊ່ວຍການປະສານງານກັບ :

- ພາກປະຊາສັງຄົມຢູ່ໃນລະດັບຕ່າງໆແລະໃນຂອບເຂດວຽກງານທີ່ສຳຄັນ-ຈາກອົງການຈັດຕັ້ງທີ່ຢູ່ໃນຊຸມຊົນຈົນເຖິງອົງການໃນລະດັບຊາດແລະສາກົນ;
- ຜູ້ໃຫ້ທຶນແລະປະຊາຄົມທາງການທູດ;
- ສື່ມວນຊົນ;
- ສະຫະພັນກຳມະບານ ແລະ ສະມາຄົມວິຊາຊີບ;
- ເຄືອຂ່າຍຕ່າງໆທີ່ສຳຄັນ;
- ໂຄງສ້າງລັດຖະບານ, ລວມມີສະພາແລະຄະນະກຳມາທິການລັດຖະສະພາທີ່ກ່ຽວຂ້ອງ;
- ສະຖາບັນສິດທິມະນຸດແຫ່ງຊາດ;
- ອົງການຈັດຕັ້ງສາກົນແລະພາກພື້ນ, ລວມທັງ ສປຊ ແລະ OHCHR ຢູ່ທີ່ພາກສະໜາມ;
- ສະຖາບັນທາງວິຊາການ; ແລະ
- ກົນໄກສິດທິມະນຸດ.

**ການເຕົ້າໂຮມຄູ່ຮ່ວມງານເພື່ອປົກປ້ອງແລະສົ່ງເສີມສິດທິຂອງເດັກນ້ອຍໃນປະເທດເນປານ.**

ໃນປະເທດເນປານ, ອົງການປົກປ້ອງເດັກນ້ອຍໄດ້ຈັດການຝຶກອົບຮົມໃຫ້ແກ່ອົງການພາກປະຊາສັງຄົມເຖິງ 138 ອົງການກ່ຽວກັບຂະບວນການຂອງ UPR.

ອົງການດັ່ງກ່າວໄດ້ສະໜັບສະໜູນຂໍ້ມູນໃຫ້ແກ່ພາກສ່ວນຕ່າງໆແລະສະໜັບສະໜູນການປະສານງານໃນລະດັບຊາດແລະສາກົນ. ຜົນທີ່ໄດ້ກໍ່ຄືທາງ UPR ໄດ້ມີຂໍ້ມູນ ແລະສາມາດສ້າງຂໍ້ສະເໜີແນະໄດ້ເຖິງ 34 ຂໍ້, ແລະ ທາງລັດຖະບານເນປານກໍ່ໄດ້ໃຫ້ການຮັບຮອງເອົາ ຄໍາແນະນໍາທີ່ວ່ານັ້ນເຖິງ 31 ຂໍ້.

ອົງການປົກປ້ອງເດັກນ້ອຍໄດ້ສ້າງແຜນຍຸດທະສາດການຕິດຕາມຂະບວນການ UPR ໃຫ້ແກ່ບັນດາພາກສ່ວນທີ່ກ່ຽວຂ້ອງລະດັບຊາດຕ່າງໆ, ລວມມີເຄືອຂ່າຍພາກປະຊາສັງຄົມ, ຄະນະກໍາມາທິການສິດທິມະນຸດແຫ່ງຊາດ, ສະຖານທູດແລະສື່ມວນຊົນ, ເພື່ອເສີມຂະຫຍາຍຄວາມເປັນເຈົ້າໃນຂະບວນການ UPR ແລະການສ້າງຄວາມເຂັ້ມແຂງໃນການມີສ່ວນຮ່ວມແລະມີຄວາມຮັບຜິດຊອບໃນລະດັບຊາດ.

ຂະບວນການ UPR ປຽບເໝືອນເປັນເຄື່ອງມືໃນການເຕົ້າໂຮມພາກປະຊາສັງຄົມໃນປະເທດເນປານເພື່ອດໍາເນີນງານໃນເປົ້າໝາຍດຽວກັນ. ການເຕົ້າໂຮມກອງປະຊຸມທະວິພາຄີໃນລະດັບສູງແລະກອງປະຊຸມວຽກງານການປຸກລະດົມຮ່ວມກັນເພື່ອປະຊຸມຮ່ວມກັບບັນດາພະນັກງານລັດຖະບານ ແລະ ສະຖານທູດ ແມ່ນມັນໄດ້ສ້າງຄວາມສົນໃຈໃຫ້ສື່ມວນຊົນໃນການປູກຈິດສະນຶກກ່ຽວກັບສິດທິເດັກເຊິ່ງມັນສະແດງອອກໃນການຂໍສໍາພາດທາງໂທລະພາບແລະສະເໜີຂ່າວສານກ່ຽວກັບ UPR. ການດຶງເອົາ UPR ໃຫ້ມີສ່ວນຮ່ວມໃນການກິດຈະກໍາສະເພາະໃດໜຶ່ງທີ່ກ່ຽວຂ້ອງກັບເດັກນ້ອຍເຊັ່ນ ວັນສິດທິເດັກແມ່ນຈະເປັນຜົນດີໃນການສ້າງຄວາມສົນໃຈ ໃຫ້ແກ່ພາກສ່ວນສື່ມວນຊົນ.

ອົງການປົກປ້ອງເດັກນ້ອຍຮ່ວມກັບສະມາຄົມສິດທິຂອງເດັກແມ່ນມີຄວາມສໍາຄັນໃນການກະຕຸ້ນໃຫ້ຄະນະກໍາມາທິການສິດທິມະນຸດແຫ່ງຊາດຕ້ອງໄດ້ນໍາເອົາຂະບວນການກວດກາ ແລະ ການຕິດຕາມຄໍາແນະນໍາຂອງ UPR ເຂົ້າໃນວຽກງານພາລະໜ້າທີ່ຂອງຕົນ. ຄະນະກໍາມາທິການສິດທິມະນຸດແຫ່ງຊາດແມ່ນມີຄວາມສໍາຄັນຫລາຍໃນການຮັບປະກັນຂໍ້ມູນຂ່າວສານກ່ຽວ ກັບສະຖານະໃນການຈັດຕັ້ງປະຕິບັດຕາມຄໍາແນະນໍາທີ່ມີ ແລະ ພວມດໍາເນີນການຢູ່.

ຜົນທີ່ໄດ້ຈາກຄວາມພະຍາຍາມໃນການເຮັດວຽກຮ່ວມກັນ, ມັນໄດ້ເຮັດໃຫ້ຄໍາແນະນໍາຂອງ UPR 108.4 ໄດ້ມີ "ການຮັບຮອງມິຕິກໍານະໂຍບາຍຂອງເດັກນ້ອຍ, ເຊິ່ງລວມມີກົດໝາຍວ່າດ້ວຍສິດທິເດັກ, ລະບຽບການການສຶກສາ, ນະໂຍບາຍການປົກປ້ອງເດັກນ້ອຍ, ແລະ ມາດຕະຖານຂັ້ນພື້ນຖານສໍາລັບສະຖານທີ່ດູແລເດັກນ້ອຍທີ່ລໍຄອຍມາເປັນເວລາດົນນານ" ໄດ້ຮັບການຈັດຕັ້ງປະຕິບັດໃນບາງສ່ວນ.

ທັງນະໂຍບາຍເດັກແຫ່ງຊາດແລະມາດຕະຖານສໍາລັບສະຖານທີ່ດູແລເດັກແມ່ນໄດ້ຮັບການຮັບຮອງເອົາໃນປີ 2012. ນອກນີ້ທາງຄະນະລັດຖະບານຍັງໄດ້ຮັບຮອງເອົາສົນທິສັນຍາວ່າດ້ວຍສິດທິຂອງເດັກນ້ອອີກດ້ວຍ.

ການກໍານົດວຽກງານຮ່ວມກັບຄູ່ຮ່ວມງານແມ່ນສາມາດເລີ່ມເປັນຮູບເປັນຮ່າງຂຶ້ນມາ. ຕົວຢ່າງ, ບົດຮຽນທີ່ຜ່ານມາໃນປະເທດເນປານທີ່ອະທິບາຍມາຂ້າງເທິງນີ້ແມ່ນສາມາດຖືເປັນບົດຮຽນທີ່ສໍາຄັນກ່ຽວກັບກາສົ່ງເສີມແລະປົກປ້ອງເດັກນ້ອຍໄດ້.

ການເຕົ້າໂຮມຄູ່ຮ່ວມກ່ຽວກັບສິດທິຂອງເດັກນ້ອຍໃນປະເທດເນປານ




**4.9. ການເຜີຍແຜ່ ແລະການປູກຈິດສໍານຶກ**

ການເຜີຍແຜ່ແລະປູກຈິດສໍານຶກກ່ຽວກັບຜົນການທົບທວນແລະຂໍ້ສະເໜີແນະຂອງກົນໄກສິດທິມະນຸດແມ່ນເປັນແນວທາງທີ່ມີປະໂຫຍດສໍາລັບການສົ່ງເສີມການຈັດຕັ້ງປະຕິບັດຕາມພັນທະດ້ານສິດທິມະນຸດຂອງລັດພາຄີ.

ໃນຫຼາຍໆກໍລະນີ, ການຈັດຕັ້ງປະຕິບັດແມ່ນເປັນໄປໄດ້ເພາະວ່າມີຫຼາຍໆຜູ້ທີ່ຖືສິດແມ່ນມີຄວາມຮູ້ໃນການຮຽກຮ້ອງສິດທີ່ພວກເຂົາມີ, ຫຼືອາດເນື່ອງມາຈາກວ່າເຈົ້າໜ້າທີ່ທີ່ກ່ຽວຂ້ອງນັ້ນໄດ້ຮູ້ວ່າຄວນດໍາເນີນການປະຕິບັດແນວໃດເພື່ອບໍ່ໃຫ້ຂັດກັບພັນທະທີ່ມີ. ເພື່ອປິດຫຼືຫຼຸດຊ່ອງຫວ່າງດ້ານຄວາມຮັບຮູ້ກ່ຽວກັບສິດທິມະນຸດໂດຍວິທີການປູກຈິດສໍານຶກແລະເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສິດທິມະນຸດນັ້ນແມ່ນເປັນທົບທາງທີ່ມີປະສິດທິຜົນເພື່ອສົ່ງເສີມການຈັດຕັ້ງປະຕິບັດ.

ຈາກການແປເປັນພາສາທ້ອງຖິ່ນຈົນເຖິງບັນດາຮູບແບບຕ່າງໆຂອງສື່ມວນຊົນແລະການດົນນະລົງທາງສື່ມວນຊົນ, ພາກປະຊາສັງຄົມແມ່ນມີຊັບພະຍາກອນແລະຄວາມຄິດສ້າງສັນໃນການເຜີຍແຜ່ຜົນຂອງການທົບທວນແລະບັນດາຄໍາແນະນໍາຂອງກົນໄກສິດທິມະນຸດ.

ການສ້າງເອກະສານແລະຂໍ້ມູນຂ່າວສານທີ່ຄົນພິການສາມາດເຂົ້າເຖິງແມ່ນຄວນຈະໄດ້ຮັບການປະສົມປະສານເຂົ້າໃນແຜນງານເພື່ອການເຜີຍແຜ່ຕໍ່ໄປ.

**ການນຳໃຊ້ 'ກົດໝາຍວ່າດ້ວຍການເຂົ້າເຖິງຂໍ້ມູນ'**
**ເພື່ອເຜີຍແຜ່ຄຳແນະນຳຂອງອະນຸກຳມາທິການກ່ຽວກັບການປ້ອງກັນການທໍລະມານໃນປະເທດບຣາຊິວ**

ໃນການຢ້ຽມຢາມຄັ້ງທຳອິດຂອງອານຸກຳມາທິການທີ່ປະເທດບຣາຊິວໃນປີ 2011, ອະນຸກຳມາທິການກ່ຽວກັບການປ້ອງກັນການທໍລະມານ (SPT) ແມ່ນໄດ້ກວດສອບສະຖານະການຂອງການທໍລະມານແລະການຮັກສາຜູ້ເຈັບປ່ວຍຢູ່ໃນສະຖານທີ່ກັກຂັງຂອງປະເທດ. ຫລັງຈາກນັ້ນອານຸກຳມາທິການ SPT ໄດ້ກະກຽມບົດລາຍງານໃຫ້ແກ່ລັດຖະບານຂອງປະເທດບຣາຊິວທີ່ມີທັງຂໍ້ສະເໜີກ່ຽວກັບການປະຕິບັດຕໍ່ການທໍລະມານໃນປະເທດ. ອີງຕາມອະນຸສັນຍາຂອງສົນທິສັນຍາວ່າດ້ວຍການຕໍ່ຕ້ານການທໍລະມານແລະຕ້ານຮູບແບບອື່ນໆທີ່ໄຮ້ມະນຸດສະທຳ ຫຼື ການກະທຳທີ່ປ່າເຖື່ອນ (OPCAT), ບົດລາຍງານທີ່ວ່ານີ້ຈະໄດ້ຖືກເຜີຍແຜ່ຕໍ່ສາທາລະນະຖ້າຫາກວ່າລັດຖະບານໄດ້ຕົກລົງເຫັນດີ ເຖິງວ່າພາກປະຊາສັງຄົມຈະບໍ່ເຫັນດີກໍ່ຕາມ, ບົດລາຍງານນັ້ນຍັງຈະຖືກຮັກສາເປັນຄວາມລັບຢູ່.

ໃນເດືອນພຶດສະພາ 2012, ປະເທດບຣາຊິວໄດ້ຮັບຮອງເອົາກົດໝາຍວ່າດ້ວຍການເຂົ້າເຖິງຂໍ້ມູນຂ່າວສານຂອງສາທາລະນະ. ໃນມື້ທີ່ກົດໝາຍມີຜົນບັງຄັບໃຊ້, ອົງການ Conectas Direitos Humanos (Conectas) ໄດ້ຍື່ນຄຳຮ້ອງສະເໜີຂໍໃຫ້ລັດຖະບານບຣາຊິວໃຫ້ເຮັດບົດລາຍງານ SPT ເປີດເຜີຍຕໍ່ສາທາລະນະແລະທຸກຄົນສາມາດເຂົ້າເຖິງໄດ້. ພາຍໃນກຳນົດເວລາທີ່ກຳນົດໃນກົດໝາຍ, ລັດຖະບານບຣາຊິວກໍ່ໄດ້ມີການດຳເນີນງານ ແລະຈັດພິມບົດລາຍງານທີ່ລວມມີຂໍ້ສະເໜີແນະ ແລະ ແປເປັນພາສາປອກຕຸຍການເພື່ອໂພສລົງໃນເວັບໄຊ້ຂອງກະຊວງການສິດທິມະນຸດ.

ອົງການ Conectas ເຫັນວ່າມັນມີຄວາມສຳຄັນທີ່ບົດລາຍງານ SPT ຈະໄດ້ຮັບການເຜີຍແຜ່ຕໍ່ສາທາລະນະທີ່ເປັນພາສາທາງການຂອງປະເທດຕົນ. ປາດສະຈາກພາກປະຊາສັງຄົມແລະພາກສ່ວນທີ່ກ່ຽວຂ້ອງຕ່າງໆ, ການຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ສະເໜີແນະຂອງ SPT ຄົງຈະບໍ່ສຳເລັດ. ອົງການ Conectas ໃຫ້ທັດສະນະວ່າ "ນີ້ແມ່ນບາດກ້າວພື້ນຖານເພື່ອປູກຈິດສຳນຶກກ່ຽວກັບສະພາບການທີ່ມີການກະທຳດ້ານການທໍລະມານໃນປະເທດ. ທາງອົງການເຫັນວ່າບັນຫາຂອງການທໍລະມານທີ່ເກີດຂື້ນໃນປະເທດບຣາຊິນນັ້ນມັນກ່ຽວເນື່ອງມາຈາກການຂາດມາດຕະການປ້ອງກັນທີ່ມີປະສິດທິພາບແລະເປັນຕົ້ນແມ່ນການຂາດມາດຕະການທີ່ຈະເອົາຜູ້ກະທຳຜິກມາຮັບຜິດຊອບ, ການເຂົ້າເຖິງກົດໝາຍວ່າດ້ວຍຂໍ້ມູນຂ່າວສານແມ່ນເປັນແນວທາງທີ່ມີປະສິດທິພາບເພື່ອຮັບປະກັນໃຫ້ການປະເມີນຂອງ SPT ໄດ້ມີໃຫ້ສາທາລະນະໄດ້ຮັບຮູ້, ແລະສາມາດນຳໃຊ້ຢ່າງກວ້າງຂວາງເພື່ອຕໍ່ສູ້ກັບການຖືກທໍລະມານໃນປະຈຸບັນໂດຍພາກສ່ວນທີ່ກ່ຽວຂ້ອງທັງໝົດ ",.

### ການຖ່າຍທອດສົດທາງເວບກ່ຽວກັບກອງປະຊຸມຂອງຄະນະກໍາມາທິການຕ້ານການທໍລະມານໃນປະເທດໄອແລນ

ໃນປີ 2011, ສະພາໄອແລນເພື່ອສິດເສລີພາບ (ICCL) ແລະໜ່ວຍງານປະຕິຮູບກົດໝາຍອາຍາໄອແລນ (IPRT) ແມ່ນໄດ້ກະກຽມບົດລາຍງານຮ່ວມຕິດຕາມສໍາລັບການປະກົດຕົວເປັນຄັ້ງທໍາອິດຂອງປະເທດໄອແລນ ຕໍ່ໜ້າຄະນະກໍາມາທິການຫະສະປະຊາຊາດຕໍ່ຕ້ານການທໍລະມານ (CAT). ສະພາການຟື້ນຟູສາກົນສໍາລັບຜູ້ຖືກເຄາະຮ້າຍຈາກການທໍລະມານ (IRCTV), ICCL ແລະ IPRT ໄດ້ຮ່ວມກັນຈັດການຖ່າຍທອດສົດເປັນຄັ້ງທໍາອິດຂອງກອງປະຊຸມ CAT ທີ່ໄດ້ອອກອາກາດໃນຫລາຍສະຖານີຂອງ ພາກປະຊາສັງຄົມ ແລະ ຂອງອົງການນິຕິບັນຍັດໃນປະເທດ.

ຜູ້ແທນຂອງ ICCL ໄດ້ກ່າວວ່າ "ພວກເຮົາໄດ້ເຜີຍແຜ່ບົດລາຍງານຕິດຕາມແລະຂໍ້ສະເໜີແນະຂອງ CAT ຢ່າງກວ້າງຂວາງ, ເຊິ່ງມັນໄດ້ຮັບຄວາມສົນໃຈຢ່າງຫລວງຫລາຍຈາກໜັງສືພິມທີ່ໃຫຍ່ໆແລະສະຖານີວິທະຍຸຕ່າງໆ. ລາຍການສະຖານີ ໂທລະທັດທີ່ມີຊື່ວ່າວຽກງານສາທາລະນທີ່ສໍາຄັນແມ່ນໄດ້ ອອກອາກາດກ່ຽວກັບຂະບວນການທົບທວນກວດກາປະເທດໄອແລນທີ່ໄດ້ຈາກການຖ່ານທອດສົດທາງ ເວບຂອງພວກເຮົາ. ການຖ່າຍທອດ ອອກອາກາດນັ້ນແມ່ນເປັນຄັ້ງທໍາອິດທີ່ຊາວໄອແລນໄດ້ເບິ່ງຂະບວນການ ດໍາເນີນງານຂອງອົງກອນສິດ ທິມະນຸດແຫ່ງ ສປຊ".

ການປະກົດຕົວຂອປະເທດໄອແລນຕໍ່ໜ້າ CAT ແລະ ຂໍ້ສະເໜີແນະໃນທີ່ປະຊຸມນັ້ນແມ່ນໄດ້ ມີສ່ວນເຮັດໃຫ້ເກີດການປ່ຽນແປງຫລາຍຢ່າງໃນໄອແລນ. ການປະຕິຮູບສະຖານທີ່ກັກຂັງແມ່ນໄດ້ຮັບ ການໃສ່ໃຈຈາກລັດຖະບານຫລາຍຂື້ນ ແລະ ໜ່ວຍງານຍຸດທະສາດການທົບທວນທາງອາຍາກໍ່ໄດ້ຮັບການ ສ້າງຕັ້ງຂື້ນ.[9] ຄະນະກໍາມາທິການຮຽກຮ້ອງໃຫ້ມີການຕິດຕາມກວດກາກ່ຽວກັບ 4 ຂໍ້ສະເໜີແນະສະເພາະພາຍໃນ 12 ເດືອນ, ລວມທັງຕິດຕາມເບິ່ງຄວາມລົ້ມເຫຼວຂອງລັດກ່ຽວກັບປະສິດທິພາບຂອງການສືບສວນສອບສວນບັນຫາການກັກຂັງແມ່ຍິງຂອງຮ້ານຊັກລີດ Magdalene. ໃນເດືອນກຸມພາ 2013, ບົດລາຍງານທາງການກ່ຽວກັບການມີສ່ວນຮ່ວມພາກລັດໃນຮ້ານຊັກລີດ Magdalene ກໍ່ໄດ້ຮັບການພິມເຜີຍ ແຜ່.[10] ນັບຕັ້ງແຕ່ນັ້ນມາ, ທາງລັດຖະບານກໍ່ໄດ້ອອກໜັງສືຂໍໂທດຢ່າງເປັນທາງການຕໍ່ແມ່ຍິງຮ້ານຊັກລີດ Magdalene ແລະ ໄດ້ດໍາເນີນການໄປເປັນທີ່ໜ້າພໍໃຈ.

### ການຖ່າຍທອດທາງເວບ ແລະ ວິດີໂອຕ່າງໆ

ກອງປະຊຸມສະພາສິດທິມະນຸດແລະຂອງຂະບວນການທົບທວນແມ່ນຈະໄດ້ຮັບການຖ່າຍທອດສົດທາງເວບ ແລະ ພາບຈາກກອງປະຊຸມກໍ່ຈະຖືກເກັບຮັກສາໄວ້ໃນເວບໂທລະພາບຂອງ ສປຊ. [11] ພາກປະຊາສັງຄົມແມ່ນສາມາດບັນທຶກພາບ ແລະ ອອກອາກາດທາງເວບໄດ້. ກຸ່ມຂອງອົງການ NGO ໃນນະຄອນເຈນີວາຈະເປັນຜູ້ປະສານງານການອອກອາກາດຂອງທຸກກອງປະຊຸມທີ່ກ່າວມານີ້. www.treatybodywebcast.org.

ວິດີໂອຕ່າງຂອງ OHCHR ແມ່ນສາມາດເບິ່ງໃນເວບຂອງ OHCHR ແລະ ຂອງເວບຕ່າງໆໄດ້.[12]

---

9 ຮຽກປະຊຸມໂດຍລັດຖະມົນຕີກະຊວງການຍຸຕິທໍາ, ຄວາມສະເໝີພາບແລະປ້ອງກັນ, ໜ່ວຍງານຍຸດທະສາດທົບທວນທາງອາ ຍາປະກອບດ້ວຍຜູ້ຊ່ຽວຊານ 12 ທ່ານທີ່ເປັນຕົວແທນທາງຕຸລາການ, ຕໍາຫຼວດ, ຂະບວນການພາກໂທດ, ພະນັກງານປະຈໍາຄຸກ. ກຸ່ມທີ່ໃຫ້ຂໍ້ສະເໜີແນະກ່ຽວກັບການສືບຕໍ່ລະບົບກົດຫມາຍອາຍາທີ່ສໍາຄັນ ແລະ ໝັ້ນຄົງ, ລວມມີການເຄົາລົບຕໍ່ພັນທະສາກົນຂອງປະເທດໄອແລນ. ສໍາລັບຂໍ້ມູນເພີ່ມເຕີມໃຫ້ເບິ່ງ www.justice.ie

10 ເບິ່ງບົດລາຍງານໄດທີ່ www.justice.ie

11 http://webtv.un.org/

12 ເບິ່ງຂໍ້ມູນຂອງ OHCHR ກ່ຽວກັບສື່ມວນຊົນໄດ້ທີ່ www.ohchr.org

### 4.10. ການປຸກລະດົມ

ການປຸກລະດົມທາງສິດທິມະນຸດສາມາດຈັດເປັນໃນຮູບແບບການສື່ສານທີ່ມີຈຸດປະສົງເພື່ອປັບປຸງການຈັດຕັ້ງປະຕິບັດສິດທິມະນຸດ. ການປຸກລະດົມທາງຂໍ້ຄວາມການສື່ສານທີ່ມີປະສິດທິພາບກ່ຽວກັບການແຈ້ງໃຫ້ຮູ້ສະຖານະການສິດທິມະນຸດແລະສິ່ງທີ່ໜ້າເປັນຫວ່ງຕ່າງໆນັ້ນ, ຈຸດປະສົງກໍແມ່ນເພື່ອຊັກຊວນໃຫ້ຄົນອື່ນເຂົ້າຮ່ວມດຳເນີນການຢ່າງໃດຢ່າງໜຶ່ງ.

ການປຸກລະດົມທາງຂໍ້ຄວາມການສື່ສານທີ່ມີປະສິດທິພາບແມ່ນ:

- ອີງໃສ່ຂໍ້ເທັດຈິງ ແລະ ຕົວເລກທີ່ຜ່ານການກວດສອບແລ້ວ
- ເລື່ອງທີ່ເກີດຕາມຄວາມເປັນຈິງ, ຕົວຢ່າງສິ່ງທີ່ເກີດ
- ແບບງ່າຍໆ ແລະ ຕົງປະເດັນ
- ໃຊ້ພາສາທີ່ເໝາະສົມ (ໃຊ້ແບບວິທີບັນຍາຍທາງສິດທິມະນຸດຫລາຍກ່ວາແບບລັກສະນະທາງດ້ານການເມືອງ; ຫຼີກເວັ້ນການໃຊາພາສາຄຳເວົ້າທີ່ບໍ່ເໝາະສົມ).
- ລາຍງານຂໍ້ມູນທີ່ຫນ້າເຊື່ອຖື
- ມີການຮ້ອງຂໍໃຫ້ດຳເນີນການທີ່ຈະແຈ້ງ
- ສອດຄ່ອງກັບກຸ່ມຄົນເປົ້າຫມາຍ
- ຕຽມພ້ອມກັບການໂຕ້ຕອບ
- ບົດສະຫລຸບແລະຄຳແນະນຳຂອງກົນໄກສິດທິມະນຸດແມ່ນສາມາດເຮັດໃຫ້ການປຸກລະດົມໄດ້ຮັບຜົນ.

  ອົງການພາກປະຊາສັງຄົມຄວນກຳນົດບູລິມະສິດທີ່ມີໃນບົດສະຫລຸບ ແລະ ຂໍ້ສະເໜີແນະຕ່າງໆເພື່ອເອົາໄປໃຊ້ໃນວຽກງານການປຸກລະດົມໄດ້ຢ່າງມີປະສິດທິພາບ.

**ການປຸກລະດົມ, ການປູກຈິດສຳນຶກແລະການຕິດຕາມກວດກາການມີສ່ວນຮ່ວມຂອງຄົນພິການໃນການເລືອກຕັ້ງໃນຕູນິເຊຍ.**

ບົດສະຫລຸບການທົບທວນຂອງ CRPD ປີ 2011
ແມ່ນມີຄຳແນະນຳຫລາຍຢ່າງກ່ຽວກັບການປະຕິຮູບປະຊາທິປະໄຕແລະຕ້ອງຮັບປະກັນວ່າຄົນພິການຈະໄດ້ຖືກບັນຈຸເຂົ້າໃນການຮ່າງຖະທຳມະນູນອັນໃຫມ່ທີ່ມີການຮັບຮູ້ສິດທິຂອງຄົນພິການຫລາຍຂຶ້ນໂດຍສະເພາະແມ່ນສິດໃນການລົງຄະແນນສຽງບົນພື້ນຖານຄວາມເທົ່າທຽມກັນກັບຄົນອື່ນໆ.

ອົງການຈັດຕັ້ງແຫ່ງຕູເນເຊຍເພື່ອການສົ່ງເສີມສິດທິຂອງຄົນພິການ (Organisation tunisienne de défense des droits des personnes handicapées- OTDDPH)
ເປັນອົງການຂອງຄົນພິການທີ່ໄດ້ຮັບການສ້າງຕັ້ງຂຶ້ນຈາກການປະຕິວັດ, ໄດ້ດຳເນີນກອງປະຊຸມເພື່ອປູກຈິດສຳນຶກເປັນເວລາຫລາຍຄັ້ງໃນຫລາຍສະຖານທີ່ໂດຍມີຈຸດປະສົງເພື່ອຢາກສົ່ງເສີມຄົນພິການໃຫ້ມີສ່ວນຮ່ວມໃນການເລືອກຕັ້ງທີ່ຈະມາເຖິງນີ້. ສະມາຊິກຫລາຍທ່ານຂອງ OTDDPH ແມ່ນເປັນຜູ້ສັງເກດການການເລືອກຕັ້ງຢ່າງເປັນທາງການ. OTDDPH ໄດ້ຮັບອານຸຍາດໃຫ້ສັງເກດການເລືອກຕັ້ງຕາມສະຖານທີ່ຕ່າງໆເຖິງ 100 ບ່ອນລົງຄະແນນສຽງໂດຍມີຈຸດປະສົງເພື່ອປະເມີນການເຄົາລົບນັບຖືຕາມມາດຕະຖານການມີສ່ວນຮ່ວມກໍ່ຄືມາດຕະການການມີສ່ວນຮ່ວມຂອງຄົນທີ່ພິການໃນຂະບວນການເລືອກຕັ້ງ.

ອີງຕາມການເລືອກຕັ້ງ ສະພາລັດຖະທຳມະນູນແຫ່ງຊາດທີ່ເຮັດໜ້າທີ່ໃນການຮ່າງລັດຖະທຳມະນູນໃໝ່, OTDDPH ກໍ່ໄດ້ສວຍໂອກາດໃນການລະດົມໃຫ້ລັດຖະສະພາເອົາສິດທິຂອງຄົນພິການບັນຈຸໃສ່ໃນລັດຖະທຳມະນູນ. ອີງຕາມການປຸກລະດົມກ່ຽວກັບຄຳແນະນຳຂອງຄະນະກຳມາທິການ CRPD ແລະ CRPD, ອົງການ OTDDPH ໄດ້ກ່າວໃນກອງປະຊຸມຂອງຄະນະກຳມາທິການສະພາພ້ອມທັງຊ່ວຍຮ່າງບົດບັນຍັດໂດຍການມີສ່ວນຮ່ວມຂອງສະມາຊິກຄະນະກຳອາທິການເພື່ອຊອກຫາຄວາມເປັນໄປໄດ້ທີ່ອາດຈະເອົາສິດທິຂອງຄົນພິການເຂົ້າໃນລັດຖະທຳມະນູນໄດ້.

**ການປຸກລະດົມເພື່ອຄວາມເປັນເອກະລາດຂອງອົງການຕຸລາການໃນກົວເຕມາລາ**

ນັກລາຍງານພິເສດກ່ຽວກັບເອກະລາດຂອງຜູ້ພິພາກສາແລະທະນາຍຄວາມແມ່ນໄດ້ລົງຢ້ຽມຢາມກົວເຕມາລາໃນລະຫວ່າງໄລຍະເວລາການເລືອກຕັ້ງຂອງສານສູງ.
ໃນລະຫວ່າງການດຳເນີນການເລືອກຕັ້ງຂອງອົງການໄອຍະການທີ່ຕໍ່ເນື່ອງມາຈາກການເລືອກຕັ້ງຂອງຜູ້ພິພາກສາ, ພາກປະຊາສັງຄົມໃນຖານະທີ່ເປັນສ່ວນຫນຶ່ງຂອງວຽກງານການປຸກລະດົມກໍໄດ້ໃຫ້ຂໍ້ມູນຫລາຍຢ່າງແກ່ນັກລາຍງານພິເສດກ່ຽວກັບເງື່ອນໄຂຄວາມເປັນເອກະລາດ, ຄວາມໂປ່ງໃສ, ແລະ ຈັນຍາບັນທາງວິຊາຊີບ. ສຳນັກງານ OHCHR ໃນກົວເຕມາລາກໍ່ໄດ້ປະກອບສ່ວນທາງດ້ານກົນໄກມາດຕະຖານສາກົນທີ່ລວມມີທັງຂໍ້ສະເຫນີແນະຂອງນັກງາຍງານພິເສດ. ສ່ວນພາກປະຊາສັງຄົມກໍ່ໄດ້
ນຳເອົາກົນໄກມາດຕະຖານທີ່ວ່ານີ້ໄປນຳໃຊ້ເພື່ອສ້າງຄວາມເຂັ້ມແຂງວຽກງານປຸກລະດົມຂອງຕົນຮ່ວມກັບຄະນະກຳມາທິການທີ່ຖືກເລືອກຕັ້ງຂຶ້ນມາເພື່ອວ່າທາງຄະນະຈະມີຄຳແນະນຳທີ່ດີໃນການຄັດເລືອກຜູ້ທີ່ມີມາດຖານທີ່ສຸດໃຫ້ແກ່ໄອຍະການປະຊາຊົນ. ນອກນີ້ທາງພາກປະຊາສັງຄົມກໍ່ຍັງນຳໃຊ້ຄຳແນະນຳທີ່ໄດ້ຈາກຄະນະກຳມາທິການຂ້າງເທິງນັ້ນໄປເຜີຍແຜ່ຕໍ່ສາທາລະນະເພື່ອວ່າລະບົບນິຕິກຳຕ່າງໆຈະມີການປ່ຽນແປງ ແລະຈະມີການໃຫ້ອິດສະຫລະແກ່ອົງການຕຸລາການ.

### 4.11. ການສ້າງຄວາມອາດສາມາດແລະການສ້າງຄວາມເຂັ້ມແຂງ

ບົດສະຫລຸບແລະຄຳແນະນຳຂອງກົນໄກສິດທິມະນຸດຈາກການທົບທວນອາດຈະຊີ້ໃຫ້ເຫັນວ່າ ຍັງມີຊ່ອງຫວ່າງຫລາຍຢ່າງທີ່ທາງເຈົ້າໜ້າທີ່ລັດ ຫຼື ພາກປະຊາສັງຄົມຍັງຂາດຄວາມອາດສາມາດຢູ່ , ດັ່ງນັ້ນມັນຈຶ່ງເປັນການຈຳກັດຄວາມສາມາດໃນການຈັດຕັ້ງປະຕິບັດສິດທິມະນຸດ. ໃນຂະນະດຽວກັນ ຄຳແນະນຳບໍ່ພຽງແຕ່ສາມາດບົ່ງບອກໃຫ້ເຫັນບັນດາຊ່ອງຫວ່າງຕ່າງໆ, ແຕ່ຍັງມີແນວທາງໄວ້ໃຫ້ແກ້ໄຂບັນຫາດັ່ງກ່າວອີກດ້ວຍ. ບາງກໍລະນີ, ພາກປະຊາສັງຄົມອາດຈະໄດ້ຮັບການຂໍໃຫ້ຊ່ວຍປິດຫຼືຫຼຸດຊ່ອງຫວ່າງທີ່ວ່າດັ່ງກ່າວເພາະວ່າພາກປະຊາສັງຄົມແມ່ນມີປະສົບການແລະຄວາມຊຳນານໃນການຝຶກອົບຮົມສິດທິມະນຸດໃຫ້ແກ່ທັງພາກປະຊາສັງຄົມເອງ ແລະໃຫ້ແກ່ເຈົ້າໜ້າທີ່ພາກລັດ.

ຂໍ້ສະເໜີແນະອາດຈະສະທ້ອນໃຫ້ເຫັນຊ່ອງຫວ່າງທີ່ຖືກແກ້ໄຂລຽບລ້ອຍແລ້ວໂດຍຜ່ານກິດຈະກຳການສ້າງຄວາມອາດສາມາດທີ່ທາງພາກປະຊາສັງຄົມເປັນຜູ້ດຳເນີນການປະຕິບັດ. ໃນກໍລະນີນີ້, ຂໍ້ສະເໜີແນະກໍ່ຈະຍິ່ງມີຄວາມສຳຄັນໃນການປະຕິບັດຂອງພາກປະຊາສັງຄົມໃນພາລະບົດບາດການສ້າງຄວາມອາດສາມາດ. ໃນກໍລະນີອື່ນໆ, ຂໍ້ສະເໜີແນະອາດຈະຊີ້ໃຫ້ເຫັນເຖິງຊ່ອງຫວ່າງທີ່ຍັງບໍ່ໄດ້ຮັບການແກ້ໄຂຈາກແຜນງານທີ່ມີຢູ່ແລ້ວ. ພາກປະຊາສັງຄົມທີ່ເຂົ້າຮ່ວມໃນວຽກງານການຕິດຕາມກວດກາແມ່ນຈະໄດ້ປະເມີນເບິ່ງຄວາມເປັນໄປໄດ້ຂອງກິດຈະກຳການສ້າງຄວາມອາດສາມາດທີ່ຈະນຳໃຊ້ຕໍ່ໄປເຊັ່ນ:

- ປະເມີນເບິ່ງວ່າພາກປະຊາສັງຄົມຈະມີຄວາສາມາດທີ່ຈະຕອບສະໜອງຄວາມຮູ້ຄວາມສາມາດ, ຊັບພະຍາ ກອນ ແລະ ໝາກຜົນທີ່ຄາດຫວັງຈາກກິດຈະກຳການສ້າງຄວາມອາດສາມາດນັ້ນໄດ້ຫຼືບໍ່, ວິເຄາະຫາວິທີການໃໝ່ໃນການສ້າງຄວາມອາດສາມາດທີ່ຈະເຂົ້າກັນກັບ 'ບູລິມະສິດ ແລະ ແຜນງານຂອງພາກປະຊາສັງຄົມ;
- ດຳເນີນການປະເມີນຄວາມຕ້ອງການຂອງສະຖາບັນແລະຂອງອົງການຈັດຕັ້ງຕ່າງໆທີ່ມີໃນເປົ້າໝາຍ, ລວມທັງຄວາມເຕັມໃຈທີ່ຈະແກ້ໄຂບັນຫາຊ່ອງຫວ່າງເພື່ອປັບປຸງການຈັດຕັ້ງປະຕິບັດສິດທິມະນຸດ; ແລະ
- ວິເຄາະສ່ວນປະກອບຂອງໂຄງການສ້າງຄວາມເຂັ້ມແຂງ, ຄຸນຄ່າທີ່ໄດ້ຈາກກິດຈະກຳໃໝ່, ຜົນກະທົບ ແລະຄວາມຍືນຍົງຂອງຂອງໂຄງການ.

  ຈາກປະສົບການໄດ້ສະແດງໃຫ້ເຫັນວ່າເຈົ້າໜ້າທີ່ລັດເຊັ່ນດຽວກັນກັບພາກປະຊາສັງຄົມແມ່ນຍິນດີຮັບເອົາບັນດາໂຄງການສ້າງຄວາມອາດສາມາດສະເໜີ, ແຕ່ວ່າຜົນທີ່ໄດ້ຮັບນັ້ນມັນບໍ່ຄ່ອຍໄດ້ດັ່ງທີ່ຄາດຫວັງ. ອຸປະສັກອາດຈະເປັນຍ້ອນຄວາມບໍ່ເຕັມໃຈທີ່ຈະປ່ຽນແປງ, ຜູ້ເຂົ້າຮ່ວມສ່ວນຫລາຍແມ່ນມາຈາກກຸ່ມທີ່ບໍ່ແມ່ນ ເປົ້າໝາຍ, ຂໍ້ຈຳກັດໃນການກຳນົດກິດຈຳກຳການສ້າງຄວາມອາດສາມາດ (ຕົວຢ່າງ, ຄວາມບໍໝັ້ນຄົງ ຂອງກິດຈະກຳ, ວັດຖຸປະສົງບໍ່ຈະແຈ້ງ, ຜູ້ເຂົ້າຮ່ວມແມ່ນມີລະດັບຄວາມຮູ້ແຕກຕ່າງກັນຢ່າງກວ້າງຂວາງ) ຫຼື ບັນຫາອື່ນໆ.

  ຄວາມສ່ຽງເຫຼົ່ານີ້ແມ່ນຕ້ອງໄດ້ຮັບການປະເມີນຢ່າງລະມັດລະວັງໃນການກຳນົດໂຄງການສ້າງຄວາມອາດສາມາດ, ແລະຜົນກະທົບທີ່ໄດ້ຈາກການກວດກາໃນເວລາທີ່ມີການປະເມີນຜົນ.[13]

---

[13] ຄຳແນະນຳກ່ຽວກັບການປະເມີການຝຶກອົບຮົມແມ່ນສາມາດເບິ່ງໄດ້ທີ່ເອກະສານການປະເມີນກິດຈະກຳການຝຶກອົບຮົມ (ສຳນັກພິມ ສປຊ, HR/P/PT/18).

**ການປູກຈິດສໍານຶກ**
**ແລະການສ້າງຄວາມອາດສາມາດໃຫ້ແກ່ໜ່ວຍງານຮັກສາຄວາມໝັ້ນຄົງໃນການຕໍ່ສູ້ຕ້ານຄວາມຮຸນແຮງທາງເພດໃນປະເທດໄອວໍລີໂຄດ**

ອີງຕາມການທົບທວນຂອງ UPR ໃນປີ 2009, ອົງການ NGO SOS Exclusion ໄດ້ນໍາໃຊ້ຄໍາແນະນໍາຂອງ UPR ໃນການພັດທະນາແຜນງານທີ່ເນັ້ນໃສ່ການສ້າງຄວາມອາດສາມາດດ້ານສິດທິມະນຸດໃຫ້ ແກ່ຕໍາຫຼວດແລະທະຫານ. ປະທານຂອງອົງການໄດ້ກ່າວ່າ "ພວກເຮົາໄດ້ຈັດກອງປະຊຸມສອງຄັ້ງກ່ຽວກັບຂໍ້ສະເໜີແນະຂອງ UPR ໃນດ້ານສິດທິຂອງແມ່ຍິງ", "ມັນເປັນໂອກາດທີ່ດີໃນການປະເມີນສະຖານະພາບຂອງການຈັດຕັ້ງປະຕິບັດຕາມຄໍາແນະນໍາຂອງບາງພາກສ່ວນທີ່ກ່ຽວຂ້ອງທີ່ສໍາຄັນ, ເຊັ່ນ: ກະຊວງຂອງຄວາມສາມັກຄີ, ຄອບຄົວ, ແມ່ຍິງແລະເດັກນ້ອຍ; ກະຊວງຍຸຕິທໍາແລະອົງການແມ່ຍິ່ງຂອງ ສປຊ". ຫລັງຈາກກອງປະຊຸມແລ້ວກໍ່ມີການໂຄສະນາລະດົມຂົນຂວາຍເພື່ອຕ້ານຄວາມຮຸນແຮງທາງເພດ, ຊຶ່ງມັນເປັນໜຶ່ງໃນຂໍ້ສະເໜີແນະຂອງ UPR. "ການໂຄສະນາລະດົມຂົນຂວາຍໄດ້ໃຫ້ໂອກາດພວກເຮົາໄດ້ເຕົ້າໂຮມນັກເຄື່ອນໄຫວພາກປະຊາສັງຄົມ, ຜູ້ນໍາທາງສາສະໜາ, ກະຊວງຄວາມສາມັກຄີແລະກະຊວງຍຸຕິທໍາກໍ່ຄືບັນດາຊຸມຊົນບ່ອນທີ່ມີການຈັດຂະບວນການໂຄສະນາລະດົມຂົນຂວາຍ".

### 4.12. ການເຊື່ອມໂຍງບົດບາດຍິງຊາຍເຂົ້າໃນກິດຈະກໍາການຕິດຕາມກວດກາ

ບັນດາຄໍາຖາມດັ່ງຕໍ່ໄປນີ້ແມ່ນສາມາດຊ່ວຍໃນການເຊື່ອມໂຍງບົດບາດຍິງຊາຍໃນເວລາຄັດເລືອກກິດຈະກໍາການຕິດຕາມກວດກາຕາມບູລິມະສິດ:

- ຂໍ້ສະເໜີແນະ ແລະ ກິດຈະກໍາການຕິດຕາມກວດກາທີ່ກ່ຽວຂ້ອງທີ່ເປັນບຸລິມະສິດອັນໃດທີ່ມີມີຜົນກະທົບຕໍ່ແມ່ຍິງແລະ/ຫຼືຜູ້ຊາຍຫລາຍທີ່ສຸດ?
- ຈະມີວິທີໃດທີ່ຈະເອົາບົດບາດຍິງຊາຍເຂົ້າໃນຂະບວນການດໍາເນີນງານທີ່ເປັນບຸລິມະສິດ? ໂດຍຜ່ານທາງກິດຈະກໍາສະເພາະຂອງບົດບາດຍິງຊາຍແລະ / ຫຼືໂດຍຜ່ານທາງຫຼັກການຕ່າງໆທີ່ສໍາຄັນຂອງບົດບາດຍິງຊາຍ?
- ຜູ້ຖືສິດທິໄດ້ເຄີຍພົບພໍ້ກັບການຖືກເລືອກປະຕິບັດຫຼາຍບໍ່?
- ກິດຈະກໍາການຕິດຕາມກວດກາຈະສາມາດຊ່ວຍແກ້ໄຂສະຖານະການການເລືອກປະຕິບັດໄດ້ບໍ່?
- ກິດຈະກໍາທີ່ແນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືສິດແລະເພື່ອຕໍ່ສູ້ຕ້ານຈໍາແນກຍິງຊາຍແລະຄວາມບໍ່ເທົ່າທຽມໄດ້ຮັບການວາງແຜນໄວ້ບໍ່?
- ຜູ້ທີ່ຖືສິດທິນັ້ນໄດ້ມີສ່ວນຮ່ວມໃນການງາວແຜນການດໍາເນີນກິດຈະກໍາບໍ່?

**ໃນເວລາທີ່ດໍາເນີນກິດຈະກໍາການຕິດຕາມກວດກາແມ່ນຕ້ອງ:**

- ເກັບກໍາແລະລາຍງານຂໍ້ມູນແຍກຕາມເພດແລະຕາມອົງປະກອບທີ່ມີຫຼາກຫຼາຍ, ເຊັ່ນ: ອາຍຸ, ຊົນເຜົ່າ, ຄວາມພິການ, ສະຖານະທາງສັງຄົມແລະເສດຖະກິດ, ແລະອື່ນໆ;
- ໃນເວລາທີ່ຂໍ້ມູນຂ່າວສານສະເພາະກ່ຽວກັບເພດນັ້ນແມ່ນຫາຍາກ, ມັນຈໍາເປັນຕ້ອງໄດ້ຂຽນລາຍງານລະອຽດກ່ຽວກັບບັນຫາທີ່ວ່ານີ້ໃສ່ໃນບົດລາຍງານ;

- ໃນເວລາທີ່ການຈັດກິດຈະກຳຕ່າງໆ, ການຝຶກອົບຮົມ, ແລະ ກິດຈະກຳການສ້າງຄວາມອາດສາມາດ:
  ແມ່ນຕ້ອງຮັບປະກັນໃຫ້ມີຄວາມສະເໝີພາບຂອງຍິງຊາຍໃນການມີສ່ວນຮ່ວມບໍ່ວ່າຈະເປັນຄູຝຶກຫຼືບຸກຄົນທີ່ຊ່ວຍວຽກກິດຈະກຳກໍ່ຕາມ, ຈັດໃຫ້ມີສະພາບແວດລ້ອມທີ່ເຫັນເຖິງການມີສ່ວນຮ່ວມບົດບາດຍິງຊາຍ (ສະຖານທີ່ຈັດ, ໄລຍະເວລາຂອງການຈັດ), ມີເນື້ອໃນ ແລະ ວິທີການຈັດແບບມີສ່ວນຮ່ວມຂອງບົດບາດຍິງຊາຍ;
- ດຳເນີນການວິເຄາະບົດບາດຍິງຊາຍຢ່າງເປັນລະບົບ;
- ຮ່ວມງານກັບຄູ່ຮ່ວມງານທີ່ເຮັດວຽກດ້ານບົດບາດຍິງຊາຍ;
- ໃນກິດຈະກຳການປຸກລະດົມແລະປູກຈິດສຳນຶກຕ້ອງ:
  ໃຫ້ມີເນື້ອໃນກ່ຽວກັບຄວາມສະເໝີພາບບົດບາດຍິງຊາຍແລະການນຳໃຊ້ພາສາແລະຮູບພາບທີ່ສະແດງໃຫ້ເຫັນເຖິງບົດບາດຍິງຊາຍ.

**4.13.** ການສະທ້ອນໃຫ້ເຫັນພາບລວມ, ຄວາມຫຼາກຫຼາຍແລະການເຂົ້າເຖິງ

ໃນເວລາທີ່ວາງແຜນແລະຈັດຕັ້ງປະຕິບັດວຽກງານຕິດຕາມກວດກາແມ່ນຕ້ອງ:

- ເຂົ້າມີສ່ວນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ;
- ຮັບປະກັນໃຫ້ມີການຮັບຟັງທັດສະນະຕ່າງໆແລ້ວເອົາມານຳໃຊ້ເຂົ້າໃນກິດຈະກຳການຕິດຕາມກວດກາ;
- ໃຫ້ການພິຈາລະນາການມີສ່ວນຮ່ວມຂອງບຸກຄົນຕ່າງໆທີ່ມີພື້ນຖານແຕກຕ່າງກັນ, ເຊິ່ງລວມມີຊົນເຜົ່າແລະຄົນພິການ, ແລະ ດຳເນີນການສ້າງເອກະສານຂໍ້ມູນທີ່ຄົນພິການສາມາດເຂົ້າເຖິງໄດ້.

**4.14.** **ການນຳໃຊ້ຄຳແນະນຳເຂົ້າໃນການດຳເນີຄະດີແລະພິພາກສາ**

ມີພາກປະຊາສັງຄົມຈຳນວນຫຼາຍທີ່ໃຫ້ການສະໜັບສະໜູນບຸກຄົນແລະກຸ່ມຄົນໃນການຮຽກຮ້ອງສິດທິໂດຍຜ່ານທາງກົນໄກຕຸລາການຫຼື ກົງຕຸລາການໃນລະດັບຊາດ, ພາກພື້ນແລະສາກົນ. ການສະໜັບສະໜູນນີ້ອາດ ມີໃນຮູບແບບການຊ່ວຍເຫຼືອທາງດ້ານກົດໝາຍໃຫ້ຜູ້ຮ້ອງທຸກ, ໃຫ້ຄຳປຶກສາທາງດ້ານກົດໝາຍຈາກຜູ້ຊ່ຽວຊານ, ສ້າງຄວາມອາດສາມາດໃຫ້ແກ່ຜູ້ພິພາກສາ, ໄອຍະການ, ທະນາຍຄວາມແລະທີ່ປຶກສາທາງດ້ານກົດໝາຍເພື່ອນຳໃຊ້ກົດໝາຍວ່າດ້ວຍສິດທິມະນຸດ, ຫຼືໃຫ້ການສະໜັບສະໜູນການນຳໃຊ້ກົດໝາຍວ່າດ້ວຍສິດທິມະນຸດສາກົນໃຫ້ແກ່ທັງນັກເຄື່ອນໄຫວແລະສານປະຊາຊົນ.

ນຳໃຊ້ແລະສະໜັບສະໜູນການນຳໃຊ້ກົດໝາຍວ່າດ້ວຍສິດທິມະນຸດສາກົນໃນຂະບວນການຕຸລາການໃນລະດັບຊາດແລະລະດັບພາກພື້ນເພື່ອເປັນການສ້າງຄວາມສາມາດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຫຼັກກົດໝາຍສິດທິມະນຸດ. ການຕີຄວາມໝາຍບັນດາຂໍ້ກຳນົດທີ່ມີໃນຄຳເຫັນທົ່ວໄປຂອງສົນທິສັນຍາແມ່ນສາມາດໃຫ້ຄວາມຈະແຈ້ງກ່ຽວກັບສິດທິສະເພາະໃດໜຶ່ງທີ່ມີແລະອາດຈະໄດ້ຮັບການພິຈາລະນາຈາກສານພາຍໃນ ໃນການຕັດສິນຄະດີ. ເຊັ່ນດຽວກັນກັບການອ້າງອີງເຖິງຂໍ້ສະເໜີແນະສະເພາະຈາກກົນໄກສິດທິມະນຸດແມ່ນສາມາດຊ່ວຍຜູ້ທີ່ຮຽກຮ້ອງສິດທິນັ້ນໄດ້ຫລາຍຂຶ້ນ.

**ການອ້າງສິດໃນການເຂົ້າເຖິງຢາປົວພະຍາດທົ່ວໄປໃນປະເທດເຄນຢ້າ**

ໃນວັນທີ 20 ເມສາ 2012
ການວິນິດໄສຄະດີເຄື່ອງໝາຍການຄ້າທີ່ໜ້າສົນໃຈອັນໜຶ່ງຂອງສານສູງໃນເຄນຢາທີ່ອອກຄຳຕັດສິນວ່າຂໍ້ກຳນົດໃນກົດໝາຍວ່າດ້ວຍການຕ້ານການປອມແປງປີ 2008 ນັ້ນແມ່ນບໍ່ສາມາດນຳໃຊ້ກັບເລື່ອງຢາປົວພະຍາດທົ່ວໄປໄດ້- ດັ່ງນັ້ນຈຶ່ງເປັນການປົກປ້ອງການເຂົ້າເຖິງການປິ່ນປົວທີ່ມີລາຄາຖືກ.
ຄະດີທີ່ກ່າວມາຂ້າງເທິງນີ້ແມ່ນຄົນທີ່ຕິດເອດສາມຄົນເປັນຜູ້ທີ່ຮ້ອງຟ້ອງຂຶ້ນສານ. ອົງການ KELIN ເປັນອົງການສິດທິມະນຸດໜຶ່ງທີ່ເຮັດໜ້າທີ່ໃນປົກປ້ອງແລະສົ່ງເສີມສິດທິຂອງຄົນຕິເອດໃນອາຟຣິກາຕາເວັນອອກແມ່ນໄດ້ໃຫ້ການສະໜັບສະໜູນການຄົ້ນຄວ້າຊອກຫາວິທີຊ່ວຍຂະບວນການຮ້ອງຟ້ອງ.
ຄະດີດັ່ງກ່າວແມ່ນຍັງສືບຕໍ່ມາຕັ້ງແຕ່ປີ 2009 ທີ່ໄດ້ຂໍໃຫ້ດຳເນີນການທົບທວນຄືນຂໍ້ກຳນົດໃນກົດໝາຍວ່າດ້ວຍການຕ້ານການປອມແປງປີ 2008 ເພາະວ່າມັນເປັນໄພຕໍ່ການນຳເຂົ້າຢາປົວພະຍາດທົ່ວໄປ, ເຊິ່ງລວມມີຢາຕ້ານໄວຣັສສຳລັບຜູ້ທີ່ມີເຊື້ອໂລກເອດສ.
ນັກລາຍງານພິເສດຂອງຫະປະຊາຊາດກ່ຽວກັບສິດທິໃນສຸຂະພາບໄດ້ຂຽນລາຍງານແບບສັ້ນໆກ່ຽວກັບຄຳຕັດສິນດັ່ງກ່າວ.
ໃນບົດລາຍງານນັ້ນແມ່ນໄດ້ບັນຍາຍກ່ຽວກັບຄຳຕັດສິນທີ່ວິນິດໃສວ່າຊັບສິນທາງປັນຍາບໍ່ຄວນຂັດກັບສິດທິໃນການດຳລົງຊີວິດ, ສິດທິໃນການສຸຂະພາບແລະສິດທິໃນກຽດສັກສີຂອງມະນຸດດັ່ງທີ່ໄດ້ກ່າວໃນລັດຖະທຳມະນູນຂອງເຄນຢ້າ. ເພາະສະນັ້ນຜູ້ຖືສິດທິບັດຈຶ່ງບໍ່ສາມາດທີ່ຈະນຳໃຊ້ກົດໝາຍທີ່ກ່າວມານີ້ໃນການນຳເຂົ້າຢາປົວພະຍາດທົ່ວໄປໄດ້, ດັ່ງທີ່ບັນດານັກກົດໝາຍມີຄວາມກັງວົນຢູ່.[14]

## 4.15. ການແລກປ່ຽນຜົນຈາກການຕິດຕາມກວດກາແລະຍຸດທະວິທີທີ່ນຳໃຊ້

ກົດໝາຍວ່າດ້ວຍສິດທິມະນຸດສາກົນແລະກົນໄກທີ່ກ່ຽວຂ້ອງອາດຈະຖືກຮັບຮູ້ວ່າມັນບໍ່ກ່ຽວຂ້ອງກັບຄວາມເປັນຈິງຂອງຄົນ. ບັນດາຂໍ້ສະເໜີແນະຂອງຜູ້ຊ່ຽວຊານເອກະລາດໃນນະຄອນເຈນີວາຈະສາມາດຊ່ວຍປະຊາຊົນທົ່ວໄປໄດ້ແນວໃດ? ກົນໄກສິດທິມະນຸດຈະສາມາດເຮັດໃຫ້ຜູ້ທີ່ຄຸ້ມຄອງສິດ ນັ້ນ ມີການພັດທະນາການຈັດຕັ້ງປະຕິບັດທີ່ຂຶ້ນໄດ້ແນວໃດໂດຍສະເພາະແມ່ນຜູ້ທີ່ຍັງບໍ່ທັນໄດ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບອົງກອນສິດທິມະນຸດ ຫຼື ຂະບວນການພິເສດ? ແຕ່ສິ່ງທີ່ກ່າວມານີ້ສາມາດມີ ການປ່ຽນແປງໄດ້ຈາກການປະກອບສ່ວນຂອງພາກປະຊາສັງຄົມ. ການບັນທຶກ, ແລກປ່ຽນ ແລະ ເຜີຍແຜ່ ຜົນຂອງການຕິດຕາມກວດກາ ແລະ ຍຸດທະວິທີທີ່ນຳໃຊ້ແມ່ນສາມາດເຮັດໃຫ້ເກີດມີການຮ່ວມງານ, ການປະຕິບັດຕາມ ແລະ ການດັດປັບເອົາໄປໃຊ້ໃນວຽກງານ ແລະ ແຜນງານຂອງຕົນເອງໄດ້. ຄຳຄິດເຫັນກ່ຽວກັບຜົນກະທົບຂອງກົນໄກສິດທິມະນຸດແມ່ນໄດ້ຖືກຕີລາຄາສູງໂດຍຜູ້ຊ່ຽວຊານທີ່ເຮັດວຽກໃນກົນໄກດັ່ງກ່າວ.

---

[14] ໃຫ້ເບິ່ງ: http://bit.ly/L1cEu5 (accessed 24 July 2013).

**ການແລກປ່ຽນຂໍ້ມູນແລະວິທີການປະຕິບັດກ່ຽວກັບການຮ້ອງຟ້ອງກໍລະນີສິດທິມະນຸດໃນສະຖານທີ່ດູແລຄົນເຈັບໃນເອີຣົບຕາເວັນອອກແລະອາຊີກາງ**

ສິດທິມະນຸດໃນໂຄງການການດູແລຄົນເຈັບໄດ້ພັດທະນາຄູ່ມືການປະຕິບັດລະດັບປະເທດສຳລັບທະນາຍຄວາມທີ່ສົນໃຈໃນການເປັນຕົວແທນທາງກົດໝາຍໃນກໍລະນີສິດທິມະນຸດ. ຄູ່ມືການປະຕິບັດແມ່ນມີປະໂຫຍດເພາະມັນໄດ້ກວມທັງວິທີການຮ້ອງຟ້ອງແລະກົນໄກຂອງທາງເລືອກຕ່າງໆ, ເຊັ່ນອົງການກວດສອບອິດສະຫລະແລະອົງກອນທີ່ໄດ້ຮັບອະນຸຍາດທາງການແພດ, ອົງການກວດສອບຄົນປ່ວຍແລະອົງການທີ່ໃຫ້ສິດແລະພັນທະໃນລະດັບຊາດ, ພາກພື້ນແລະສາກົນ, ລວມທັງຂະບວນການທົບທວນຕໍ່ເນື່ອງຂອງອົງກອນສິດທິມະນຸດທາງຕຸລາການແລະວຽກງານຂອງຂະ ບວນການພິເສດ.

ໂຄງການດັ່ງກ່າວຍັງມີຊຸມຊົນຂອງການຈັດຕັ້ງປະຕິບັດ, ແລະ ມີເວັບໄຊ້ທີ່ມີຂໍ້ມູນທີ່ສາທາລະນະສາມາດເຂົ້າເຖິງໄດ້. ຊຸມຊົນຂອງການຈັດຕັ້ງປະຕິບັດແມ່ນມີສາມພາກສ່ວນຕົ້ນຕໍ: ພາກສ່ວນສອນກົດຫມາຍແລະສຸຂະ ພາບ; ພາກສ່ວນການຝຶກອົບຮົມກ່ຽວກັບສິດທິມະນຸດຢູ່ໃນສະຖານການດູແລຄົນປ່ວຍແລະພາກສ່ວນສື່ມວນຊົນ.[15]

### 4.16. ການຮ່ວມງານກັບຂະບວນການຕິດຕາມກວດກາແລະຈັດຕັ້ງປະຕິບັດຕາມກົນໄກສິດທິມະນຸດທີ່ມີຢູ່

ຂະບວນການຈັດຕັ້ງປະຕິບັດແລະຕິດຕາມກວດກາແມ່ນນຳພາໂດຍກົນໄກສິດທິມະນຸດເຊິ່ງມັນຂຶ້ນຢູ່ກັບການຮ່ວມມືຂອງລັດຖະບານກໍ່ຄືການມີສ່ວນຮ່ວມຂອງພາກປະຊາສັງຄົມ.
ພາກຕໍ່ໄປຂອງຄູ່ມືນີ້ໄດ້ອະທິບາຍຂະບວນການຕິດຕາມກວດກາແລະການຈັດຕັ້ງປະຕິບັດ.

15 http://health-rights.org/

## 5. ຂະບວນການຕິດຕາມກວດກາແລະການຈັດຕັ້ງປະຕິບັດກົນໄກສິດທິມະນຸດ

ການປະເມີນການປ່ຽນແປງຫລັງຈາກທີ່ໄດ້ປະຕິບັດຕາມຄຳແນະນຳສິດທິມະນຸດ, ການຮຽນຮູ້ສິ່ງທີ່ເກີດຂຶ້ນຫຼັງຈາກກົນໄກສິດທິມະນຸດໄດ້ດຳເນີນການທົບທວນກວດກາປະເທດພາຄີທີ່ກ່ຽວຂ້ອງ, ຄວາມເຂົ້າໃຈກ່ຽວກັບຜົນກະທົບໃນພາກສະໜາມຈາກກອບສິດທິມະນຸດ ສປຊ ແມ່ນເປັນຄວາມໃສ່ໃຈແລະເປັນເປົ້າໝາຍທີ່ສຳຄັນຂອງກົນໄກສິດທິມະນຸດ. ຕັ້ງແຕ່ກົນໄກໄດ້ຮັບການສ້າງຕັ້ງຂື້ນ, ທຸກກົນໄກທັງຫມົດຍອມຮັບວ່າມັນມີຄວາມຫມາຍສຳຄັນທີ່ສາມາດສ້າງການປ່ຽນແປງໃນທາງທີ່ດີຂື້ນໄດ້. ຫຼັກຖານຂອງການປ່ຽນແປງໃນທາງບວກແມ່ນສາມາດຖືເປັນຫຼັກຖານຂອງຄວາມມີປະສິດທິພາບຂອງກົນໄກໄດ້. ນີ້ແມ່ນ " ຫຼັກຖານສຳຄັນ" ທີ່ເກີດຈາກການພັດທະນາໃນຮູບແບບຕ່າງໆຂອງການຕິດຕາມກວດກາທີ່ກົນໄກສິດທິມະນຸດໄດ້ສ້າງໄວ້. ບາງກົນໄກກໍ່ຖືກສ້າງເປັນຈະບວນການ ເຊັ່ນວ່າຂະບວນການຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດຕາມບົດທົບທວນຂອງອົງກອນສິດທິມະນຸດຕ່າງໆ. ບາງກົນໄກກໍ່ແມ່ນມີຄວາມສອດຄ່ອງກັບການຈັດຕັ້ງປະຕິບັດ, ເຊັ່ນ: ບົດລາຍງານການຕິດຕາມກວດກາຂອງການໄປຢ້ຽມຢາມປະເທດທີ່ນັກລາຍງານພິເສດໃດ້ລາຍງານໄວ້. ໃນກໍລະນີອື່ນໆການຕິດຕາມກວດກາແມ່ນອາດເປັນໃນຮູບແບບການລິເລີ່ມແບບສະເພາະກິດ, ຕົວຢ່າງ, ກອງປະຊຸມລະດັບພາກພື້ນເພື່ອແລກປ່ຽນປະສົບການໃນການຈັດຕັ້ງປະຕິບັດຕາມຂໍ້ສະເຫນີແນະສິດທິມະນຸດ. ໃນພາກຕໍ່ໄປແມ່ນຈະໄດ້ອະທິບາຍກົນໄກເຫຼົ່ານີ້ຢ່າງລະອຽດເພີ່ມເຕີມ.

### 5.1. ອົງກອນສິດທິມະນຸດ

*ຂະບວນການຕິດຕາມກວດກາຕໍ່ກັບບົດສະຫລຸບຈາກການທົບທວນ*

ອົງກອນສິດທິມະນຸດໄດ້ສ້າງຕັ້ງຂະບວນການຂື້ນເພື່ອຊ່ວຍລັດພາຄີດຳເນີນການຈັດຕັ້ງປະຕິບັດຕາມຂໍ້ສະເຫນີແນະຂອງບົດສະຫລຸບຈາການທົບທວນ ຫຼື ຄຳຕັດສິນຂອງຂະບວນການພິຈາລະນາຄຳຮ້ອງທຸກຂອງບຸກຄົນ. ທຸກອົງກອນສິດທິມະນຸດຮຽກຮ້ອງໃຫ້ລັດພາຄີປະຕິບັດຕາມບົດລາຍງານທົບທວນແຕ່ລະໄລຍະ. ຄະນະກຳມາທິການຕ້ານການທໍລະມານ (CAT), ຄະນະກຳມາທິການກ່ຽວກັບການລົບລ້າງການຈຳແນກເຊື້ອຊາດ (CERD), ຄະນະກຳມາທິການສິດທິມະນຸດ (ຄະນະກຳມາທິການ HR), ຄະນະກຳມາທິການການລົບລ້າງການຈຳແນກຕໍ່ແມ່ຍິງ (CEDAW) ແລະຄະນະກຳມາທິການກ່ຽວກັບການບັງຄັບໃຊ້ຫາຍສາບສູບ (CED) ແມ່ນໄດ້ຮັບຮອງເອົາລະບຽບການຕິດຕາມກວດກາຢ່າງເປັນທາງການ. ຄະນະກຳມາທິການເຫຼົ່ານີ້ແມ່ນໄດ້ຮຽກຮ້ອງໃຫ້ລັດພາຄີຕ່າງໆຕ້ອງລາຍງານກັບຄືນໃນສິ່ງທີ່ໄດ້ປະຕິບັດຕາມບົດທົບທວນພາຍໃນຫນຶ່ງປີ (ສອງປີໃນກໍລະນີຂອງ CEDAW) ກ່ຽວກັບມາດຕະການຈັດຕັ້ງປະຕິບັດຕາມຂໍ້ສະເຫນີແນະສະເພາະຫລື "ຄວາມເປັນຫວ່ງເປັນໄຍພິເສດ" ທີ່ມີການຈັດຕັ້ງປະຕິບັດຢ່າງໄວວາ. ຄະນະກຳມາທິການເຫຼົ່ານີ້ແມ່ນໄດ້ແຕ່ງຕັ້ງນັກລາຍງານພິເສດ ຫຼື ຜູ້ປະສານງານເພື່ອຕິດຕາມກວດກາ, ຫຼື ຜູ້ທີ່ມີຄວາມ

ຮັບຜິດຊອບໃນການປະເມີນບົດລາຍງານຕິດຕາມການຈັດຕັ້ງປະຕິບັດຂອງລັດພາຄີແລ້ວລາຍງານໃຫ້ກັບຄະນະກຳມາທິການ. ບາງສະມາຊິກຂອງອົງກອນສິດທິມະນຸດແມ່ນໄດ້ດຳເນີນການຢ້ຽມຢາມ ລັດພາຄີຕາມຄຳເຊື້ອເຊີນຂອງເຂົາເຈົ້າເພື່ອຈະຕິດຕາມກ່ຽວກັບບົດລາຍງານແລະການປະຕິບັດຕາມບົດສະຫຼຸບຂອງຂະບວນການທົບທວນ.

ອີງຕາມຄະນະກຳມາທິການສິດທິມະນຸດ, ພາຍຫລັງທີ່ໄດ້ຮັບບົດລາຍງານການການຈັດຕັ້ງປະຕິບັດຈາກພັກລັດ, ນັກລາຍງານພິເສດຂອງຂະບວນການຕິດຕາມກວດກາກໍ່ຈະເຮັດບົດລາຍງານຄວາມຄືບໜ້າໃນແຕ່ລະໄລຍະໄວ້, ຊຶ່ງປະກອບມີບົດສະຫຼຸບສັງລວມຂອງລັດພາຄີຕາມການຈັດຕັງປະຕິບັດຕາມບົດທົບທວນ,ແລະ ຂໍ້ມູນຈາກ ພາກປະຊາສັງຄົມ ແລະ ແຫຼ່ງຂໍ້ມູນອື່ນໆກໍ່ຄືຂໍ້ມູນການປະເມີນຂອງຄະນະກຳມາທິການທີ່ໄດ້ອີງໃສ່ເງື່ອນໄຂຂອງການປະເມີນຈາກການຕິດຕາມກວດກາຂອງຄະນະກຳມາທິການ (ເບິ່ງຕາຕະລາງຂ້າງລຸ່ມນີ້).

ຕໍ່ມາຄະນະກຳມາທິການກໍ່ຈະໄດ້ແຈ້ງໃຫ້ລັດພາຄີຮັບຊາບກ່ຽວກັບຜົນການພິຈາລະນາບົດລາຍງານການຕິດຕາມກວດກາ. ຖ້າຫາກວ່າລັດພາຄີທີ່ກ່ຽວຂ້ອງບໍ່ໄດ້ປະຕິບັດຕາມຂະບວນການຕິດຕາມກວດກາ, ຫລື ໄດ້ດຳເນີນການຈັດຕັ້ງປະຕິບັດໄປໂດຍທາງຄະນະກຳມາທິການບໍ່ເຫັນວ່າເປັນ ທີ່ໜ້າພໍໃຈ, ນັກລາຍງານແມ່ນສາມາດຮຽກຮ້ອງໃຫ້ເປີດກອງປະຊຸມກັບຜູ້ແທນຂອງລັດພາຄີດັ່ງກ່າວໄດ້.

### ເງື່ອນໄຂການປະເມີນຕິດຕາມກວດກາຂອງຄະນະກຳມາທິການສິດທິມະນຸດ

**ມີການລາຍງານ / ການຈັດຕັ້ງປະຕິບັດທີ່ໜ້າພໍໃຈ**

ການປະຕິບັດຕາມເປັນທີ່ເພິ່ງພໍໃຈຫລາຍ

**ມີການລາຍງານ / ການດຳເນີນງານເປັນທີ່ໜ້າພໍໃຈບາງສ່ວນ**

B1 ມີການປະຕິບັດຕາມຂັ້ນຕອນ, ແຕ່ຂາດຂໍ້ມູນທີ່ຕ້ອງການເພີ່ມເຕີມ

B2 ມີການລິເລີ່ມປະຕິບັດ, ແຕ່ຂາດຂໍ້ມູນທີ່ຕ້ອງການເພີ່ມເຕີມ

**ມີການລາຍງານ /ການຈັດຕັ້ງປະຕິບັດບໍ່ເປັນທີ່ໜ້າພໍໃຈ**

C1 ໄດ້ຮັບການລາຍງານແຕ່ການປະຕິບັດບໍ່ໄດ້ໄປຕາມຄຳແນະນຳ

C2 ໄດ້ຮັບການລາຍງານແຕ່ບໍ່ກ່ຽວຂ້ອງກັບຄຳແນະນຳ

**ບໍ່ມີການຮ່ວມມືກັບຄະນະກຳມາທິການ**

D1 ບໍ່ໄດ້ຮັບການລາຍງານພາຍໃນເວລາທີ່ກຳນົດ,

ຫຼືບໍ່ມີການລາຍງານຕາມຄຳຖາມສະເພາະໃດໜຶ່ງໃນບົດລາຍງານ

D2 ບໍ່ໄດ້ຮັບການລາຍງານພາຍຫຼັງມີການເຕືອນ (s)

**ມາດຕະການທີ່ປະຕິບັດແມ່ນກົງກັນຂ້າມກັບຄຳແນະນຳຂອງຄະນະກຳມາທິການ**

E ການລາຍງານສະແດງໃຫ້ເຫັນວ່າມາດຕະການທີ່ໄດ້ປະຕິບັດໄປນັ້ນມັນຂັດກັບຄຳແນະນຳຂອງຄະນະກຳມາທິການ

### *ພາກປະຊາສັງຄົມສາມາດມີສ່ວນຮ່ວມໄດ້ແນວໃດ?*

ມັນຄືກັນກັບບົດລາຍງານ "ເງົາຕິດຕາມ" ຫຼື ບົດລາຍງານ "ເປັນທາງເລືອກທີ່ຫລາກ ຫລາຍ" ທີ່ຖືກສົ່ງເພື່ອໃຫ້ພິຈາລະນາບົດລາຍງານຂອງລັດພາຄີແລະບັນຊີລາຍການຂອງບັນຫາຕ່າງໆ, ອົງການພາກປະ ຊາສັງຄົມອາດຈະສົ່ງຂໍ້ມູນໃນກອບຂອງຂະບວນການຕິດຕາມກວດກາ. ໃນກໍລະນີນີ້, ການສົ່ງຂໍ້ມູນຄວນຈະສຸມໃສ່ສະເພາະກ່ຽວກັບຄຳແນະນຳທີ່ໄດ້ກຳນົດໃນບົດສະຫລຸບຈາກການສັງເກດການຂອງຂະບວນ ການຕິດຕາມ, ແລະ ມີຂໍ້ມູນທີ່ໜ້າເຊື່ອຖືກ່ຽວກັບການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ[16] ແລະ ຂໍ້ມູນກ່ຽວກັບການປະເມີນປະສິດທິພາບຂອງການດຳເນີນງານ.
ທຸກຄວາມລົ້ມເຫຼວໃນການນຳໃຊ້ມາດຕະການທີ່ຈຳເປັນເພື່ອຈັດຕັ້ງປະຕິບັດຕາມຂໍ້ສະເໜີແນະກໍ່ຄວນນຳມາໃສ່ໃນບົດລາຍງານ. ອົງການ ພາກປະຊາສັງຄົມອາດຈະສະແດງຄຳຄິດເຫັນກ່ຽວກັບການລາຍງານຂອງລັດພາຄີໄດ້.ຂໍ້ມູນຂອງພາກ ປະຊາສັງຄົມທີ່ສົ່ງມາໃຫ້ຂະບວນການຕິດຕາມກວດການັ້ນຈະຕ້ອງປະຕິບັດຕາມລະບຽບການອັນດຽວ ກັນກັບການສົ່ງບົດລາຍງານຂອງລັດພາຄີ ແລະ ບັນຊີລາຍການຂອງບັນຫາຕ່າງໆທີ່ຈະຖືວ່າເປັນຂໍ້ມູນ ທີ່ສາມາດເປີດເຜີຍໄດ້ ແລະ ສາມາດເຂົ້າຫາໄດ້ທີ່ເວບໄຊ້ຂອງ OHCHR, ຫຼື ຖ້າມີການຮ້ອງຂໍໃຫ້ປິດ ລັບ ຂໍ້ມູນກໍ່ຈະຖືວ່າເປັນຂໍ້ມູນທີ່ເປີດເຜີຍບໍ່ໄດ້.

**ການນຳໃຊ້ບົດສະຫລຸບຈາກການທົບທວນຂອງ CRC ໃນລະດັບຊາດ**

ເພື່ອສົ່ງເສີມວິທີການແບບໝູນວຽນເພື່ອມີສ່ວນຮ່ວມໃນຂະບວນການລາຍງານຂອງຄະນະກຳມາທິການກ່ຽວກັບສິດຂອງເດັ ກນ້ອຍ (CRC) ແລະ ຊຸກຍູ້ໃຫ້ພາກປະຊາສັງຄົມໃຫ້ນຳໃຊ້ຄຳແນະນຳຂອງ CRC ເພື່ອໃຫ້ໄດ້ປະໂຫຍດສູງສຸດໃນການດຳເນີນວຽກງານປຸກລະດົມ, ອົງການ Child Rights Connect ແມ່ນໄດ້ລວບລວມບັນດາກໍລະນີສຶກສາຕ່າງໆກ່ຽວກັບກິດຈະກຳຕາມຕິດຕາມກວດກາທີ່ດຳເນີນການໂດຍ ພາກປະຊາສັງຄົມ ແລະ ສະຖາບັນສິດທິມະນຸດແຫ່ງຊາດ.[17]

ສະມາຊິກຂອງອົງກອນສິດທິມະນຸດອາດຈະເຂົ້າຮ່ວມກອງປະຊຸມໃນລະດັບພາກພື້ນ, ອະນຸພາກພື້ນຫຼືລະດັບຊາດທີ່ກ່ຽວກັບການຈັດຕັ້ງປະຕິບັດເຊິ່ງຈັດຂື້ນໂດຍພາກປະຊາສັງຄົມ, ໜ່ວຍງານຕ່າງໆຂອງ ສປຊ ແລະ OHCHR, ຫຼື ລັດຖະບານ.
ການມີສ່ວນຮ່ວມຂອງພາກປະຊາສັງຄົມໃນກອງປະຊຸມເຫຼົ່ານີ້ແມ່ນໄດ້ຮັບການສະໜັບສະໜູນຢ່າງເຕັມທີ່

[16] CEDAW ໄດ້ຮຽກຮ້ອງວ່າການສົ່ງຂໍ້ມູນນັ້ນຄວນຈະບໍ່ເກີນ 3,500 ຄຳສູງສຸດ

[17] www.childrightsnet.org/NGOGroup/CRC/FollowUp/

## ການຕິດຕາມການໄປຢ້ຽມຢາມຂອງອະນຸກຳມາທິການກ່ຽວກັບການປ້ອງກັນການຖືກທໍລະມານ

ອະນຸກຳມາທິການກ່ຽວກັບການປ້ອງກັນການຖືກທໍລະມານ (SPT), ແມ່ນໄດ້ຮັບສ້າງຕັ້ງຂື້ນໃນປີ 2007 ພາຍໃຕ້ອະນຸສັນຍາຂອງສົນທິສັນຍາຕ້ານການຖືກທໍລະມານເພື່ອໃຫ້ດຳເນີນການລົງຢ້ຽມຢາມເພື່ອຊອກຫາຄວາມເປັນຈິງຢູ່ໃນສະຖານທີ່ກັກຂັງ ແລະ ຕາມຫາສະຖານທີ່ໃດໜຶ່ງທີ່ມີການກັກຂັງທີ່ເກີດຂື້ນໃນອານາເຂດຂອງລັດໃດໜຶ່ງ, ເຊິ່ງອາດລວມມີທັງສະຖານີຕຳຫຼວດ, ທີ່ຄຸມຂັງນັກໂທດ, ສູນດູແລສຸຂະພາບຈິດແລະສູນດູແລບັນຫາທາງສັງຄົມ. ໃນຕອນທ້າຍຂອງການຢ້ຽມຢາມລັດທີ່ກ່ຽວຂ້ອງ, ອະນຸກຳມາທິການກໍ່ໄດ້ໃຫ້ຂໍ້ສະເໜີແນະ ແລະ ໃຫ້ຂໍ້ສັງເກດແກ່ລັດທີ່ກ່ຽວຂ້ອງແບບລັບໆ.

ຖ້າ SPT ໃຫ້ການພິຈາລະນາວ່າມີການຈັດຕັ້ງປະຕິບັດທີ່ເໝາະສົມ, ທາງ SPT ກໍ່ອາດຂໍສະເໜີລົງຢ້ຽມຢາມແບບໄລຍະສັ້ນອີກພາຍຫລັງການຢ້ຽມຢາມແບບເປັນທາງການແລ້ວ. ໃນເດືອນກັນຍາ 2010, SPT ດຳເນີນການໄປຢ້ຽມຢາມປະເທດປາລາກວຍເປັນຄັ້ງທຳອິດຕາມຈຸດປະສົງເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດໂດຍມີການເຂົ້າຮ່ວມຈາກພາກປະຊາສັງຄົມ.

### *ການຕິດຕາມກ່ຽວກັບຄຳຕັດສິນຂອງຄຳຮ້ອງທຸກສ່ວນບຸກຄົນ*

ອົງກອນສິດທິມະນຸດພາຍໃຕ້ສະຖານະການສະເພາະໃດໜຶ່ງອາດໃຫ້ການພິຈາລະນາຄຳຮ້ອງທຸກສ່ວນບຸກຄົນຫຼືດຳເນີນການສື່ສານກັບບຸຄົນດັ່ງກ່າວ.[18] ພາຍໃຕ້ຂະບວນການນີ້ ບຸກຄົນໃດທີ່ອ້າງວ່າສິດທິຂອງຕົນພາຍໃຕ້ສົນທິສັນຍາສະເພາະໃດໜຶ່ງໄດ້ຖືກລະເມີດ, ຜູ້ກ່ຽວສາມາດສາມາດຍື່ນຄຳຮ້ອງທຸກໄປຫາອົງກອນສິດທິມະນຸດຂອງສົນທິສັນຍາທີ່ກ່ຽວຂ້ອງນັ້ນໄດ້, ແລະ ບຸກຄົນດັ່ງກ່າວຕ້ອງໄດ້ຍອມຮັບສິດອຳນາດຂອງອົງກອນສິດທິມະນຸດນັ້ນເພື່ອດຳເນີນການພິຈາລະນາຄຳຮ້ອງດັ່ງກ່າວ. ກ່ອນອື່ນໝົດ ຄຳຮ້ອງທຸກທີ່ສົ່ງມານັ້ນຕ້ອງໄດ້ຖືກເບິ່ງເງື່ອນໄຂຂອງການຮັບພິຈາລະນາກ່ອນ. ຖ້າຫາກວ່າມີເງື່ອນໄຂ, ຄຳຮ້ອງນັ້ນກໍ່ຈະໄດ້ຮັບການພິຈາລະນາຕາມຄວາມເປັນຈິງແລະອົງກອນກໍ່ຈະພິຈາລະນາວ່າມີການລະເມີດເກີດຂື້ນຕາມການຮ້ອງທຸກຫຼືບໍ່. ໃນກໍລະນີທີ່ທາງອົງກອນຫາກເຫັນວ່າຜູ້ທີ່ຮ້ອງທຸກມານັ້ນແມ່ນເປັນຜູ້ເຄາະຮ້າຍແທ້, ອົງກອນສິດທິມະນຸດກໍ່ຈະຮຽກຮ້ອງໃຫ້ລັດທີ່ກ່ຽວຂ້ອງນັ້ນຕ້ອງໄດ້ໃຫ້ຂໍ້ມູນກ່ຽວກັບເລື່ອງທີ່ເກີດຂື້ນເພື່ອວ່າທາງອົງກອນຈະໄດ້ນຳໃຊ້ຂໍ້ມູນທີ່ວ່ານັ້ນໃນຂະບວນການພິຈາລະນາ, ຕາມປົກກະຕິແລ້ວຂໍ້ມູນທີ່ວ່ານັ້ນແມ່ນຕ້ອງໄດ້ສົ່ງພາຍໃນຫົກເດືອນ. ບົດລາຍງານໂຕ້ກັບຂໍ້ມູນຂອງລັດຖະບານນັ້ນແມ່ນຈະໄດ້ຖືກສົ່ງໃຫ້ຜູ້ທີ່ຮ້ອງທຸກນັ້ນເພື່ອໃຫ້ຜູ້ກ່ຽວໄດ້ມີຄຳເຫັນຈາກຂໍ້ມູນຂອງພາກລັດ.

---

18 ໃນເດືອນກໍລະກົດ 2013, ຂະບວນການນີ້ແມ່ນມີແຕ່ຂອງສົນທິສັນຍາສາກົນວ່າດ້ວຍສິດທິພົນລະເຮືອນ ແລະ ທາງການເມືອງ, ສົນທິສັນຍາສາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກເຊື້ອຊາດ, ສົນທິສັນຍາຕ້ານການທໍລະມານ, ສົນທິສັນຍາກ່ຽວກັບການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາສຳລັບການປົກປັກຮັກຂອງບຸກຄົນຈາກການບັງຄັບໃຊ້ຫາຍສາບສູນ, ສົນທິສັນຍາສາກົນກ່ຽວກັບສິດທິທາງເສດຖະກິດ, ສັງຄົມແລະວັດທະນະທຳ, ແລະສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ.
ສຳລັບສົນທິສັນຍາສາກົນກ່ຽວກັບການປົກປ້ອງສິດທິຂອງຜູ້ອອກແຮງງານອົບພະຍົບແລະສະມາຊິກຂອງຄອບຄົວຂອງເຂົາເຈົ້າແລະສຳລັບການສົນທິສັນຍາກ່ຽວກັບສິດທິຂອງເດັກນ້ອຍແມ່ນຈະມີຜົນບັງຄັບໃຊ້ພາຍຫລັງທີ່ໄດ້ມີພາຄີຄົບ 10 ລັດ ຕາມທີ່ໄດ້ກຳນົດໃນມາດຕາທີ 77 ຂອງອະນຸສັນຍາໂຕຫຼ້າສຸດ.

ແມ່ນໄດ້ຈັດຕັ້ງຂະບວນການເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຕາມຄຳແນະນຳ ຕ່າງໆຂອງຄະນະກຳມາທິການ. ຂະບວນການດັ່ງກ່າວປະກອບດ້ວຍການແຕ່ງຕັ້ງນັກລາຍງານທີ່ມີ ໜ້າທີ່ໃນການຕິດຕາມການຈັດຕັ້ງປະຕິບັດຕາມບົດທວນ. ນັກລາຍງານທີ່ວ່ານີ້ແມ່ນຈະມີໜ້າທີ່ຕາມວາ ລະທີ່ກຳນົດ ຫຼື ຕາມໜ້າວຽກທີ່ມີ ດັ່ງໃນຕົວຢ່າງຂອງ CEDAW. ໃນເວລາທີ່ລັດພາຄີທີ່ກ່ຽວຂ້ອງໄດ້ ດຳເນີນການຈັດຕັ້ງປະຕິບັດຕາມຄຳແນະນຳຂອງອົງກອນສິດທິມະນຸດບໍ່ວ່າຈະເປັນອັນທີ່ເພິ່ງ ພໍໃຈຫຼືບໍ່ກໍ່ຕາມ, ນັກລາຍງານດັ່ງກ່າວແມ່ນອາດຈະຂໍຈັດການພົບປະເພື່ອປຶກສາຫາລືກັບຜູ້ຕາງໜ້າທາງການທູດຂອງລັດພາຄີທີ່ກ່ຽວຂ້ອງ, ປົກກະຕິແລ້ວນັກການທູດທີ່ວ່ານັ້ນຕ້ອງແມ່ນຄະນະທາງການທູດທີ່ປະຈຳໃນນະຄອນເຈນີວາຫຼືນິວຢອກ.

### *ພາກປະຊາສັງຄົມສາມາດເຂົ້າຮ່ວມໄດ້ແນວໃດ?*

ໃນກໍລະນີທີ່ພາກປະຊາສັງຄົມມີສ່ວນຮ່ວມໃນການຮ້ອງທຸກຂອງບຸກຄົນ (ຕົວຢ່າງ: ເນື່ອງຈາກວ່າພວກເຂົາເຈົ້າໃຫ້ການຊ່ວຍເຫຼືອຜູ້ຮ້ອງທຸກໃນການຍື່ນຄຳຮ້ອງຟ້ອງ), ພວກເຂົາເຈົ້າອາດຈະໃຫ້ຂໍ້ມູນກ່ຽວກັບວິທີການພິຈາລະນາຂອງອົງກອນສິດທິມະນຸດໄດ້.

**ການປະເມີນເບິ່ງການຈັດຕັ້ງປະຕິບັດຕາມຄຳພິຈາລະນາຂອງອົງກອນສິດທິມະນຸດ**

ໃນປີ 2010, ອົງການ Open Society Justice Initiative ໄດ້ຈັດພິມນາບົດລາຍງານທີ່ມີຊື່ວ່າ *ຈາກຄຳຕັດສິນໄປສູ່ຄວາມຍຸດຕິທຳ - ການຈັດຕັ້ງປະຕິບັດຕາມຄຳຕັດສິນຂອງກົນໄກສິດທິມະນຸດສາກົນແລະພາກພື້ນ,* ເປັນບົດລາຍງານທີ່ໄດ້ກວດສອບຫາສິ່ງທ້າທາຍຂອງການປະຕິບັດຕາມຄຳຕັດສິນຂອງອົງກອນສິດທິມະນຸດສາກົນແລະພາກພື້ນເຊັ່ນ: ອົງກອນສິດທິມະນຸດຫະປະຊາຊາດ, ລະບົບກົນໄກສິດທິມະນຸດຂອງອາຟຣິກາ, ສະຫະພາບເອີຣົບແລະຂອງອົງການລະຫວ່າງລັດໃນອາເມລິກາ.

ບົດລາຍງານໄດ້ສະແດງໃຫ້ເຫັນເຖິງຜົນສຳເລັດໃນໄລຍະ 25 ປີຜ່ານມາ, ທຸກລະບົບກົນໄກທັງໝົດເຫຼົ່ານີ້ກໍ່ແມ່ນໄດ້ປະເຊີນກັບອຸປະສັກໃນການເອົາຄຳຕັດສິນນັ້ນໄປຈັດຕັ້ງປະຕິບັດໃນພາກສະໜາມ. ໃນຫຼາຍໆກໍລະນີທີ່ມີການຕັດສິນໃນບັນຫາທີ່ສຳຄັນ, ແຕ່ວ່າມັນກໍ່ຍັງບໍ່ສາມາດປະສົບຜົນສຳເລັດໄດ້. ເມື່ອດຳເນີນການວິເຄາະເບິ່ງການຈັດຕັ້ງປະຕິບັດຕາມຄຳຕັດສິນຂອງອົງກອນສິດທິມະນຸດ, ຜົນທີ່ໄດ້ກໍ່ພົບວ່າ "ໂດຍທົ່ວໄປແລ້ວ, ການປະຕິບັດທີ່ມີຜົນສຳເລັດນັ້ນແມ່ນມັນເກີດຂຶ້ນໃນກໍລະນີທີ່ມີລະບົບການເມືອງທີ່ມີປະຊາທິປະໄຕແລະໃນກໍລະນີທີ່ມີການຮ້ອງຟ້ອງຕໍ່ລັດກ່ຽວກັບລະບຽບກົດໝາຍທີ່ສະຫລັບຊັບຊ້ອນ. ໃນບ່ອນທີ່ສາມາດດຳເນີນການຈັດຕັ້ງປະຕິບັດໄດ້ດີນັ້ນສ່ວນຫລາຍແລ້ວແມ່ນການມີສ່ວນຮ່ວມຂອງພາກປະຊາສັງຄົມທີ່ເຂັ້ມແຂງໃນການຕິດຕາມກວດກາແລະການນຳໃຊ້ຄວາມກົດດັນພາຍໃນປະເທດຕ່າງໆ. "

### 5.2. ສະພາສິດທິມະນຸດ

*ການຕິດຕາມວຽກງານຂອງຂອງສະພາສິດທິມະນຸດ*

ມະຕິຂອງສະມັດຊາໃຫຍ່ເລກທີ 60/251 ໄດ້ສ້າງຕັ້ງສະພາສິດທິມະນຸດ (ສະພາ) ພ້ອມທັງໄດ້ກຳນົດ ໜ້າທີ່ວິທີການເຮັດວຽກຂອງສະພາໃນດ້ານການເປີດກອງປະຊຸມເພື່ອຕິດຕາມກວດກາການຈັດຕັ້ງປະ ຕິບັດຕາມແນວທາງຂອງສະພາ.

**ສະພາໃຫ້ການຕິດຕາມກ່ຽວກັບບັນຫາສິດທິມະນຸດທີ່ລົງເລິກໃນດ້ານ:**

- ສ້າງເອກະສານຄູ່ມືທີ່ລະອຽດຊັດເຈນເພື່ອຕິດຕາມການຈັດຕັ້ງປະຕິບັດຕາມມະຕິຕົກລົງແລະຄຳຕັດສິນທີ່ສະພາໄດ້ເຮັດອອກມາ. ມະຕິຕົກລົງໂດຍປົກກະຕິແມ່ນຈະປະກອບມີຂໍ້ກຳນົດຕ່າງໆທີ່ວາງໃຫ້ສະພາ "ຮັກສາໜ້າວຽກທີ່ມີ". ນີ້ຫມາຍຄວາມວ່າວຽກງານທີ່ກ່ຽວຂ້ອງດ້ານສິດທິມະນຸດຕ່າງໆແມ່ນ ຍັງຈະໄດ້ມີການສົນທະນາຄົ້ນຄົ້ວໃນກອງປະຊຸມຂອງສະພາຕໍ່ໄປ.
- ຈັດກອງປະຊຸມສາມັນແລະວິສາມັນຕາມວາລະທີ່ມີໃນແຕ່ລະປີ. ນີ້ແມ່ນຕົວຢ່າງທີ່ຈະແຈ້ງກ່ຽວກັບ ກອງປະຊຸມສາມັນແລະກອງປະຊຸມວິສາມັນທີ່ອາດຈະໄດ້ຈັດຕາມການຮຽກຮ້ອງ (ເຊັ່ນ: ກອງປະຊຸມວິສາມັນກ່ຽວກັບສະຖານະການສິດທິມະນຸດຢູ່ໃນສາທາລະນະລັດອາຣັບຊີເລຍໃນປີ 2011 ແລະ 2012).
- ມອບໝາຍໜ້າທີ່ໃຫ້ກົນໄກຂອງຕົນ, ເຊິ່ງລວມມີຂະບວນການພິເສດ, ຫຼືອົງກອນຍ່ອຍຫຼື ສຳນັກງານ OHCHR ເພື່ອຈະໄດ້ເຮັດໜ້າທີ່ຕາມການມອບໝາຍພ້ອມທັງຕ້ອງໄດ້ລາຍງານສິ່ງທີ່ໄດ້ປະຕິບັດນັ້ນ ຄືນໃຫ້ແກ່ສະພາ. ນອກນີ້ສະພາອາດຈະຕັດສິນໃຈແຕ່ງຕັ້ງກົນໄກສະເພາະກິດໃດໜຶ່ງຂຶ້ນມາ, ເຊັ່ນ: ຄະນະກຳມາທິການສອບຖາມຫລືມີພາລະກິດຄົ້ນຫາຄວາມເປັນຈິງໂດຍມີອຳນາດໜ້າທີ່ໃນການສືບ ສວນການລະເມີດສິດທິມະນຸດແລະສົ່ງບົດລາຍງານສິ່ງທີ່ໄດ້ພົບນັ້ນໃຫ້ແກ່ສະພາໄດ້ຮັບຊາບ. ໜ້າທີ່ວຽກງານອື່ນໆທີ່ທາງສະພາໄດ້ມອບຫມາຍໃຫ້ລວມມີການສຶກສາຄົ້ນຄົ້ວຫຼືການຈັດກອງປະຊຸມຜູ້ຊ່ຽວຊານຫລືຄະນະບໍລິຫານ.

*ພາກປະຊາສັງຄົມສາມາດມີສ່ວນຮ່ວມໄດ້ແນວໃດ?*

ຮູບແບບການຕິດຕາມກວດກາທີ່ອະທິບາຍຂ້າງເທິງນີ້ແມ່ນວິທີການເຮັດວຽກຕາມມາດຕະຖານຂອງສະພາ. ຮູບແບບສຳລັບການມີສ່ວນຮ່ວມຂອງພາກປະຊາສັງຄົມແມ່ນມີໃນແບບດຽວກັນອົງການ NGO ທີ່ມີສະຖານະເປັນທີ່ປຶກສາຫາລືໃຫ້ແກ່ ECOSOC, ທີ່ມີສິດໜ້າທີ່ໃນການລາຍງານເປັນລາຍລັກອັກສອນແລະທາງປາກເປົ່າ, ແລະດຳເນີນການຈັດກອງປະຊຸມນອກລອບ. ອົງການ NGOs ທີ່ບໍ່ໄດ້ເດີນທາງໄປນະຄອນເຈນີວາເພື່ອເຂົ້າຮ່ວມ

ໃນກອງປະຊຸມຂອງສະພາສິດທິມະນຸດແມ່ນອາດຈະຖະແຫລງປາກເປົ່າທາງວິດີໂອຄອນເຟີເລັນສໍາລັບຫົວຂໍ້ທີ່ຕົນເອງຕ້ອງໄດ້ເວົ້າໃນທີ່ປະຊຸມ. ສໍາລັບຄໍາແນະນໍາເພີ່ມເຕີມ, ສາມາດອ່ານໄດ້ໃນຄູ່ມື ຂອງ OHCHR ກ່ຽວກັບພາກປະຊາສັງຄົມ - *ການເຮັດວຽກຮ່ວມກັບໂຄງການສິດທິມະນຸດສະຫະປະຊາຊາດ* ແລະ ຄູ່ມືຝຶກຫັດຂອງ *OHCHR ສໍາລັບພາກປະຊາສັງຄົມທີ່ກ່ຽວຂ້ອງກັບສະພາສິດທິມະນຸດ*[19] ທີ່ສາມາດເບິ່ງໃນເວບໄດ້.[20]

ອີງຕາມຖະແຫລງການທີ່ເປັນລາຍລັກອັກສອນແລະທາງປາກແລະກິດຈະກໍານອກລອບ, ມັນເປັນມາດຕະຖານການປະຕິບັດທີ່ຈະຕ້ອງເຊື້ອເຊີນພາກປະຊາສັງຄົມໃຫ້ປະກອບສ່ວນໃນການສຶກສາຄົ້ນຄ້ວາແລະເຂົ້າຮ່ວມໃນກອງປະຊຸມຜູ້ຊ່ຽວຊານແລະຂອງຄະນະບໍລິຫານທີ່ໄດ້ຮັບມອບໝາຍຈາກສະພາ. ຍິ່ງໄປກວ່ານັ້ນ, ອົງການ NGO ອາດມີສ່ວນຮ່ວມໃນກອງປະຊຸມປຶກສາຫາລືກ່ຽວກັບ
ຂໍ້ມູນທີ່ຈັດຄູ່ຂະໜານກັບສະພາເຊິ່ງເປັນກອງປະຊຸມທີ່ປຶກສາຫາລືເລື່ອງຂອງຮ່າງມະຕິຕົກລົງຕ່າງໆ.

ສຸດທ້າຍ, ມະຕິຕົກລົງແລະຄໍາຕັດສິນຂອງສະພາມັນໄດ້ສະທ້ອນໃຫ້ເຫັນເຖິງການໃຫ້ຄໍາໝັ້ນສັນຍາຂອງລັດພາຄີເພື່ອປົກປ້ອງແລະສົ່ງເສີມສິດທິມະນຸດ. ກ່າວອີກເທື່ອໜຶ່ງ, ພາກປະຊາສັງຄົມອາດຈະຄັດເລືອກບຸລິມະສິດແລະດໍາເນີນການເພື່ອກົດດັນໃຫ້ແກ່ການຈັດຕັ້ງປະຕິບັດຕາມຄໍາໝັ້ນສັນຍາສິດທິມະນຸດທີ່ລັດພາຄີໄດ້ໃຫ້ໄວ້ໃນເມືອກ່ອນ.

### *ອົງກອນຍ່ອຍ, ກົນໄກ ແລະ ພາລະໜ້າທີ່*

ຄໍາແນະນໍາຈໍານວນຫລາຍແມ່ນອອກໂດຍອົງກອນຍ່ອຍຂອງສະພາ ແລະ ກົນໄກສິດທິມະນຸດ, ເຊິ່ງລວມ:

- ຂະບວນການທົບທວນຄືນ (ເບິ່ງພາກ 5.4 ຂອງຄູ່ມື.);
- ຄະນະກໍາມາທິການທີ່ປຶກສາສະພາສິດທິມະນຸດ;
- ຂະບວນການຮ້ອງທຸກ;
- ຂະບວນການພິເສດ (ເບິ່ງຂໍ້ 5.3 ຂອງຄູ່ມື.);
- ກອງປະຊຸມທາງສັງຄົມ;
- ກອງປະຊຸມກ່ຽວກັບບັນຫາຊົນເຜົ່າ;
- ກົນໄກຊ່ຽວຊານກ່ຽວກັບສິດທິຂອງຊົນເຜົ່າພື້ນເມືອງ; ແລະກ່ຽວກັບສິດທິມະນຸດ ກັບການດໍາເນີນທຸລະກິດ.

ສໍາລັບຄູ່ມືກ່ຽວກັບການມີສ່ວນຮ່ວມຂອງພາກປະຊາສັງຄົມໃນອົງກອນທີ່ກ່າວມານີ້ແມ່ນສາມາດເບິ່ງ ໃນຄູ່ມືຂອງ OHCHR - *ການເຮັດວຽກກັບໂຄງການສິດທິມະນຸດສະຫະປະຊາຊາດ*

19 www.ohchr.org/EN/AboutUs/Pages/CivilSociety.aspx

20 www.ohchr.org/EN/HRBodies/HRC/Pages/NgoParticipation.aspx

ຄູ່ມືຝຶກຫັດສຳລັບການປະຊາສັງຄົມກ່ຽວກັບສະພາສິດທິມະນຸດແລະຄູ່ມືຝຶກຫັດກ່ຽວກອງປະຊຸມທາງສັງຄົມ.[21]

### 5.3. ຂະບວນການພິເສດ

*ການຕິດຕາມການລົງຢ້ຽມຢາມລັດພາຄີ*

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ຈາກຂະບວນການພິເສດແມ່ນມີຄວາມຈຳເປັນທີ່ຕ້ອງໄດ້ຮັບການເຊື້ອເຊີນຂອງລັດຖະບານທີ່ກ່ຽວຂ້ອງ. ຂະບວນການພິເສດຈະໃຫ້ການຕິດຕາມການຢ້ຽມຢາມດັ່ງກ່າວໂດຍ:

- ຈະລາຍງານຢ່າງເປີດເຜີຍໃນຕອນທີ່ປະຊຸມ ແລະ

ໃນຕອນທີ່ມີການພົບປະກັບສື່ມວນຊົນໃຫ້ແກ່ສາທາລະນະກ່ຽວກັບການຢ້ຽມຢາມດັ່ງກ່າວລົງເວັບໄຊ້;

- ຈັດກອງປະຊຸມກັບຜູ້ຕາງໜ້າທາງການທູດຂອງບັນດາປະເທດທີ່ກ່ຽວຂ້ອງ;
- ລົງຢ້ຽມຢາມປະເທດຫຼືພາກພື້ນທີ່ສາມາດອຳນວຍຄວາມສະດວກອອກໜັງສືເຊີນລົງຢ້ຽມຢາມຢ່າງເປັນທາງການໄດ້ (ເຊັ່ນ: ດຳເນີນການຢ້ຽມຢາມທາງວິຊາການ); ແລະ
- ຂຽນໜັງສືແຈ້ງການຢ່າງເປັນທາງການກ່ຽວກັບການຂໍລົງຢ້ຽມຢາມນັ້ນໂດຍແຈ້ງໃຫ້ທາງ ສາທາລະນະຮັບຊາບໜັງສືແຈ້ງນັ້ນນຳ.

  ໃນເວລາທີ່ການຢ້ຽມຢາມໄດ້ຖືກປະຕິບັດ, ຂະບວນການພິເສດກໍ່ຈະພັດທະນາວິທີການຕ່າງໆ ເພື່ອຕິດຕາມການລົງຢ້ຽມຢາມນັ້ນ. **ວິທີການເຫຼົ່ານັ້ນມີ:**

1. ການຕິດຕາມການລົງໄປຢ້ຽມຢາມ. ຂະບວນການພິເສດໄດ້ດຳເນີນການລົງຢ້ຽມຢາມເພື່ອຕິດຕາມ ພາລະກິດຂອງລັດພາຄີທີ່ຜ່ານມາເປັນເວລາຫລາຍຄັ້ງ. ການໄປຢ້ຽມຢາມເຫຼົ່ານັ້ນມັນໄດ້ໃຫ້ໝາກຜົນ ຂອງການປະເມີນຢ່າງລະອຽດກ່ຽວກັບຄວາມຄືບໜ້າແລະບັນຫາທີ່ຕ້ອງໄດ້ດຳເນີນການແກ້ໄຂຕາມ ບົດສະຫລຸບແລະຄຳແນະນຳ. ການຕິດຕາມການລົງຢ້ຽມຢາມນັ້ນແມ່ນເປັນການປະຕິບັດທີ່ດີ, ຢ່າງໃດກໍຕາມ, ການຢ້ຽມຢາມໃນຈຳນວນ 40-50 ປະເທດຕໍ່ປີຂອງຂະບວນການພິເສດນັ້ນກໍ່ຍັງຖືວ່າໜ້ອຍຢູ່ເພາະເນື່ອງມາຈາກຊັບພະຍາກອນມີຈຳກັດ.

21 www.ohchr.org/EN/AboutUs/Pages/CivilSociety.aspx

**ຕົວຢ່າງຂອງການຕິດຕາມການລົງຢ້ຽມຢາມຂອງນັກລາຍງານພິເສດ**

ນັກລາຍງານພິເສດກ່ຽວກັບເດັກນ້ອຍ, ໂສເພນີເດັກແລະຮູບພາບລາມົກເດັກ

- 2012: ກົວເຕມາລາ (A / HRC / 22/54 / Add1)

ນັກລາຍງານພິເສດກ່ຽວກັບການທໍລະມານແລະການປະຕິບັດຫຼືລົງໂທດທີ່ໄຮ້ມະນຸດສະທໍາ

- 2012: ອູລູກວຍ (A / HRC / 22/53 / Add.3)

ນັກລາຍງານພິເສດກ່ຽວກັບຮູບແບບການຈໍາແນກສີຜິວ, ການຈໍາແນກເຊື້ອຊາດ, ຄວາມກຽດຊັງ ແລະ ລັດທິຊາດນິຍົມ

- 2011: ຮັງກາລີ (A / HRC / 20/33 / Add1)

ນັກລາຍງານພິເສດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ສາເຫດແລະຜົນສະທ້ອນ

- 2011: ສະຫະລັດອະເມລິກາ (A / HRC / 17/26 / Add.5)
- 2010: ເອວສະວາດໍ (A / HRC / 17/26 / Add.2) ແລະ ອາຈີເລຍ (A / HRC / 17/26 / Add.3)

ນັບລາຍງານພິເສດກ່ຽວກັບການສົ່ງເສີມແລະການປົກປ້ອງສິດທິມະນຸດແລະເສລີພາບພື້ນຖານໃນຂະນະທີ່ມີການປະເຊີນກັບການກໍ່ການຮ້າຍ

## 2. ບົດລາຍງານຕິດຕາມກວດກາ

ມີໜ້າທີ່ ທີ່ໄດ້ຮັບມອບໝາຍຫລາຍຢ່າງກ່ຽວກັບການເຮັດບົດລາຍງານການຕິດຕາມໂດຍໃຊ້ຂໍ້ມູນທີ່ໄດ້ຈາກລັດຖະບານ, ສະຖາບັນສິດທິມະນຸດແຫ່ງຊາດແລະພາກປະຊາສັງຄົມ.

ມີບົດລາຍງານຫລາຍອັນທີ່ໜ້າສົນໃຈກ່ຽວກັບການລົງຢ້ຽມຢາມປະເທດຕ່າງໆທີ່ໄດ້ຮັບການຈັດທໍາໂດຍກຸ່ມໜ່ວຍງານຈັດຕັ້ງປະຕິບັດວຽກກ່ຽວກັບການບັງຄັບຫລືການຫາຍສາບສູນແບບບໍ່ໄດ້ສະໝັກໃຈ, ນັກລາຍງານພິເສດກ່ຽວກັບການຖືກທໍລະມານ, ນັກລາຍງານພິເສດກ່ຽວກັບວິສາມັນຄາດຕະກໍາ, ການຕັດສິນຫຼືການປະຫານທີ່ບໍ່ມີເຫດຜົນ, ນັກລາຍງານພິເສດກ່ຽວກັບສິດທິມະນຸດແລະຄວາມທຸກຍາກທີ່ຮ້າຍແຮງ, ແລະ ນັກລາຍງານພິເສດກ່ຽວກັບສິດເສລີພາບໃນການເຊື່ອຖືສາດສະໜາຫຼືຄວາມເຊື່ອຕ່າງໆ.

**ບົດລາຍງານການຕິດຕາມກວດກາຂອງກຸ່ມໜ່ວຍງານກ່ຽວກັບການບັງຄັບຫຼືຖືກບັງຄັບໃຫ້ຫາຍສາບສູນ**

ໃນປີ 2010, ກຸ່ມໜ່ວຍງານກ່ຽວກັບການບັງຄັບຫຼືຖືກບັງໃຫ້ຫາຍສາບສູນກໍໄດ້ຮັບຮອງເອົາບັນຊີລາຍການເພື່ອຕິດຕາມກວດກາ, ຈັດຕັ້ງກອງປະຊຸມໂຕະມົນເພື່ອສຶກສາເບິ່ງບັນດາຄຳແນະນຳຂອງກຸ່ມ ໜ່ວຍງານ, ລາຍງານຫຍໍ້ກ່ຽວກັບສະຖານະການໃນເວລາທີ່ຢ້ຽມຢາມປະເທດດັ່ງກ່າວ, ແລະ ດຳເນີນການທົບທວນບາດກ້າວທີ່ຈະໃຊ້ໃນການເກັບກຳຂໍ້ມູນທີ່ໄດ້ຈາກພາກສ່ວນລັດຖະບານແລະບໍ່ແມ່ນລັດຖະບານ. ຕັ້ງແຕ່ນັ້ນເປັນຕົ້ນມາ, ກຸ່ມໜ່ວຍງານກໍໄດ້ອອກບົດລາຍງານການຕິດຕາມຄວາມຄືບໜ້າແລະບັນດາອຸປະສັກທີ່ມີຕໍ່ສະຖານະການການຖືກບັງໃຫ້ຫາຍສາບສູນຕາມທີ່ໄດ້ລົງຢ້ຽມຢາມປະເທດໂກລົມເບຍ, ເອວສະວາດໍ, ກົວເຕມາລາ, ຮອນດູຣາສ, ໂມນາໂກ, ແລະ ອິນໂດເນເຊຍ.

**ຕາຕະລາງຕິດຕາມກວດກາຂອງ ນັກລາຍງານພິເສດກ່ຽວກັບສິດເສລີພາບໃນການເຊື່ອຖືສາສະໜາຫຼືຄວາມເຊື່ອຕ່າງໆ**

ນັກລາຍງານພິເສດກ່ຽວກັບສິດເສລີພາບໃນການເຊື່ອຖືສາສະໜາຫຼືຄວາມເຊື່ອຕ່າງໆໄດ້ລາຍງານສະພາບການພາຍຫຼັງການໄປຢ້ຽມຢາມປະເທດທີ່ກ່ຽວຂ້ອງ. ຕາຕະລາງການຕິດຕາມປະເທດຕ່າງໆທີ່ໄດ້ດຳເນີນການຢ້ຽມຢາມມາຕັ້ງແຕ່ປີ 2005 ແມ່ນມີທັງບົດສະຫຼຸບແລະຂໍ້ສະເໜີແນະຈາກການລົງຢ້ຽມຢາມປະເທດທີ່ກ່ຽວຂ້ອງ ແລະ ຂໍ້ມູນຕິດຕາມຈາກເອກະສານຂອງ ສປຊ ທີ່ກ່ຽວຂ້ອງ, ເຊິ່ງລວມມີຂໍ້ມູນຈາກກົນໄກການທົບທວນ, ຂະບວນການພິເສດແລະອົງກອນສິດທິມະນຸດ.[22]

**3. ກິດຈະກຳການຕິດຕາມ.**

ບໍ່ວ່າຈະເປັນການລິເລີ່ມຂອງຂະບວນການພິເສດ, ລັດຖະບານ, ສະຖາບັນສິດທິມະນຸດແຫ່ງຊາດ, ພາກປະຊາສັງຄົມຫຼືສຳນັກງານ OHCHR, ກິດຈຳການຕິດຕາມໃນລະດັບຊາດ, ລະດັບພາກພື້ນຫຼືສາກົນແມ່ນອາດຈະເປັນປະໂຫຍດເພື່ອນຳໃຊ້ໃນການປະເມີນຄວາມຄືບໜ້າ, ແລະແລກປ່ຽນປະສົບການແລະສິ່ງທ້າທາຍຕ່າງໆໃນການຈັດຕັ້ງປະຕິບັດຕາມຂໍ້ສະເໜີແນະສຳລັບລັດທີ່ຖືກລົງຢ້ຽມຢາມ. ກິດຈະກຳດັ່ງກ່າວອາດດຳເນີນໄປໃນຮູບແບບຂອງກອງປະຊຸມໂຕະມົນ, ກອງປະຊຸມຜູ້ຊ່ຽວຊານຫລືກອງປະຊຸມປຶກສາຫາລື.

---

[22] www.ohchr.org/EN/Issues/FreedomReligion/Pages/Visits.aspx

**ກອງປະຊຸມປຶກສາຫາລືກ່ຽວກັບການເປັນຂ້າທາດໃນປະເທດມໍລິເຕເນຍ**

ໃນເດືອນມັງກອນ 2013, ນັກລາຍງານພິເສດກ່ຽວກັບຮູບແບບການເປັນຂ້າທາດໃນປະຈຸບັນໄດ້ນຳພາຈັດກອງປະຊຸມເພື່ອການຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດຕາມຄຳແນະນຳທີ່ໄດ້ຈາກການລົງຢ້ຽມຢາມປະເທດມໍລິເຕເນຍ. ພະນັກງານລັດຖະບານແລະອົງການ CSOs ກໍ່ໄດ້ເຂົ້າຮ່ວມກອງປະຊຸມເພື່ອພັດທະນາແຜນການໃນການຈັດຕັ້ງປະຕິບັດຕາມຄຳແນະນຳຈາກນັກງລາຍງານພິເສດ. ສຳນັກງານ OHCHR ໃນ ມໍລິເຕເນຍໄດ້ເຮັດວຽກຮ່ວມກັບພາກປະຊາສັງຄົມກະຕຸ້ນໃຫ້ລັດຖະບານຮັບຮອງເອົາຄຳແນະນຳ ແລະ ແຜນການຈັດຕັ້ງປະຕິບັດດັ່ງກ່າວຢ່າງເປັນທາງການ.

**ການເຜີຍແຜ່ບົດສະຫລຸບກ່ຽວກັບສະຖານະການຂອງຊົນເຜົ່າພື້ນເມືອງໃນປະເທດຊີລີແລະອາເຈນຕິນາ**

ໃນເດືອນມັງກອນ 2010, ນັກລາຍງານພິເສດກ່ຽວກັບສະຖານະການສິດທິມະນຸດແລະເສລີພາບຂັ້ນພື້ນຖານຂອງຊົນເຜົ່າພື້ນເມືອງໄດ້ຈັດກອງປະຊຸມວິດີໂອຄອນເຟີເລັນທີ່ກ່ຽວຂ້ອງກັບສິດທິຂອງຊົນເຜົ່າພື້ນເມືອງໃນປະເທດຊີລີ. ກອງປະຊຸມວິດີໂອດັ່ງກ່າວໄດ້ອອກອາກາດພ້ອມກັນໃນຫ້າຕົວເມືອງໃນປະ ເທດຊີລີ, ກອງປະຊຸມນີ້ແມ່ນໄດ້ຮັບການສະໜັບສະໜູນຈາກສະມາຄົມພາກປະຊາສັງຄົມ ແລະສຳນັກ ງານ OHCHR ປະຈຳໃນອາເມລິກາໃຕ້.
ໃນການນຳສະເໜີຂອງນັກລາຍງານພິເສດນັ້ນແມ່ນໄດ້ອະທິບາຍບົດສະຫຼຸບແລະຜົນຈາກການສັງເກດທີ່ມີຢູ່ໃນບົດລາຍງານລະດັບຊາດ.
ໃນປີ 2012, ນັກລາຍງານພິເສດໄດ້ກ່າວຊ້ຳກ່ຽວກັບປະສົບການໃນອາເຈນຕິນາ, ບ່ອນທີ່ ສປຊ ໄດ້ເປັນເຈົ້າພາບກອງປະຊຸມວິດີໂອ.

*ພາກປະຊາສັງຄົມຈະມີສ່ວນຮ່ວມໄດ້ແນວໃດ?*

*ການຮ້ອງຂໍລົງຢ້ຽມຢາມ*

- ຂໍສະເໜີໄປຍັງຜູ້ທີ່ມີໜ້າທີ່ຮັບຜິດຊອບເພື່ອຂໍລົງຢ້ຽມຢາມປະເທດພ້ອມທັງໃຫ້ຂໍ້ມູນທີ່ຕົງໄປຕົງມາກ່ຽວກັບພາລະກິດທີ່ຂໍລົງໄປຢ້ຽມຢາມ;
- ລໍຖ້າການແຈ້ງກ່ຽວກັບການລົງຢ້ຽມຢາມໂດຍຜ່ານລະບົບອີເມວພາກປະຊາສັງຄົມ ຂອງສຳນັກງານ OHCHR;
  - ລະດົມໃຫ້ລັດຖະບານແລະພາກສ່ວນກ່ຽວຂ້ອງອື່ນໆ (ເຊັ່ນ: ສະມາຊິກຂອງສະພາແຫ່ງຊາດ, ໜ່ວຍງານຄຸ້ມຄອງທາງການທູດ) ເພື່ອຮັບປະກັນຄວາມປອດໄພຂອງການຢ້ຽມຢາມ;
  - ມີສ່ວນຮ່ວມໃນການກະກຽມແລະ ຮັບຮູ້ຂະບວນການຢ້ຽມຢາມ;
  - ປະກອບສ່ວນຂໍ້ມູນໃຫ້ແກ່ບົດລາຍງານການຕິດຕາມ;
  - ສະເໜີຂໍເຂົ້າຮ່ວມຕາມຄວາມເໝາະສົມສຳລັບບາງກິດຈະກຳທີ່ກ່ຽວຂ້ອງ.

### *ການຕິດຕາມການສື່ສານ*

ບົດລາຍງານການສື່ສານຮ່ວມຂອງຂະບວນການພິເສດແມ່ນຈະຖືກສົ່ງໃຫ້ແກ່ສະພາສິດທິມະນຸດຢູ່ໃນແຕ່ລະກອງປະຊຸມສາມັນ.
ບົດລາຍງານດັ່ງກ່າວແມ່ນຈະອອກສາມຄັ້ງຕໍ່ປີ,
ບົດລາຍງານການສື່ສານແມ່ນຈະລວມມີບົດສະຫຼຸບຫຍໍ້ກ່ຽວກັບຂະບວນການສື່ສານກັນກັບລັດຫຼືອົງການຕ່າງໆ.
ຂໍ້ຄວາມຂອງການສື່ສານທີ່ສົ່ງແລະຮັບຈາກລັດຖະບານແມ່ນສາມາດເຂົ້າເຖິງໄດ້ໂດຍຜ່ານລະບົບເນັດເຊື່ອມໂຍງ.
ຂະບວນການພິເສດອາດຈະຮັບແລະພິຈາລະນາຂໍ້ມູນຂ່າວສານເພີ່ມເຕີມກ່ຽວກັບເນື້ອໃນການສື່ສານທີ່ໄດ້ສົ່ງໄປ.
ຂໍ້ມູນເພີ່ມເຕີມນັ້ນຕາມປົກກະຕິແລ້ວແມ່ນຂໍ້ມູນທີ່ໄດ້ມາຈາກແຫຼ່ງຂໍ້ມູນດຽວກັນທີ່ໄດ້ສົ່ງມາໃນເບື້ອງຕົ້ນ. ໃນປີ 2012,
ຂະບວນການພິເສດໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບການສື່ສານເປັນຈໍານວນ 21% ຂອງຄະດີຕ່າງໆ.

ຂະບວນການພິເສດອາດຈະສົ່ງຂໍ້ມູນການສື່ສານການຕິດຕາມກວດກາໃນເວລາທີ່ມີການພັດທະນາຫລັກປະກັນການແຊກແຊງໃໝ່.
ຫລາຍໆການສື່ສານ ຕິດຕາມກວດກາແມ່ນອີງໃສ່ຂໍ້ມູນເພີ່ມເຕີມທີ່ໄດ້ສົ່ງມາ. ໃນປີ 2012, 31% ຂອງການສື່ສານແມ່ນເປັນຂໍ້ມູນ
ກ່ຽວກັບການສື່ສານຕິດຕາມກວດກາ.

ການຕິດຕາມການສື່ສານຍັງໄດ້ດໍາເນີນໃນຊ່ວງເວລາທີ່ມີການຢ້ຽມຢາມປະເທດກໍ່ຄືຜ່ານທາງການປຶກ
ສາຫາລືທາງການທູດກັບທີ່ມີຜູ້ຕາງໜ້າຂອງລັດທີ່ກ່ຽວຂ້ອງເຂົ້າຮ່ວມ.
ໃນບາງຄະດີທີ່ມີຄວາມສໍາຄັນ,ຂະບວນການພິເສດອາດຈະອອກຖະແຫລງຂ່າວກໍ່ໄດ້.

ການຕິດຕາມການສື່ສານແມ່ນຈະມີປະສິດທິພາບກໍ່ຕໍ່ເມື່ອມີຂະບວນການສັງເກດການໃນບົດລາຍງານປະຈໍາປີຂອງຜູ້ທີ່ໄດ້ຮັບມອບໝາ
ຍໜ້າທີ່.
ການສັງເກດສ່ວນຫລາຍແລ້ວຈະກ່ຽວຂ້ອງຕົ້ນຕໍກັບແນວໂນ້ມແລະຮູບແບບຂອງການລະເມີດສິດທິມະນຸດຢູ່ໃນປະເທດໃນລະຫວ່າງໄລ
ຍະເວລາຂອງການລາຍງານ, ແລະ ກໍ່ກ່ຽວກັບຈໍານວນຂອງການລະເມີດໃນສ່ວນບຸກຄົນ.

**ບົດລາຍງານຈາກການສັງເກດຂອງນັກລາຍງານພິເສດກ່ຽວກັບສິດທິຈົນເຖິງເສລີພາບໃນການຊຸມນຸມແລະ
ສ້າງສະມາຄົມແບບສັນຕິວິທີ**

ຕັ້ງແຕ່ໄລຍະທໍາອິດຂອງການເລີ້ມຕົ້ນພາລະບົດບາດໃນປີ 2010,
ນັກລາຍງານພິເສດໄດ້ອອກບົດລາຍງານສອງສະບັບກ່ຽວກັບການສັງເກດການທີ່ໄດ້ສະແດງຢໍ້າຄວາມເປັນຫ່ວງເປັນໄຍກ່ຽວກັບ
ກໍລະນີສະເພາະໃດໜຶ່ງຂອງການລະເມີດສິດທິມະນຸດ, ໂດຍສະເພາະໃນການໂຕ້ກັບຂໍ້ມູນການສື່ສານຕ່າງໆ.

### ຖານຂໍ້ມູນຂອງກຸ່ມໜ່ວຍງານກ່ຽວກັບສະຖານທີ່ກັກຂັງຕັດອິດສະຫລະພາບ

ຖານຂໍ້ມູນນີ້ແມ່ນເລີ່ມມາໃນປີ 2011, ເປັນຖານຂໍ້ມູນຂອງກຸ່ມໜ່ວຍງານກ່ຽວກັບສະຖານທີ່ກັກຂັງຕັດອິດສະຫລະພາບທີ່ເປັນເຄື່ອງມືການຄົ້ນຄ້ວາທີ່ມີປະໂຫຍດໃນການຊອກຫາເອກະສານຕ່າງໆຂອງໜ່ວຍງານຕັ້ງແຕ່ປີ 1991. ຖານຂໍ້ມູນສາມາດອຳນວຍຄວາມສະດວກໃຫ້ແກ່ການຄົ້ນຄ້ວາວິໃຈເຊີງຄຸນນະພາບແລະປະລິມານແລະສາມາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການກັກຂັງ, ຊ່ວຍທະນາຍແລະຜູ້ອື່ນໆ ທີ່ໄດ້ສົ່ງຄະດີກ່ຽວກັບການກັກຂັງມາໃຫ້ກຸ່ມຂອງໜ່ວຍງານ..[23]

### ການຕິດຕາມຄະດີກ່ຽວກັບການຖືກບັງຄັບຫຼືບັງຄັບໃຫ້ຫາຍສາບສູນໄປ

ກຸ່ມໜ່ວຍງານກ່ຽວກັບການບັງຄັບຫລືຖືກບັງຄັບໃຫ້ຫາຍສາບສູນໄປແມ່ນໄດ້ພະຍາຍາມທີ່ຈະສ້າງຊ່ອງທາງການສື່ສານລະຫວ່າງຄອບຄົວແລະລັດຖະບານທີ່ກ່ຽວຂ້ອງ. ທຸກໆຂໍ້ມູນເພີ່ມເຕີມທີ່ສຳຄັນທີ່ໄດ້ມາຈາກແຫລ່ງຕ່າງໆກ່ຽວກັບຄະດີທີ່ເດັ່ນໆແມ່ນຈະໄດ້ຖືກສົ່ງໃຫ້ກັບລັດຖະບານທີ່ກ່ຽວຂ້ອງ.

ສ່ວນຂໍ້ມູນໄດ້ຮັບການຈາກລັດຖະບານທີ່ກ່ຽວຂ້ອງກັບຄະດີດັ່ງກ່າວແມ່ນຈະຖືກສົ່ງໄປໃຫ້ແຫລ່ງທີ່ສົ່ງຂໍ້ມູນມາເພື່ອມີຄຳເຫັນ.

ກຸ່ມໜ່ວຍງານແມ່ນຈະສົ່ງຂໍ້ມູນທີ່ໄດ້ຮັບກ່ຽວກັບປະຕິກິລິຍາຂອງລັດທີ່ມີຕໍ່ບັນຫາທີ່ກ່ຽວຂ້ອງກັບການຫາຍສາບສູນຂອງບຸກຄົນໃດໜຶ່ງນັ້ນໄປຫາບ່ອນທີ່ມີແຫລ່ງຂໍ້ມູນພ້ອມທັງເຊື້ອເຊີນໃຫ້ຜູ້ທີ່ມີຂໍ້ມູນນັ້ນມາໃຫ້ຂໍ້ມູນເພີ່ມເຕີມ.

ຖ້າຫາກວ່າຜູ້ທີ່ມີຂໍ້ມູນນັ້ນບໍ່ໄດ້ໃຫ້ຂໍ້ມູນໃດໆເພີ່ມພາຍໃນຫົກເດືອນ,

ຫຼືຖ້າຫາກວ່າຂໍ້ມູນເພີ່ມເຕີມນັ້ນມີຄວາມຂັດແຍ້ງກັບຂໍ້ມູນຂອງລັດຖະບານທີ່ເຫັນວ່າບໍ່ໜ້າເຊື່ອຖື,

ຄະດີດັ່ງກ່າວຖືວ່າສິ້ນສຸດລົງ. ຄະດີຕ່າງໆທີ່ໄດ້ຮັບມານັ້ນຈະບໍ່ມີອາຍຸການ, ຈົນກ່ວາຈະໄດ້ຖືກພິຈາລະນາຕັດສິນ.

ທາງກຸ່ມໜ່ວຍງານແມ່ນຈະໄດ້ແຈ້ງເຕືອນບັນດາລັດຖະບານທີ່ກ່ຽວຂ້ອງ ໃນທຸກໆປີກ່ຽວກັບຄະດີທີ່ຍັງລໍຖ້າການພິຈາລະນາ ແລະ ຈະແຈ້ງເຕືອນທຸກໆສີ່ເດືອນກ່ຽວກັບຄະດີທີ່ຕ້ອງໄດ້ ແກ້ໄຂດ່ວນນັບຕັ້ງແຕ່ໄດ້ຮັບມາ. ເພື່ອເຮັດໃຫ້ມີຄວາມເປັນໄປໄດ້ ແລະ ຕາມການຮຽກຮ້ອງ, ໜ່ວຍງານຈະ ໃຫ້ຂໍ້ມູນທີ່ອັບເດດແກ່ທາງລັດຖະບານ ຫຼື ຜູ້ທີ່ໄດ້ລາຍງານກ່ຽວກັບຄະດີດັ່ງກ່າວເປັນປະຈຳ.[24]

---

23 www.unwgaddatabase.org/un/

24 ຂໍ້ມູນເພີ່ມເຕີມແມ່ນສາມາດເບິ່ງໄດ້ທີ່ເອກະສານວ່າດ້ວຍການປັບປຸງວິທີການເຮັດວຽກຂອງກຸ່ມໜ່ວຍງານ (A/HRC/10/9, Annex 1).

*ພາກປະຊາສັງຄົມສາມາດເຂົ້າຮ່ວມໄດ້ແນວໃດ?*

- ກວດສອບບົດລາຍງານການສື່ສານເປັນປະຈຳເພື່ອທີ່ຈະຮຽນຮູ້ກ່ຽວກັບຂໍ້ມູນສື່ສານທີ່ກ່ຽວຂ້ອງກັບສະຖານະການ ແລະຄະດີທີ່ກ່ຽວຂ້ອງ;
- ເຜີຍແຜ່ບົດລາຍງານຢ່າງກວ້າງຂວາງພາຍໃນເຄືອຂ່າຍທ້ອງຖິ່ນ, ໃນລະດັບພາກພື້ນ, ລະດັບຊາດ, ແລະສາກົນເພື່ອເປັນການການເກັບກຳຂໍ້ມູນເພີ່ມເຕີມກ່ຽວກັບຄະດີທີ່ເກີດຂື້ນ;
- ສົ່ງຂໍ້ມູນທີ່ມີການອັບເດດກ່ຽວກັບຄວາມຄືບໜ້າດ້ານບວກຫຼືລົບຂອງກັບການຂໍ້ມູນສື່ສານທີ່ໄດ້ສົ່ງຜ່ານມາ;
- ທົບທວນການຄຳເຫັນຂອງລັດຖະບານທີ່ມີຕໍ່ຂໍ້ມູນຂອງຄະດີທີ່ຖືກສົ່ງໃຫ້ແກ່ຂະບວນການພິເສດ;
- ພັດທະນາການພົວພັນໃຫ້ເປັນປົກກະຕິກັບຂະບວນການພິເສດໂດຍຜ່ານທີມງານສະໜັບສະໜູນຂອງ OHCHR; ແລະ
- ນຳໃຊ້ທີ່ຢູ່ອີເມລ urgent-action@ohchr.org ຫຼືທີ່ຢູ່ອີເມລທົ່ວໄປຂອງຂະບວນການພິເສດທີ່ກ່ຽວຂ້ອງ.

ການເຂົ້າຫາຄູ່ມືຂອງຂະບວນການພິເສດສາມາດເຂົ້າໄດ້ທີ່:

http://goo.gl/5qoNL

ການສື່ສານແລະການຕິດຕາມການສື່ສານຈາກພາກພື້ນໃນປີ 2012



*ການຕິດຕາມບົດລາຍງານທີ່ສໍາຄັນ*

ໃນຖານະທີ່ເປັນການປະຕິບັດທີ່ມີມາດຕະຖານ, ຂະບວນການພິເສດແມ່ນໄດ້ຈັດຫຼືເຂົ້າຮ່ວມໃນກິດຈະກໍາເພື່ອນໍາສະເໜີຫຼືປຶກສາຫາລືບົດລາຍງານທີ່ສໍາຄັນໃຫ້ແກ່ສະພາສິດທິມະນຸດຫຼືສະມັດຊາໃຫຍ່.

ການປຶກສານັ້ນອາດຈັດແບບກອງປະຊຸມນອກລອບໃນລະຫວ່າງກອງປະຊຸມສະພາຫຼືກອງປະຊຸມທົ່ວໄປຫຼືກອງປະຊຸມປຶກສາຫາລື. ນອກນີ້ມັນຍັງເປັນເລື່ອງປົກກະຕິທີ່ຈະອອກຂ່າວຫຼືລົງເວບໄຊ້ແລະຈັດກອງປະຊຸມຖະແຫລງຂ່າວກ່ຽວກັບຫົວຂໍ້ຂອງບົດລາຍງານ.

ວັນຄົບຮອບວັນສາກົນຕ່າງໆທີ່ສໍາຄັນອາດຈະເປັນໂອກາດທີ່ຈະດຶງດູດຄວາມສົນໃຈຈາກສື່ມວນຊົນເພື່ອເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສິດທິມະນຸດໄດ້.

**ເຄື່ອງມືທາງເວບໄຊ້:**

**ບົດຄັດຫຍໍ້ກ່ຽວກັບສິດເສລີພາບໃນການເຊື່ອຖືສາສະໜາຫຼືຄວາມເຊື່ອຖືຕ່າງໆແລະການລົບເລີ່ມຕ້ານການຖືກທໍລະມານ**

**ບົດຄັດຫຍໍ້ກ່ຽວກັບສິດເສລີພາບໃນການເຊື່ອຖືສາສະໜາຫຼືຄວາມເຊື່ອຖືຕ່າງໆ**

ປີ 2011 ເປັນປີທີ່ມີຄວາມໝາຍສໍາຄັນທີ່ຄົບຮອບທີ 25 ຂອງການສ້າງຕັ້ງຂະບວນການນັກລາຍງານພິເສດກ່ຽວກັບສິດເສລີພາບທາງສາສະໜາຫຼືຄວາມເຊື່ອ. ເນື່ອງໃນໂອກາດດັ່ງກ່າວບົດຄັດຫຍໍ້ກ່ຽວກັບສິດເສລີພາບທາງສາສະໜາຫຼືຄວາມເຊື່ອກໍ່ໄດ້ເລີ່ມຕົ້ນດ້ວຍການສັງເກດການແລະການໃຫ້ຂໍ້ສະເໜີແນະຕ່າງໆທີ່ມີຜູ້ຮັບພິຊອບໜ້າທີ່ພຽງສີ່ຄົນຕັ້ງແຕ່ປີ 1986. ນັກລານງາຍພິເສດຖືເປັນເຄື່ອງມືສໍາລັບການປຸກລະດົມ, ການສຶກສາແລະຄົ້ນຄ້ວາ. ການເລີ່ມຕົ້ນຂອງນັກລາຍງານພິເສດແມ່ນມີຊຸ່ງວຊານກ່ຽວກັບບົດລາຍງານທີ່ໄດ້ເລີ່ມງານແຕ່ 1986 to 2011 ຕາມແຕ່ລະສະນິດຂອງງານທີ່ໄດ້ຮັບ.[25]

**ການລົບເລີ່ມການຕ້ານການທໍລະມານ**

ໃນປີ 2013, ນັກລາຍງານພິເສດກ່ຽວກັບການທໍລະມານໄດ້ເລີ່ມຕົ້ນແບບອອນລາຍທີ່ມີຂໍ້ມູນຂອງການຕິດຕາມກິດຈະກໍາ, ມີຂໍ້ມູນທີ່ສໍາຄັນຫລາຍຢ່າງ, ບົດລາຍງານຂອງພາກລັດແລະບົດລາຍງານສັງເກດການ. ນອກຈາກນີ້ຍັງມີຂໍ້ມູນການຖະແຫລງຂ່າວ, ການສໍາພາດ, ກອງປະຊຸມ, ການພິຈາລະນາຄະດີ, ຂໍ້ມູນທາງສື່ຕ່າງໆທີ່ກ່ຽວກັບການຕິດຕາມຂະບວນການລົງຢ້ຽມຢາມປະເທດ ແລະ ບົດລາຍງານຕ່າງໆທີ່ສໍາຄັນ.[26]

*ພາກປະຊາສັງຄົມຈະມີສ່ວນຮ່ວມໄດ້ແນວໃດ?*

- ຈັດ[27] ຫຼື ມີສ່ວນຮ່ວມໃນກິດຈະກໍາຄູ່ຂະໜານໃນລະຫວ່າງກອງປະຊຸມສະພາສິດທິມະນຸດທີ່ກ່ຽວກັບຫົວຂໍ້ຂອງບົດລາຍງານທີ່ສໍາຄັນ.
- ເອົາຜົນທີ່ໄດ້ໃນບົດສະຫລຸບແລະຂໍ້ສະເໜີແນະໃນບົດລາຍງານເພື່ອໄປຈັດຕັ້ງປະຕິບັດ ສ້າງຄວາມເຂັ້ມແຂງໃຫ້ແກ່ກິດຈະກໍາພາກປະຊາສັງຄົມ (ເຊັ່ນ: ການປຸກລະດົມ, ການສ້າງຄວາມອາດສາມາດ, ການປູກຈິດສໍານຶກ, ການຕິດຕາມກວດກາ)

[25] www.ohchr.org/EN/Issues/FreedomReligion/Pages/Standards.aspx

[26] http://antitorture.org

[27] ການຈັດກິດຈະກໍານອກລອບແມ່ນຈະຈໍາກັດສໍາລັບ NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC

## 5.4. ຂະບວນການທົບທວນ

ວົງຮອບທຳອິດຂອງຂະບວນການທົບທວນແມ່ນໄດ້ສຳເລັດໃນເດືອນຕຸລາ 2011 ໃນເວລາທີ່ລັດພາຄີ ສປຊ ທັງຫມົດໄດ້ຮັບການທົບທວນແລ້ວ. ໄລຍະທີສອງແລະໄລຍະຕໍ່ມາຂອງວົງຮອບຂອງການທົບທວນ, ລັດພາຄີແມ່ນຕ້ອງໄດ້ສະຫນອງຂໍ້ມູນກ່ຽວກັບມາດຕະການທີ່ໄດ້ປະຕິບັດເພື່ອຈັດຕັ້ງປະຕິບັດຕາມຄຳແນະນຳຂອງຂະບວນການທົບທວນກໍ່ຄືກ່ຽວກັບການພັດທະນາອື່ນໆ. ໃນນອກຈາກນັ້ນ, ຕ້ອງສະໜອງຂໍ້ມູນທີ່ອັບເດດໃໝ່ໆ ເປັນປະຈຳກ່ຽວກັບການຈັດຕັ້ງປະຕິບັດແລ້ວສົ່ງໃຫ້ສະພາສິດທິມະນຸດພາຍໃຕ້ຂໍ້ກຳນົດທີ 6 ຂອງ UPR. ທັງລັດພາຄີແລະອົງ ການ NGOs ອາດຈະອັບເດດຂໍ້ມູນນັ້ນຜ່ານທາງບົດລາຍງານຊົ່ວຄາວ, ລາຍງານທາງປາກເປົ່າ ແລະ ເປັນລາຍລັກອັກສອນກໍ່ໄດ້.

**ການລາຍງານໃຫ້ແກ່ສະພາສິດທິມະນຸດກ່ຽວກັບການຈັດຕັ້ງປະຕິບັດຕາມຄຳແນະນຳຂອງ UPR ໃນປະເທດໂຄລຳເບຍ**

ຄະນະກຳມາທິການກົດໝາຍໂຄລຳເບຍໄດ້ມີການປັບປຸງຂໍ້ມູນເປັນປະຈຳທີ່ລາຍງານໃຫ້ແກ່ສະພາສິດທິມະນຸດໃນລະຫວ່າງການສົນທະນາທົ່ວໄປພາຍໃຕ້ຂໍ້ກຳນົດທີ່ 6 ຂອງ UPR. ໂດຍຜ່ານການປັບປຸງເຫຼົ່ານີ້, ຄະນະກຳມາທິການກົດໝາຍໂຄລຳເບຍໄດ້ໃຫ້ຂໍ້ມູນກ່ຽວກັບຄວາມຄືບຫນ້າຂອງລັດຖະບານໃນການຈັດຕັ້ງປະຕິບັດຂໍ້ສະເຫນີແນະຂອງ UPR.

***ພາກປະຊາສັງຄົມຈະມີສ່ວນຮ່ວມໄດ້ແນວໃດ?***

- ໃນເວລາທີ່ສົ່ງຂໍ້ມູນຂ່າວສານເພື່ອຈະປະກອບໃສ່ບົດສະຫຼຸບລາຍງານຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ, ມັນເປັນສິ່ງສຳຄັນທີ່ຈະຕ້ອງເອົາຜົນການວິເຄາະກ່ຽວກັບວິທີການປະຕິບັດຫຼືຍັງບໍ່ທັນໄດ້ປະຕິບັດຂອງລັດພາຄີຕາມຂໍ້ສະເຫນີແນະຈາກການທົບທວນຮອບວຽນຄັ້ງທຳອິດທີ່ຜ່ານມາໃສ່ນຳ.
- ສະມາຄົມພາກປະຊາສັງຄົມອາດແຈ້ງໃຫ້ລັດທີ່ຖືກທົບທວນໃຫ້ຊາບເຖິງຜົນການວິເຄາະຄວາມຄືບໜ້າການຈັດຕັ້ງປະຕິບັດຕາມຄຳແນະນຳຂອງຂະບວນການທົບທວນໃຫ້ແກ່ລັດພາຄີຮັບຊາບໂດຍສະເພາະແມ່ນບັນດາຄຳແນະນຳໃນໄລຍະທຳອິດທີ່ຜ່ານມາ.
- ອົງການ NGO ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ອາດລາຍງານເປັນລາຍລັກອັກສອນແລະລາຍງານປາກເປົ່າໃຫ້ແກ່ສະພາສິດທິມະນຸດພາຍໃຕ້ຂໍ້ກຳນົດທີ 6 ເພື່ອເປັນການອັບເດດກ່ຽວກັບຄວາມຄືບຫນ້າແລະສິ່ງທ້າທາຍທີ່ມີໃນການຈັດຕັ້ງປະຕິບັດຕາມຂໍ້ສະເຫນີແນະຂອງ UPR.

ສຳລັບຄູ່ມືກ່ຽວກັບການມີສ່ວນຮ່ວມຂອງພາກປະຊາສັງຄົມກັບອົງກອນທີ່ກ່າວມານີ້ແມ່ນສາມາດສຶກສາຕື່ມໄດ້ທີ່ຄູ່ມືຂອງ OHCHR ສຳລັບພາກປະຊາສັງຄົມ - ການເຮັດວຽກກັບໂຄງການສດທິມະນຸດແຫ່ງສະຫະປະຊາຊາດແລະຄູ່ມືຝຶກຫັດກ່ຽວກັບຂະບວນການພິເສດ.[28]

[28] www.ohchr.org/EN/AboutUs/Pages/CivilSociety.aspx

**ເຄື່ອງມືການຕິດຕາມຂອງ UPR**

ສູນຂໍ້ມູນຂອງອົງການ NGO ແລະ UPRໄດ້ພັດທະນາເຄື່ອງມືເພື່ອຄວາມສະດວກ, ພະໜັບສະໜູນແລະຕິດຕາມກວດກາການຈັດຕັ້ງປະຕິບັດຕາມຂໍ້ສະເໜີແນະຂອງ UPR. ໂດຍສະເພາະແມ່ນ:

- ໂຄງການຕິດຕາມທົບທວນການຈັດຕັ້ງປະຕິບັດຕາມຄຳແນະນຳພາຍຫລັງຄົບຮອບສອງປີຫຼັງຈາກວົງຈອນການທົບທວນຄັ້ງທຳອິດ (ການປະເມີນໄລຍະກາງ) ແລະ ປຽບທຽບລະຫວ່າງຂໍ້ສະເໜີແນະທີ່ໃຫ້ໄວ້ແລະຄຳໝັ້ນສັນຍາທີ່ຈະດຳເນີນຕາມຈາກຜົນທົບທວນຄັ້ງທຳອິດທີ່ຜ່ານມານັ້ນວ່າມີຄວາມຄືບໜ້າໄປຮອດໃສອີງຕາມຂໍ້ມູນໃນບົດລາຍງານແຫ່ງຊາດຂອງລັດທີ່ກ່ຽວຂ້ອງທີ່ສົ່ງມາເພື່ອການທົບທວນຄັ້ງຕໍ່ໄປຂອງ UPR .
- ການສຶກສາກ່ຽວກັບພື້ນທາງໃນກາຈັດຕັ້ງປະຕິບັດ, ທີ່ໄດ້ວິເຄາະຂໍ້ມູນທີ່ໄດ້ລວບລວມໂດຍໃຊ້ວິທີການທົບທວນການຈັດຕັ້ງປະຕິບັດໃນຈຳນວນ 3,294 ຂໍ້ສະເໜີແນະຈາກ 6.542 ແຫ່ງຈາກ 66 ປະເທດ.
- ລະບຽບການຕິດຕາມກວດກາສຳລັບພາກປະຊາສັງຄົມແມ່ນມີຫ້າຢ່າງ: 1. ເປີດເຜີຍຂໍ້ສະເໜີແນະຂອງ UPR ແລະ ຄຳໝັ້ນສັນຍາຂອງລັດທີ່ກ່ຽວຂ້ອງ; 2. ວາງແຜນການຈັດຕັ້ງປະຕິບັດ; 3 ມີສ່ວນຮ່ວມໃນປຶກສາຫາລືກັບລັດທີ່ຖືກທົບທວນເພື່ອການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ; 4 ຕິດຕາມກວດກາການຈັດຕັ້ງປະຕິບັດ; ແລະ 5 ລາຍງານກ່ຽວກັບການຈັດຕັ້ງປະຕິບັດ..[29]

ອົງການ Organisation internationale de la Francophonie ໄດ້ຈັດພິມຄູ່ມືການຝຶກຫັດກ່ຽວກັບການກາຈັດຕັ້ງປະຕິບັດຕາມຂໍ້ສະເໜີແນະຂອງ UPR ແລະ ຕາມຄຳໝັ້ນສັນຍາຂອງລັດທີ່ໃຫ້ໄວ້. ວັດຖຸປະສົງຕົ້ນຕໍກໍ່ແມ່ນແນໃສ່ການສະໜັບສະໜູນໃຫ້ແກ່ລັດ, ແຕ່ວ່າຄູ່ມືນີ້ຍັງມີປະໂຫຍດສຳລັບພາກສ່ວນທີ່ກ່ຽວຂ້ອງຕ່າງໆນຳ, ເຊິ່ງລວມມີພາກປະຊາສັງຄົມທີ່ມີຄວາມສາມາດເປັນຄູ່ຮ່ວມງານຂອງລັດໃນການຕິດຕາມກວດກາແລະການຈັດຕັ້ງປະຕິບັດ. ຄູ່ມືຍັງໄດ້ສະເໜີໃຫ້ດຳເນີນການຕິດຕາມການຈັດຕັ້ງປະຕິບັດໂດຍຜ່ານແຜນງານໃນ 10 ຂັ້ນຕອນຄື:

1. ລວບລວມຂໍ້ມູນທີ່ກ່ຽວຂ້ອງ.
2. ຈັດຂໍ້ມູນເຂົ້າເປັນກຸ່ມ.
3. ກຳນົດວິທີການປະຕິບັດແລະຜົນທີ່ເກີດຈາກຄຳແນະນຳ.
4. ກຳນົດມາດຕະການການປະຕິບັດ.
5. ຮັບຮອງເອົາວິທີການປະສົມປະສານສຳລັບແຕ່ລະຂະແໜງການ.
6. ມອບໝາຍຄວາມຮັບຜິດຊອບເພື່ອຈັດຕັ້ງປະຕິບັດຢູ່ໃນລະດັບຊາດ.
7. ກຳນົດບັນດາຄູ່ຮ່ວມໃນການຈັດຕັ້ງປະຕິບັດໃນລະດັບຊາດ.
8. ກຳນົດໄລຍະເວລາສຳລັບການຈັດຕັ້ງປະຕິບັດ.
9. ກຳນົດການສ້າງຄວາມອາດສາມາດແລະຄວາມຕ້ອງການການຊ່ວຍເຫຼືອດ້ານວິຊາການແລະບັນດາຄູ່ຮ່ວມໃນການຈັດຕັ້ງປະຕິບັດຢູ່ໃນລະດັບສາກົນ.
10. ພັດທະນາຍຸດທະສາດການຕິດຕາມກວດກາແລະການປະເມີນຜົນສຳລັບການຈັດຕັ້ງປະຕິບັດ.[30]

[30] www.upr-info.org/followup/

[29] www.francophonie.org

### 5.5. ການດໍາເນີນການແບບລວມຕົວ

ຢູ່ໃນພາກນີ້,
ຂະບວນການຈັດຕັ້ງປະຕິບັດທີ່ໄດ້ຮັບການພັດທະນາໂດຍກົນໄກຕ່າງໆແມ່ນໄດ້ຖືກນໍາສະເໜີແບບແຍກກັນເນື່ອງຈາກວ່າແຕ່ລະຢ່າງ ນັ້ນແມ່ນມີຈຸດເດັ່ນຂອງກົນໄກໃຜລາວ, ເຖິງແມ່ນວ່າມີຄວາມຄ້າຍຄືກັນກໍຕາມ. ເຖິງຢ່າງໃດກໍ່ດີ
ມັນເປັນສິ່ງສໍາຄັນທີ່ຈະກ່າວຊໍ້າອີກຄັ້ງວ່າການຕິດຕາມກວດການັ້ນຈະມີປະສິດທິຜົນຫລາຍຂຶ້ນຖ້າວ່າໄດ້ດໍາເນີນການແບບມີສ່ວນຮ່ວມ ເຖິງວ່າຄໍາແນະນໍາຂອງກົນໄກສິດທິມະນຸດນັ້ນແມ່ນມີຄວາມແຕກຕ່າງກັນກໍ່ຕາມ,
ການມີຮ່ວມມືໃນການຕິດຕາມແມ່ນສາມາດເພີ່ມສັກຍະພາບໃຫ້ແກ່ການຈັດຕັ້ງປະຕິບັດໄດ້. ເບິ່ງພາກທີ 3 ຂອງຄູ່ມືນີ້.

### 5.6. ການຖືກປອງຮ້າຍ

ການຖືກປອງຮ້າຍຕໍ່ບຸກຄົນແລະກຸ່ມຄົນທີ່ເຂົາເຈົ້າສະແຫວງຫາການຮ່ວມມືຫລືໄດ້ຮັບການຮ່ວມມືກັບອົງການ ສປຊ, ຜູ້ຕາງໜ້າ ສປຊ ແລະ ກົນໄກສິດທິມະນຸດແມ່ນຖືວ່າເປັນການລະເມີດຕໍ່ສິດທິມະນຸດ.
ການຖືກປອງຮ້າຍອາດຈະເກີດຂຶ້ນໃນເວລາທີ່ພາກປະຊາສັງຄົມໄດ້ຊອກຫາການຮ່ວມມືກັບ ສປຊ, ແລະ
ກົນໄກສິດທິມະນຸດເພື່ອດໍາເນີນການຕິດຕາມກວດກາຕ່າງໆ.

ມະຕິຂອງສະພາສິດທິມະນຸດເລກທີ 12/2
ໄດ້ມອບໝາຍໜ້າທີ່ໃຫ້ເລຂາທິການໃຫຍ່ເພື່ອສົ່ງບົດລາຍງານປະຈໍາປີໃຫ້ແກ່ສະພາ,
ໃນບົດລາຍງານຕ້ອງປະກອບມີບົດສະຫລຸບລວມແລະຜົນການວິເຄາະກ່ຽວກັບຂະບວນການປອງຮ້າຍຕໍ່ບຸກຄົນທີ່ຮ່ວມມືກັບກົນໄກສິດ ທິມະນຸດ ສປຊ, ກໍ່ຄືກ່ຽວກັບຂໍ້ມະເໜີວິທີການແກ້ໄຂບັນຫາທີ່ມີການຂົ່ມຂູ່ ແລະ ປອງຮ້າຍ.[31]

ອີງຕາມຄະດີກ່ຽວກັບການຖືກປອງຮ້າຍທີ່ເກີດຈາກການຮ່ວມມືກັບສະພາສິດທິມະນຸດ,
ຂະບວນການພິເສດແລະອົງກອນສິດທິມະນຸດ, ເຊິ່ງລວມມີຂະບວນການຕິດຕາມກວດກາແລະການປະຕິບັດໜ້າທີ່,
ບົດລາຍງານອາດຈະໃສ່ລາຍລະອຽດທີ່ກ່ຽວຂ້ອງກັບການຮ່ວມມືກັບ OHCHR,
ສໍານັກງານປະຈໍາພາກສະໜາມຕ່າງໆແລະທີ່ປຶກສາສິດທິມະນຸດ, ທີມງານປະຈໍາປະເທດຂອງ ສປຊ,
ບັນດາອົງການທີ່ເຮັດວຽກດ້ານສິດທິມະນຸດໃນພາລະກິດຮັກສາສັນຕິພາບ, ແລະອື່ນໆນໍາ.
ຂໍ້ມູນການຕິດຕາມກ່ຽວກັບຄະດີທີ່ມີຢູ່ໃນບົດລາຍງານທີ່ຜ່ານມາກໍ່ແມ່ນຍັງມີຄວາມກ່ຽວຂ້ອງແລະເປັນຂໍ້ມູນສະໜັບສະໜູນໄດ້ບົດລ າຍງານຕໍ່ໄປໄດ້.

**ການຖືກປອງຮ້າຍສາມາດເກີດຂຶ້ນກັບບຸກຄົນຜູ້ທີ່:**

- ກໍາລັງຊອກຫາການຮ່ວມມືຫລືໄດ້ຮ່ວມມືກັບ ສປຊ, ກັບຜູ້ຕາງໜ້າແລະກົນໄກສິດທິມະນຸດໃນພາກສະໜາມ, ຫຼືຜູ້ທີ່ໄດ້ສະໜອງຂໍ້ມູນ ຫຼື ເປັນພະຍານໃຫ້ແກ່ອົງການທີ່ກ່າວມານີ້;
- ໄດ້ຮັບລາງວັນຕອບແທນຫຼືໄດ້ຮັບປະໂຫຍດຈາກຂະບວນການອຸປະຖໍາຂອງ ສປຊ ສໍາລັບວຽກງານປົກປ້ອງ ແລະ ສົ່ງເສີມສິດທິມະນຸດ ແລະ

---

[31] ສໍາລັບບົດລາຍງານປີ 2012 ແລະ 2011 ແມ່ນໃຫ້ເບິ່ງທີ່ A/HRC/21/18 and A/HRC/18/19.

ເສລີພາບພື້ນຖານ, ແລະ / ຫຼື ໃຫ້ຄວາມຊ່ວຍເຫລືອທາງດ້ານກົດໝາຍ ຫຼື ດ້ານອື່ນໆ;

- ສົ່ງຂໍ້ມູນຫຼືມີການສື່ສານພາຍໃຕ້ລະຂະບວນການແລະກົນໄກສິດທິມະນຸດ, ແລະ / ຫຼືມີການໃຫ້ຄວາມຊ່ວຍເຫລືອທາງດ້ານກົດໝາຍ ຫຼື ອື່ນໆໃຫ້ອົງການທີ່ວ່ານີ້;
- ເປັນພີ່ນ້ອງກັບຜູ້ຖືກເຄາະຮ້າຍຈາກການລະເມີດສິດທິມະນຸດຫລືຂອງຜູ້ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຫຼືດ້ານອື່ນໆແກ່ຜູ້ຖືກເຄາະຮ້າຍ.

ການເຜີຍແຜ່ຂໍ້ມູນກ່ຽວກັບການຖືກປອງຮ້າຍໂດຍຜ່ານບົດລາຍງານເລຂາທິການໃຫຍ່ ສປຊອາດຈະໄດ້ຮັບການປ້ອງຮ້າຍກໍ່ເປັນໄດ້. ຢ່າງໃດກໍຕາມ, ຄວາມສ່ຽງຂອງການເຜີຍແຜ່ຂໍ້ມູນແມ່ນຈະຕ້ອງໄດ້ມີຄວາມລະມັດລະວັງ. ດ້ວຍເຫດຜົນນີ້, ບົດລາຍງານທີ່ເອົາຄະດີຕ່າງໆບັນຈຸໃສ່ນັ້ນຈະຕ້ອງໄດ້ມີການຍິນຍອມຈາກບຸກຄົນທີ່ກ່ຽວຂ້ອງເສຍກ່ອນ ກ່ອນທີ່ຈະພິມເຜີຍແຜ່ສູ່ສາທາລະນະໄດ້.

ຂໍ້ມູນກ່ຽວກັບການຖືກປອງຮ້າຍແມ່ນສາມາດຕິດຕໍ່: reprisals@ohchr.org

## 6. ສາມາດສຶກສາຕື່ມໄດ້ເທິ່

OHCHR website:

**www.ohchr.org**

ເຄື່ອງມືຂອງ OHCHR ສຳລັບພາກປະຊາສັງຄົມແມ່ນ:

www.ohchr.org/EN/AboutUs/Pages/CivilSociety.aspx
ສຳລັບທຶກພາສາທາງການຂອງ ສປຊ

ດັດສະນີສິດທິມະນຸດສາກົນ:

http://uhri.ohchr.org/

ສູນບໍລິການສາກົນເພື່ອກົດໝາຍສິດທິມະນຸດແລະມະນຸດສະທຳ,

ການຈັດຕັ້ງປະຕິບັດພາຍໃນປະເທດກ່ຽວກັບຄຳແນະນຳດ້ານສິດທິມະນຸດສປຊ-

ຄູ່ມືສຳລັບການປົກປ້ອງສິດທິມະນຸດແລະການປຸກລະດົມ, ສາມາດເບິ່ງໄດ້ທີ່:

www.ishr.ch

ເຄື່ອງມືຕິດຕາມຂໍ້ມູນຂອງ UPR ແມ່ນ:

www.upr-info.org/followup

La Francophonie, ຄູ່ມືຝຶກຫັດກ່ຽວກັບຂະບວນການທົບທວນສາກົນ 2013, ແມ່ນມີໃນ:

www.francophonie.org

ຈາກຄຳຕັດສິນສູ່ຄວາມຍຸດຕິທຳ - ການປະຕິບັດຕາມຄຳຕັດສິນໃຈສິດດ້ານທິມະນຸດສາກົນແລະພາກພື້ນ, ປີ 2010, ແລະ ຈາກສິດທິໄປສູ່ການຢຽວຢາ: ໂຄງສ້າງແລະຍຸດທະສາດສຳລັບການປະຕິບັດຕາມຄຳຕັດສິນດ້ານສິດທິມະນຸດສາກົນ, 2013, ສາມາດເບິ່ງໄດ້ທີ່:

**www.opensocietyfoundations.org**

ເວບໄຊ້ພາບອອກອາກາດຂອງ ສປຊ:

**http://webtv.un.org**

ກອງປະຊຸມຂອງອົງກອນສິດທິມະນຸດ:

**www.treatybodywebcast.org**

ຄູ່ມືຝຶກຫັດກ່ຽວກັບສິດທິມະນຸດໃນສູນດູແລຄົນປ່ວຍ:

**http://health-rights.org/**

ກໍລະນີສຶກສາກ່ຽວກັບກິດຈະກຳການຕິດຕາມກວດກາໃນບົດສະຫລຸບຂອງ CRC:

www.childrightsnet.org/NGOGroup/CRC/FollowUp/

ຖານຂໍ້ມູນຂອງໜ່ວຍງານກ່ຽວກັບການກັກຂັງທີ່ບໍ່ມີເຫດຜົນ:

**www.unwgaddatabase.org/un/**

ບົດຄັດຫຍໍ້ກ່ຽວກັບເສລີພາບຂອງສາດສະໜາແລະຄວາມເຊື່ອຕ່າງໆ:

**Error! Hyperlink reference not valid.**x

ບາງອົງການ NGO ໄດ້ເຂົ້າຮ່ວມຢ່າງໃກ້ຊິດກັບກົນໄກສິດທິມະນຸດສະເພາະ. ພວກເຂົາໄດ້ອຳນວຍຄວາມສະດວກແລະສະໜັບສະໜູນການດຳເນີນງານຂອງສະມາຄົມພາກປະຊາສັງຄົມໃນດ້ານກົນໄກສິດທິມະນຸດ ແລະ ຄຳແນະນຳຕ່າງໆໄດ້. ອົງການ NGO ເຫຼົ່ານັ້ນແມ່ນ:

- ສູນສຳລັບສິດທິທາງພົນລະເຮືອນ, ການເມືອງ (CCPR Centre) ເປັນສູນສຳລັບການເຊື່ອມໂຍງສິດທິຂອງເດັກນ້ອຍໃຫ້ແກ່ CRC.
- ສະມາຄົມຄົນພິການສາກົນ (IDA) ສຳລັບ CRPD
- ຂະບວນການເຄື່ອນໄຫວສາກົນເພື່ອຕ້ານທຸກຮູບແບບຂອງການຈຳແນກເຊື້ອຊາດ (IMADR) ສຳລັບ CERD
- ສູນສຳລັບແຮງງານເຄື່ອນຍ້າຍສາກົນ (IPMWC) ສຳລັບ CMW
- ສະພາການຟື້ນຟູສາກົນສຳລັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ (IRCT) ສຳລັບ CAT
- ອົງການເຝົ້າຄອຍລະວັງເພື່ອສິດທິແມ່ຍິງສາກົນ (IWRAW) ໃນເຂດອາຊີປາຊີຟິກ ສຳລັບ CEDAW
- ຖານຂໍ້ມູນ UPR ສຳລັບ UPR

## 7. ທີ່ຢູ່ຕິດຕໍ່

ພະແນກພາກປະຊາສັງຄົງຂອງ OHCHR ສາມາດຕິດຕໍ່ໄດ້ທີ່: civilsociety@ohchr.org

ໂທລະສັບ: +41(0) 22 917 9656

ຄູ່ມືສິດທິມະນຸດຂອງ OHCHR ແລະ ຄູ່ມືຝຶກຫັດສໍາລັບພາກປະຊາສັງຄົມແມ່ນມີໃນອອນໄລນ໌ເປັນພາສາອາ ຣັບ, ຈີນ, ອັງກິດ, ຝຣັ່ງ, ລັດເຊຍແລະສະເປນ

www.ohchr.org/EN/AboutUs/Pages/CivilSociety.aspx

ລະບົບອີເມລອອນໄລຂອງພາກປະຊາສັງຄົມຈະມີຂໍ້ມູນທີ່ອັບເດດ ແລະ
ມີຄໍາແນະນໍາເປັນປະຈໍາກ່ຽວກັບພາລະບົດບາດແລະກົນໄກສິດທິມະນຸດກໍຄືຂໍ້ມູນແລະກໍານົດເວລາຂອງຄໍາຮ້ອງສະຫມັກຂໍທຶນ, ຂໍທຶນຊ່ວຍເຫຼືອລ້າ ແລະ ທຶນການສຶກສາ.
ເພື່ອສະໝັກເປັນສະມາຊິກທາງອີເມວແມ່ນສາມາດເຂົ້າເບິ່ງໃນເວບໄຊ້ຂອງພາກປະຊາສັງຄົມໄດ້ທີ່

http://goo.gl/O8snt

A Practical Guide for Civil Society
HOW TO FOLLOW UP ON UNITED NATIONS HUMAN RIGHTS RECOMMENDATIONS

Office of the High Commissioner for Human Rights
Palais des Nations
CH 1211 Geneva 10 – Switzerland
Telephone : +41 (0)22 917 90 00
Fax : +41 (0)22 917 90 08
www.ohchr.org